ມະຫາວິທະຍາໄລແຫ່ງຊາດ

ຄະນະອັກສອນສາດ

ພາກວິຊາພາສາລາວ-ສື່ສານມວນຊົນ

# ວິຊາ ວັດທະນະທຳອິນເດຍ-ວັດທະນະທຳຈີນ

( ລະບົບ 0 + 4 )

ຮຽບຮຽງໂດຍ: ບຸນໜັກ ພະລະຄອນ

ວຽງຈັນ 2013

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

## ບົດທີ 1

## ວັດທະນະທຳອິນເດຍໂດຍສັງເຂບ

ອິນເດຍເປັນປະເທດທີ່ມີດິນແດນອັນກວ້າງໃຫຍ່ໄພສານເປັນອັນດັບທີ 7 ຂອງໂລກ ແລະ ມີປະຊາກອນຫລາຍເປັນອັນດັບທີ 2 ຂອງໂລກຮອງຈາກສາທາລະນະລັດປະຊາຊົນຈີນ. ລັກສະ ນະພູມສັນຖານຂອງປະເທດກໍມີລັກສະນະເປັນຮູບສາມຫລ່ຽມ, ທາງທິດເໜືອມີສາຍພູຫິມະໄລຍາວ ຢຽດໄປທາງເໜືອປະເທດປະມານ 1600 ໄມ; ທິດໃຕ້ກໍອ້ອມຮອບໄປດ້ວຍມະຫາສະໝຸດອິນເດຍ, ທິດຕາເວັນຕົກຕິດກັບທະເລອາລັບ, ທິດຕາເວັນອອກມີອ່າວເບັງກອນ.

ສະພາບດິນຟ້າອາກາດກໍມີຄວາມແຕກຕ່າງກັນຄືກັບຢູ່ຄົນລະປະເທດ ໂດຍສະເພາະທາງ ພາກ ເໜືອ ແລະທາງພາກໃຕ້ເຊັ່ນ ເຂດທີ່ຢູ່ໃກ້ພູເຂົາຫິມະໄລມີຫິມະປົກຄຸມຢູ່ຕະຫລອດປີ ແລະ ໜາວທີ່ສຸດ, ມີບາງບ່ອນກໍຮ້ອນທີ່ສຸດຄືແຖບທະເລຊາຍທາຣ (Thar deserts), ມີບາງບ່ອນມີ ຝົນຕົກຕະຫລອດປີ ແລະບາງບ່ອນບໍ່ມີຝົນຕົກເລີຍ. ເວົ້າລວມແລ້ວ ລັກສະນະພູມສັນຖານຂອງ ອິນເດຍປຽບເໝືອນປ້ອມປ້ອງກັນອິນເດຍ ແລະຊ່ວຍໃຫ້ອິນເດຍໄດ້ສະສົມວັດທະນະທຳທີ່ເປັນ ເອກະລັກຂອງຕົນ.

ອິນເດຍມີອາລະຍະທຳຈະເລີນຮຸ່ງເຮືອງມາແຕ່ສະໄໝບູຮານ, ບໍ່ວ່າຈະເປັນອາລະຍະທຳ ພຸດທະສາສະໜາໃນລຸ່ມແມ່ນ້ຳສິນທຸ ຮວມທັງເປັນບໍ່ເກີດຂອງສາສະໜາທີ່ສຳຄັນໆຂອງໂລກອີກ ຢ່າງຫລວງຫລາຍ ແລະເປັນຕົ້ນແບບອາລະຍະທຳທີ່ດີງາມໃຫ້ກັບດິນແດນຕ່າງໆໃນທະວີບອາຊີ ແລະພູມພາກອື່ນໆ.

### 1.1 ວິຖີດຳລົງຊີວິດ

ອິນເດຍມີປະຊາກອນປະມານ 1 ພັນລ້ານຄົນ. ປະຊາກອນເຫລົ່ານີ້ມີຄວາມແຕກຕ່າງ ທາງດ້ານເຜົ່າພັນ ແລະວັດທະນະທຳ, ມີພາສາເວົ້າເຖິງ 16 ພາສາໄດ້ແກ່ ພາສາຮິນດີ, ພາສາ ອັງກິດ, ພາສາເບັງກາລີ, ພາສາອູຣາດູ ໆລໆ ນອກນັ້ນຍັງມີພາສາຖິ່ນກວ່າ 100 ພາສາ. ແຕ່ ຖືພາສາຮິນດີເປັນພາສາປະຈຳຊາດ, ຄົນອິນເດຍທີ່ໃຊ້ພາສານີ້ກວມ 30%. ຄົນອິນເດຍທີອາໄສຢູ່ ທາງພາກເໜືອ ແລະພາກໃຕ້, ນອກຈາກຈະໃຊ້ພາສາທີ່ແຕກຕ່າງກັນແລ້ວ ການແຕ່ງກາຍ ແລະ ແຕ່ງຢູ່ຄົວກິນກໍມີຄວາມແຕກຕ່າງກັນ.

ຊາວອິນເດຍຖືວ່າ ຄອບຄົວເປັນສະຖາບັນທີ່ສຳຄັນທາງສັງຄົມ. ລະບົບຄອບຄົວເປັນ ລະບົບຄອບຄົວໃຫຍ່ເຊັ່ນ ມີປູ່ຍ່າ, ພໍ່ແມ່, ລູກຫລານ ແລະເຫລັນຢູ່ຮ່ວມກັນພາຍໃນຄອບຄົວດຽວ ໂດຍທີ່ຜູ້ອາວຸໂສຂອງຝ່າຍຊາຍຈະເປັນຫົວໜ້າຄອບຄົວ. ເຖິງວ່າສັງຄົມອິນເດຍຍັງຍຶດຖືເລື່ອງ

ວັນນະຢູ່ ແຕ່ປັດຈຸບັນປາກົດວ່າ ບໍ່ຫລາຍເທົ່າກັບສະໄໝກ່ອນ. ການດຳເນີນຊີວິດຂອງຊາວອິນເດຍຈະຍຶດຖືສາສະໜາເປັນສິ່ງສຳຄັນເຊັ່ນ: ສາສະໜາຮິນດູມີປະມານ 83%, ນັບຖືສາສະໜາອິດສະລາມປະມານ 11%, ນັບຖືສາສະໜາຄຣິສປະມານ 2,5% ນອກຈາກນັ້ນແມ່ນນັບຖືສາສະໜາພຸດ, ສາສະໜາຊິກ ແລະອື່ນໆ ຮ່ວມທັງນັກບວດທີ່ນັບຖືນິກາຍຕ່າງໆອີກຢ່າງຫລວງຫລາຍ.

### 1.2 ລັກສະນະທີ່ຢູ່ອາໄສ

ລັກສະນະທີ່ຢູ່ອາໄສແມ່ນມີຄວາມແຕກຕ່າງກັນອອກໄປໃນແຕ່ລະທ້ອງຖິ່ນ. ບ້ານເຮືອນທີ່ຢູ່ໃນເມືອງແມ່ນມີລັກສະນະແອອັດ, ສ່ວນຢູ່ຊົນນະບົດແຕ່ລະພາກມີການສ້າງເຮືອນທີ່ຕ່າງກັນໄປເຊັ່ນ: ແຄວັນປັນຈາບແລະອຸດຕະຣະປະເທດ ຈະປຸກເຮືອນຢູ່ຕິດໆກັນ ຝາເຮືອນຈະຕິດຕໍ່ກັນໄປ; ສ່ວນແຄວັນເບັງກອນເຮືອນຈະຢູ່ຫ່າງກັນໂດຍໃຊ້ໄມ້ໄຜ່ສານແລ້ວໃຊ້ຕົມທາຕາມຝາເຮືອນ, ໃນບໍລິເວນໜ້າເຮືອນຈະມີນ້ຳສ້າງ, ມີຕົ້ນໄມ້ ແລະສວນຜັກຕ່າງໆ; ທາງພາກຕາເວັນຕົກສ່ຽງໃຕ້ ແລະພາກໃຕ້ ເຮືອນແຕ່ລະຫລັງຈະປຸກຢູ່ຫ່າງກັນຫລາຍ, ນິຍົມສ້າງເຮືອນດ້ວຍຫີນໃນການກໍ່ສ້າງ; ທາງພາກເໜືອເປັນເຂດພູເຂົາຈະປຸກເຮືອນຢູ່ຕາມບໍລິເວນເປີ້ນພູ ໂດຍໃຊ້ຫີນ, ຕົມ ແລະດິນຈີ່ໃນການກໍ່ສ້າງ.

### 1.3 ດ້ານອາຫານ

ອິນເດຍມີອາຫານແລະວັດທະນະທຳໃນການກິນອາຫານທີ່ແຕກຕ່າງກັນ. ຊາວຮິນດູທຸກວັນນະຈະກິນອາຫານປະເພດຜັກຕາມກົດບັນຍັດຂອງສາສະໜາ. ສ່ວນຊາວມຸສະລິມ ແລະຄຣິດສະຕຽນນິຍົມກິນຊີ້ນເປັດ, ໄກ່ ແລະແບ້ ເຊິ່ງເປັນອາຫານປະຈຳວັນ. ບໍລິເວນຮິມຝັ່ງທະເລຂອງອິນເດຍນິຍົມກິນປາຊະນິດຕ່າງໆ. ນອກຈາກນີ້ ຍັງນຳເອົາສາລີມາເຮັດເປັນເຂົ້າ ຫລືໂລຕີ ເຊິ່ງເປັນອາຫານທາງພາກເໜືອ ແລະພາກຕາເວັນຕົກ, ສ່ວນທາງພາກຕາເວັນອອກແລະພາກໃຕ້ນິຍົມບໍລິໂພກເຂົ້າ ເຊິ່ງຫຸງດ້ວຍເນີຍສົດໆ ແລະໃສ່ເຄື່ອງເທດລົງໄປນຳ.

### 1.4 ດ້ານວັນນະຄະດີ

ອິນເດຍເປັນປະເທດທີ່ມີວັນນະຄະດີເກົ່າແກ່ທີ່ສຸດໃນໂລກ. ວັນນະຄະດີອິນເດຍເກີດຂຶ້ນປະມານ 1500 ປີກ່ອນ ຄສ, ແບ່ງອອກເປັນສອງກຸ່ມໃຫຍ່ຄື: ວັນນະຄະດີສັນສະກິດ ແລະວັນນະຄະດີບາລີ.

ວັນນະຄະດີສັນສະກິດເປັນວັນນະຄະດີທີ່ລິດຈະນາດ້ວຍພາສາສັນສະກິດ, ອັນເປັນພາສາໃນຕະກູນອິນໂດຢູໂຣປຽນເຊິ່ງເປັນພາສາຂອງພວກອາລະຍັນທີ່ເຂົ້າມາອິນເດຍ ເມື່ອປະມານ 4000 ປີມາແລ້ວ. ວັນນະຄະດີເລື່ອງທຳອິດກໍຄືຄຳພີພະເວດ, ເປັນວັນນະຄະດີເລົ່າປາກຕໍ່ປາກ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຜູ້ທີ່ລິດຈະນາຂຶ້ນແມ່ນພາມ (ແຕ່ຊາວອິນເດຍສ່ວນຫລາຍເຊື່ອວ່າ ທີ່ຈິ່ງແລ້ວຄໍາພີພະເວດເປັນຄໍາ ໄຫວ້ວອນຂອງພະເຈົ້າ ຜ່ານຈາກການທ່ອງຈໍາຂອງພາມເທົ່ານັ້ນ) ເປັນຜູ້ເສີມເຕີມແຕ່ງຄໍາພີເລື່ອງ ນີ້ໃຫ້ສົມບູນຂຶ້ນ.

ວັນນະຄະດີສັນສະກິດທີ່ເວົ້າເຖິງສາສະໜາແທ້ໆມີຫລາຍເລື່ອງ ແຕ່ເລື່ອງທີ່ສໍາຄັນທີ່ສຸດຄື ເລື່ອງພະລັກພະລາມ, ທັງສອງເລື່ອງເປັນເລື່ອງທີ່ດີເດັ່ນຂອງຊາວອິນໂດ-ອາລະຍັນ. ເລື່ອງພະ ລັກພະລາມເປັນເລື່ອງທີ່ກ່ຽວກັບການຕໍ່ສູ້ຂອງພະລັກກັບພະລາມ. ສ່ວນເລື່ອງພະລະຕະເປັນເລື່ອງ ກ່ຽວກັບສົງຄາມກາງເມືອງຄັ້ງຍິ່ງໃຫຍ່ຢູ່ທີ່ທົ່ງກຸຣຸເສດ (ໃກ້ເມືອງແດນຮີ)ລະຫວ່າງສອງລາຊະ ຕະກູນຄື: ປານທົບ ແລະເກົາລົບ ເຊິ່ງສືບເຊື້ອສາຍມາຈາກບັນພະບຸລຸດດຽວກັນຄື ພະພະລະຕະ ເຊິ່ງເປັນຕົ້ນຕະກູນຂອງພວກອິນໂດ-ອາລະຍັນ. ເຊິ່ງວັນນະຄະດີທັງສອງເລື່ອງນີ້ມີບົດບາດ ແລະ ອິດທິພົນຢ່າງຫລວງຫລາຍຕໍ່ວັນນະກໍາໃນດິນແດນຕ່າງໆ. ຊາວອິນເດຍບູຮານຍັງນິຍົມນິທານ ຫລາຍ ເລື່ອງທີ່ສໍາຄັນຄື ເລື່ອງນາງຕັນໄຕ, ນິທານເລື່ອງນີ້ເກີດຂຶ້ນເມື່ອປະມານສະຕະວັດທີ່ 2 ຫລື 3 ໂດຍມີຈຸດປະສົງເພື່ອ ສຶກສາອົບຮົມລູກ.

ວັນນະຄະດີບາລີແມ່ນກໍາເນີດມາທາງພາກເໜືອຂອງອິນເດຍ, ສ່ວນຫລາຍເປັນຄໍາພີໃນ ສາສະໜາພຸດ,ເລື່ອງທີ່ສໍາຄັນທີ່ສຸດຄື ຄໍາພີພະໄຕປິດົກ, ປະກອບມີສາມໝວດຄື ວິໄນປິດົກ, ສຸ ຕັນຕະປິດົກ (ແມ່ນເລື່ອງກ່ຽວກັບພຸດທະປະຫວັດແລະນິທານຊາດົກ ທີ່ເປັນເລື່ອງກ່ຽວອະດີດຊາດ ຂອງພະພຸດທະເຈົ້າສະໄໝທີ່ພະອົງເປັນມະນຸດ) ແລະອະພິທໍາປິດົກ.

### 1.5 ການແຕ່ງດອງ

ການແຕ່ງດອງແມ່ນພໍ່ແມ່ເຈົ້າສາວເປັນຜູ້ຊອກໃຫ້, ຄອບຄົວໃດມີລູກສາວພໍ່ແມ່ຕ້ອງໄດ້ ຊອກຫາເງິນທອງໃຫ້ລູກສາວຕິດຕົວໃນເວລາແຕ່ງດອງ. ຖ້າຄອບຄົວໃດຍາກຈົນ ພໍ່ແມ່ຍອມເປັນ ໜີ້ ເພື່ອໃຫ້ລູກໄດ້ແຕ່ງດອງ, ຮ້າຍແຮງໄປກວ່ານັ້ນແມ່ນເອົາລູກສາວໄປເປັນທາດຮັບໃຊ້. ຜູ້ຍິງ ທາງພາກເໜືອຕ້ອງແຕ່ງດອງກັບຄົນວັນນະດຽວກັນ ແຕ່ຕ້ອງຄົນລະເຊື້ອ ຖ້າຜູ້ໃດຝ່າຝືນຕ້ອງມາ ຕົກຢູ່ໃນວັນນະສູດ. ຕົວຢ່າງ ວັນນະກະສັດແຕ່ງດອງກັບວັນນະພາມຕ້ອງຕົກມາຢູ່ໃນວັນນະສູດ. ຜູ້ຍິງທາງພາກໃຕ້ສາມາດແຕ່ງດອງກັບຍາດພີ່ນ້ອງທາງພໍ່ຫລືແມ່ໄດ້.

### 1.6 ພິທີສົ່ງສະການ

ເມື່ອມີຜູ້ເຈັບປ່ວຍໜັກ ແລະຄິດວ່າຈະບໍ່ລອດແລ້ວ, ຍາດພີ່ນ້ອງກໍຈະເຊີນໝໍພາມມາເທດ ໃຫ້ຜູ້ປ່ວຍຟັງ ແລະຖວາຍງົວແມ່ໃຫ້ແກ່ໝໍພາມ. ພ້ອມນັ້ນກໍເອົາຮູບພະນາລາຍມາວາງໄວ້ໃກ້ຜູ້ ປ່ວຍ ເພື່ອໃຫ້ຜູ້ປ່ວຍມີຈິດໃຈໃກ້ຊິດກັບເທບພະເຈົ້າ. ການເຮັດແນວນີ້ກໍເພື່ອຊໍາລະລ້າງມົນທິນໃຫ້ ແກ່ຜູ້ປ່ວຍ ແລະເວລາຕາຍໄປ ກໍເຊື່ອວ່າຈະໄດ້ໄປເກີດໃນສະຫວັນ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ສົບຄົນຕາຍໂດຍທົ່ວໄປ ສ່ວນຫຼາຍຈະຕ້ອງນຳໄປເຜົາໄຟ, ຍົກເວັ້ນສົບເດັກນ້ອຍ, ສົບພະ ແລະສົບແມ່ມານ ເພາະຖືວ່າ ສົບເຫຼົ່ານີ້ເປັນສົບບໍລິສຸດ. ສ່ວນສົບທີ່ນຳໄປເຜົານັ້ນກໍເຊື່ອວ່າ ໄຟ ຈະຊຳລະບາບໃຫ້ບໍລິສຸດ, ກ່ອນທີ່ຈະນຳສົບໄປເຜົາໄຟນັ້ນ ກໍຈະມີການອາບນ້ຳສົບ, ແຕ່ງຕົວສົບ ດ້ວຍເສື້ອຜ້າໃໝ່ ມີການຈັດເຂົ້າປາອາຫານໃສ່ກວຍໃຫ້ວິນຍານຜູ້ຕາຍ, ແລ້ວກໍຫໍ່ສົບດ້ວຍຜ້າໃໝ່. ສົບຜູ້ຍິງທີ່ມີສາມີແລ້ວຈະຫໍ່ດ້ວຍຜ້າສີແດງ, ນອກນັ້ນແມ່ນຫໍ່ດ້ວຍຜ້າສີຂາວ ແລ້ວເອົາຫໍ່ສົບໄປມັດ ໃສ່ຄານຫາມ ໂດຍມີຜູ້ຊາຍສີ່ຄົນຫາມຄົນລະສົ້ນ. ຜູ້ທີ່ໄປສົ່ງສະການຍ່າງເປັນຂະບວນຕາມໄປນຳ ຫຼັງ, ບາງເທື່ອກໍມີການບັນເລງດົນຕີໄປຕາມຂະບວນທີ່ເຄື່ອນສົບໄປນັ້ນ, ມີການສວດເປັນຈັ່ງຫວະ ຊ້ຳໆກັນ. ແມ່ນ້ຳຄົງຄາເປັນສະຖານທີ່ເຜົາສົບທີ່ໃຫຍ່ທີ່ສຸດ ໂດຍສະເພາະທີ່ເມືອງພາລານະສີ. ເມື່ອໄປເຖິງແຄມນ້ຳກໍຈະນຳເອົາສົບລົງໄປຈຸ່ມນ້ຳກ່ອນແລ້ວຈຶ່ງເອົາສົບຂຶ້ນກອງຟອນແລ້ວກໍຈູດໄຟ ເຜົາ, ຫຼັງຈາກນັ້ນກໍເກັບເອົາກະດູກໄປໂຮຍລົງແມ່ນ້ຳ. ນັບເປັນເວລາສາມພັນປີແລ້ວ ໄຟທີ່ເມືອງ ພາລານະສີບໍ່ເຄີຍດັບ ເພາະມີການເຜົາສົບຕະຫຼອດ 24 ຊົ່ວໂມງ ແຕ່ລະມື້ມີສົບມາລຽນຄິວເຂົ້າ ແຖວ ຖ້າເຜົາສົບສະເລ່ຍວັນໜຶ່ງໆບໍ່ຕ່ຳກວ່າ 60 ສົບ (ອ້າງໃນສາສະໜາປຽບທຽບ, ໜ້າ 154).

ເວົ້າລວມແລ້ວອິນເດຍເປັນປະເທດທີ່ມີເນື້ອທີ່ກວ້າງໃຫຍ່ໄພສານ ແລະມີປະຊາກອນອາໄສຢູ່ ຢ່າງຫຼວງ ຫຼາຍ ແລະແຕກຕ່າງກັນດ້ານເຜົ່າພັນ, ສາສະໜາ ແລະພາສາ. ຍ້ອນມີປະຊາກອນ ຫລາຍເຜົ່າປະກອບກັບມີເນື້ອທີ່ກວ້າງຂວາງຈຶ່ງສົ່ງຜົນໃຫ້ປະຊາກອນອິນເດຍມີວິຖີການດຳລົງຊີວິດ , ການແຕ່ງອາຫານການກິນ ແລະເຂົາເຈົ້າຍູທ່າງສ້າງສົມອາລະຍະທຳ ເຊິ່ງສາມາດເປັນແມ່ແບບ ໃຫ້ແກ່ອາລະຍະທຳໃນເຂດອາຊີກໍຄືຊາວໂລກທັງຫຼາຍ.

**ຄຳຖາມ:** ຈົ່ງອະທິບາຍເຖິງລັກສະນະພູມສັນຖານຂອງອິນເດຍໂດຍຫຍໍ້ ພ້ອມທັງແຕ້ມ ແຜນທີ່ ແລະ ບອກຂອບເຂດຂອງຊາຍແດນຂອງແຕ່ລະດ້ານຕິດກັບປະເທດໃດ ?

ວັດທະ:ນະທຳ ອິນເດຍ

1. ເພີ
2. ພີ
3. ໄທ ສັກກີ

ສະໄໝບູຮານ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

# ບົດທີ 2

# ອາລະຍະທຳອິນເດຍສະໄໝບູຮານ

## 2.1 ອາລະຍະທຳລຸ່ມແມ່ນ້ຳສິນທຸ

ອາລະຍະທຳລຸ່ມແມ່ນ້ຳສິນທຸເປັນອາລະຍະທຳຍຸກທຳອິດຂອງອິນເດຍ, ຜູ້ສ້າງອາລະຍະທຳສິນທຸ ສັນນິຖານວ່າແມ່ນຊົນເຜົ່າດຣາວິດຽນ. ເມື່ອປະມານປີ 2500-1500 ກ່ອນ ຄສ ເປັນອາລະຍະທຳແຫ່ງຍຸກໂລຫະທີ່ມີລັກສະນະອາລະຍະທຳເມືອງ. ປັດຈຸບັນມີການຂຸດຄົ້ນເມືອງຮ້າງຫລາຍເມືອງ, ເມືອງທີ່ສຳຄັນຄືເມືອງໂມເຫນໂຈ-ດາໂຣ (Mohenjo-Daro) ແລະເມືອງຮາຣັບປາ (Harappa). ຈາກການຂຸດຄົ້ນທາງບູຮານຄະດີທີ່ເມືອງຮາຣັບປາ ປາກົດວ່າເມືອງນີ້ມີຄວາມຈະເລີນຫລາຍທາງດ້ານການວາງຜັງເມືອງເຊັ່ນ ມີຖະໜົນຫົນທາງ ແລະທາງຮ່ອມຕັດຜ່ານທັງສອງຂ້າງທາງ, ມີເຮືອນຕຶກເຮືອນກໍ່ຕັ້ງຍາຍກັນຢູ່ຢ່າງເປັນລະບຽບຮຽບຮ້ອຍ, ຢູ່ຕາມສາຍທາງຕ່າງໆມີຮ່ອງລະບາຍນ້ຳທີ່ກໍ່ດ້ວຍດິນສຳລັບຮອງຮັບນ້ຳເປື້ອນຈາກບ້ານເຮືອນ. ມີຕົວອັກສອນພາບໃຊ້, ມີເຄື່ອງປັ້ນດິນເຜົາທີ່ເຮັດດ້ວຍໂລຫະ. ການຂຸດຄົ້ນເມືອງດັ່ງກ່າວສະທ້ອນໃຫ້ເຫັນການດຳລົງຊີວິດ ແລະການທຳມາຫາກິນຂອງຄົນສະໄໝນັ້ນໄດ້ດີສົມຄວນ.

### 2.1.1 ດ້ານເສດຖະກິດ-ສັງຄົມ

#### 1) ດ້ານເສດຖະກິດຂອງສິນທຸ

ເສດຖະກິດຂອງອາລະຍະທຳສິນທຸທີ່ເປັນພື້ນຖານແມ່ນການກະສິກຳ, ກຳລັງແຮງການຜະລິດແມ່ນຄົນຊົນນະບົດທີ່ຢູ່ອ້ອມຕົວເມືອງເປັນຜູ້ຜະລິດສະບຽງອາຫານ, ມີເຕັກໂນໂລຢີທີ່ທັນສະໄໝເພື່ອນຳໃຊ້ເຂົ້າໃນການຜະລິດ ຈຶ່ງສາມາດຜະລິດອາຫານໄດ້ພຽງພໍໄດ້ຕາມຄວາມຕ້ອງການຂອງຄົນໃນເມືອງ. ຈາກຫລັກຖານທີ່ຂຸດພົບຊາກອາຄານຂະໜາດໃຫຍ່ ສັນນິຖານວ່າ ເປັນສາງມ້ຽນເຂົ້າທີ່ໄດ້ເກັບພາສີຈາກຊາວນາ. ມີສາລີ, ຖົ່ວ, ງາ ເຊິ່ງເຄື່ອງປູກເຫຼົ່ານີ້ເປັນອາຫານຫລັກຂອງຄົນອິນເດຍບູຮານ ເພາະນັກບູຮານຄະດີໄດ້ພົບແກ່ນພືນລະປູກເຫຼົ່ານີ້. ນອກຈາກພືດພັນແລ້ວ ເຂົາເຈົ້າຍັງໄດ້ພົບກະດູກສັດນານາຊະນິດເຮ່ຍກະຈາຍຢູ່ທົ່ວໄປເຊັ່ນ ກະດູກງົວ, ຄວາຍ, ແກະ, ແບ້,ອູດ, ເປືອກຫອຍ, ກະດອງເຕົ່າ, ເປັດ, ໄກ່ ແລະມ້າ. ຊາກກະດູກສັດທີ່ເຫຼືອຢູ່ນັ້ນເປັນພະຍານບອກວ່າ ຊາວອິນເດຍຍຸກນັ້ນຮູ້ຈັກລ້ຽງສັດແລ້ວ. ນອກນັ້ນຍັງເຫັນທອງສ□າລິດ ແລະເຄື່ອງປະດັບ.

ນອກຈາກກະສິກຳແລ້ວ, ການຄ້າຂາຍພາຍໃນປະເທດ ແລະຄ້າຂາຍກັບຕ່າງແດນ ກໍຈະເລີນພໍສົມຄວນ ເພາະພົບເຫັນວັດຖຸທີ່ມາຈາກຕ່າງແດນຫລາຍຊະນິດເຊັ່ນ: ຫີນຊະນິດຕ່າງໆ,

ຫອຍສັງ ແມ່ນມາຈາກພາກໃຕ້ອິນເດຍ; ເງິນ ແລະເພັດນິນຈິນດາ (ອັນຍະມະນີ) ມາຈາກເປີເຊຍ ແລະອັຟການີສະຖານ; ທອງແດງອາດມາຈາກເປີເຊຍ; ຫຍົກມາຈາກຕິເບດ ຫລືອາຊີກາງ. ນອກນັ້ນ ຍັງມີການຄ້າຂາຍ ແລະແລກປ່ຽນສິນຄ້າກັບເມໂສໂປເຕເມຍ ເຊິ່ງເຫັນໄດ້ຈາກວັດຖຸທີ່ຄົ້ນພົບ. ການຂົນສົ່ງສິນຄ້າມີທັງທາງບົກ ແລະທາງທະເລ.

### 2) ດ້ານສັງຄົມສິນທຸ

ສັງຄົມຂອງສິນທຸເປັນສັງຄົມທີ່ງຽບສະຫງົບ ເພາະບໍ່ປາກົດເຫັນອາວຸດໃນບໍລິເວນທີ່ຂຸດຄົ້ນທັງໆທີ່ຊາວສິນທຸຮູ້ຈັກໃຊ້ໂລຫະເຊັ່ນ ທອງຄຳ ແລະທອງສຳລິດມາຜະລິດເປັນເຄື່ອງໃຊ້ພາຍໃນບ້ານ. ນັກປະຫວັດສາດສັນນິຖານວ່າ ຜູ້ປົກຄອງສັງຄົມສິນທຸຄົງຈະເປັນພວກພະ ເຊິ່ງເປັນຜູ້ທຳໜ້າທີ່ທາງສາສະໜາ. ຈາກການຂຸດພົບຫໍຄອຍຂະໜາດໃຫຍ່, ພາຍໃນຫໍຄອຍນັ້ນມີສະອາບນ້ຳສາທາລະນະ ເຊິ່ງສັນນິຖານວ່າ ເປັນສະຖານທີ່ປະກອບພິທີກຳທາງສາສະໜາ ແລະເປັນທີ່ຢູ່ຂອງນັກບວດ ເຊິ່ງເປັນຊົນຊັ້ນປົກຄອງ. ສ່ວນເຮືອນທົ່ວໆໄປກໍ່ດ້ວຍດິນຈີ່ມີເນື້ອທີ່ເທົ່າໆກັນ, ສະແດງວ່າປະຊາຊົນທີ່ຢູ່ໃນເມືອງມີຖານະ ແລະມີຊີວິດຄວາມເປັນຢູ່ທີ່ສະດວກສະບາຍ. ບາງຄອບຄົວມີຖານະຮັ່ງມີຫລາຍເຫັນໄດ້ຈາກການສ້າງເຮືອນຂະໜາດໃຫຍ່ເປັນພິເສດ.

ເວົ້າລວມແລ້ວ, ສະພາບສັງຄົມສິນທຸເປັນສັງຄົມທີ່ມີຊົນຊັ້ນ ແຕ່ກໍມີສະຫງົບ. ຄວາມເປັນຢູ່ຄ້າຍຄືກັນກັບຊາວອິນເດຍໃນແຄວັນປັນຈາບໃນປັດຈຸບັນເຊັ່ນ ການນຸ່ງຖືສ່ວນຫລາຍຈະເປັນຝ້າຍ ແລະແພຂົນສັດເປັນບາງຄັ້ງຄາວ. ຈາກຫຼັກຖານທີ່ຄົ້ນພົບແຕ່ລະບ້ານມີເຄື່ອງເຂນຝ້າຍ ສະແດງວ່າ ຄົນຍຸກນີ້ຮູ້ຈັກເຮັດເສັ້ນຝ້າຍມາຜະລິດເປັນເຄື່ອງນຸ່ງ. ສຳລັບປະຊາຊົນທີ່ຢູ່ຊົນນະບົດອ້ອມໆເມືອງແມ່ນບໍ່ພົບຫລັກຖານວ່າຊີວິດການເປັນຢູ່ເຂົາເຈົ້າເປັນແນວໃດ.

## 2.2 ມໍລະດົກຕ່າງໆທີ່ອາລະຍະທຳລຸ່ມສິນທຸເຫຼືອໄວ້ໃນອິນເດຍ

### 2.2.1 ມໍລະດົກທາງສາສະໜາ

ຈາກການຂຸດພົບກາຈ້ຳຕ່າງໆທີ່ຊຸມຊົນລຸ່ມນ້ຳສິນທຸ ມີກາຈ້ຳທີ່ສຳຄັນເປັນກາຈ້ຳຮູບເທວະດານັ່ງຢູ່ເຄິ່ງກາງ ແລະອ້ອມຮອບດ້ວຍເສືອ, ສິງ, ກະທິງ, ແຮດ ສັນນິຖານວ່າ ເທວະດານັ້ນຄືພະສິວະ ເພາະໂດຍປົກກະຕິພະສິວະກໍໄດ້ຊື່ວ່າເປັນເທບພະເຈົ້າແຫ່ງໝູ່ສັດ (Lord of Animals ). ນອກນີ້ຍັງພົບຮູບສິວະລິງ ເຊິ່ງເປັນລັດທິໜຶ່ງໃນສາສະໜາພາມ ກາຈ້ຳດັ່ງກ່າວສະແດງໃຫ້ເຫັນວ່າ ຊຸມຊົນຊາວສິນທຸຮູ້ຈັກເຄົາລົບນັບຖືເທບພະເຈົ້າສິວະ ແລະເປັນມໍລະດົກທາງສາສະໜາໃຫ້ຊາວຮິນດູໄດ້ນັບຖືໃນປັດຈຸບັນ. ນອກຈາກນັບຖືພະເຈົ້າແລ້ວ ຍັງນັບຖືເຈົ້າແມ່ ກາລີ (Mother Goddess) ສັນນິຖານວ່າເປັນມະເຫສີຂອງເທບພະເຈົ້າຕ່າງໆ ຫຼືວ່າແມ່ທໍລະນີ ເຊິ່ງເປັນເທບພະເຈົ້າແຫ່ງຄວາມອຸດົມສົມບູນ ແລະເປັນເທບທີ່ຊາວໂລກຢູ່ໄດ້ດ້ວຍຄວາມສຸກ ເພາະມີຫຼັກທີ່ຄົ້ນພົບເປັນຮູບປັ້ນດິນເຜົາ, ເປັນຮູບເຈົ້າແມ່ມີຈຳນວນຫຼວງຫຼາຍ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຊາວສິນທຸມີການເຄົາລົບຕົ້ນໂພ ແລະຕົ້ນໄຊ ສັງເກດໄດ້ຈາກກາຈ້ຳບາງໜ່ວຍ ມີເທບພະເຈົ້ານັ່ງຢູ່ກ້ອງຕົນໄມ້( ອາດຈະເປັນຕົ້ນໂພຫຼືຕົ້ນໄຊ ).ນີ້ເປັນພື້ນຖານຂອງຄວາມເຊື່ອທີ່ຊາວອິນເດຍເຊື່ອຖືໃນປັດຈຸບັນ. ນອກຈາກນີ້ຍັງມີການນັບຖືງູ ແລະດວງອາທິດ.

### 2.2.2 ມໍລະດົກທາງສິລະປະກຳ

ສິລະປະກຳທີ່ຊາວລຸ່ມແມ່ນ້ຳສິນທຸເຫຼືອໄວ້ເປັນມໍລະດົກຈົນເຖິງປັດຈຸບັນນີ້ມີຢ່າງຫຼວງຫຼາຍ ແຕ່ລະຢ່າງລ້ວນແຕ່ສະແດງເຖິງວັດທະນະທຳຕ່າງໆຂອງຄົນຍຸກນັ້ນ ໄດ້ເປັນຢ່າງດີເຊັ່ນ: ຮູບແກະສະຫຼັກຫີນເປັນຮູບປັ້ນຜູ້ຊາຍມີໜວດຍາວ, ມີຜ້າພັນຫົວ, ປະທັບກາເທິງໜ້າຜາກ, ຫົ່ມຜ້າບ່ຽງ, ມີລວດລາຍດອກໄມ້ຄ້າຍດອກຈຳປາ ເຊິ່ງເປັນເຄື່ອງໝາຍຂອງຄວາມສັກສິດແມ່ນພົບຫຼາຍທີ່ສຸດໃນເມືອງໂມເຫັນໂຈດາໂຣ ສະແດງໃຫ້ເຫັນວ່າ ການຈັ່ງໜວດເປັນວັດທະນະທຳຢ່າງໜຶ່ງຂອງຄົນສະໄໝນັ້ນ ແລະກໍໄດ້ຕົກທອດມາເຖິງຄົນອິນເດຍໃນສະໄໝປັດຈຸບັນ.

ນອກຈາກນີ້ ຍັງມີກາຈ້ຳຕ່າງໆຫຼາຍກວ່າພັນສອງຮ້ອຍໜ່ວຍ, ກາບາງໜ່ວຍມີຮູບງົວເຂົາຍາວ, ງົວເຂົາສັ້ນ, ຄວາຍ, ເສືອ, ແຮ້, ຊ້າງ ລັກສະນະຂອງກາເຫຼົ່ານີ້ ຖືວ່າ ມີຄຸນຄ່າທາງສິລະປະກຳຢ່າງຫຼວງຫຼາຍ ເພາະຮູບສັດທີ່ສະຫຼັກຢູ່ໃນການັ້ນ ສະແດງເຖິງສີມືໃນການແກະສະຫຼັກໄດ້ຢ່າງລະອຽດສວຍງາມຕາມທຳມະຊາດ. ນັກບູຮານຄະດີເຊື່ອວ່າ ກາເຫຼົ່ານີ້ ເປັນສັນຍາລັກຂອງພໍ່ຄ້າ ຫຼືປະຊາຊົນຜູ້ທີ່ມີຖານະ ເພາະມີກາໄວ້ປະຈຳຕຳແໜ່ງ ຫຼືອາດເປັນເຄື່ອງລາງຂອງຂັງ.

### 2.2.3 ມໍລະດົກທາງວັດທະນະທຳຕ່າງໆ

ການນຸ່ງຫົ່ມເປັນວັດທະນະທຳຢ່າງໜຶ່ງທີ່ຊາວສິນທຸເຫຼືອໄວ້ເປັນມໍລະດົກຈົນເທົ້າທຸກວັນນີ້, ເປັນເຄື່ອງນຸ່ງຫົ່ມຝ້າຍ ທີ່ນິຍົມໃຊ້ກັນຢ່າງກວ້າງຂວາງໃນສະໄໝນັ້ນ ການນຳຝ້າຍມາໃຊ້ມີສະເພາະໃນອາລະຍະທຳສິນທຸເທົ່ານັ້ນ ໃນຂະນະທີ່ອາລະຍະທຳເອຢິບ ແລະເມໂສໂປຕາເມຍຍັງບໍ່ຮູ້ຈັກໃຊ້ຝ້າຍເຮັດເຄື່ອງນຸ່ງຫົ່ມ.

ປະເພນີການສົ່ງສະການຂອງຊາວສິນທຸຈະມີສາມວິທີ

1) ຝັງສົບໄວ້ຮ່ວມກັບເຄື່ອງໃຊ້ຂອງຜູ້ຕາຍທີ່ເຄີຍໃຊ້ໃນເວລາຍັງມີຊີວິດ
2) ນຳສົບໄປໃຫ້ນົກກາກິນຊີ້ນກ່ອນ ແລ້ວຈຶ່ງຮວມກະດູກໄວ້ກັບເຄື່ອງປະດັບ ແລະລູກປັດຕ່າງໆ
3) ເຜົາສົບແລ້ວເກັບຂີ້ເຖົ່າ ຮວມທັງກະດູກໄວ້ໃນທາດ.

ຈາກພິທີກຳທັງສາມວິທີນີ້ ສະແດງໃຫ້ເຫັນວ່າ ຮູບແບບການຈັດພິທີສົ່ງສະການຂອງຊາວສິນທຸຄ້າຍຄືກັບພິທີສົ່ງສະການຢູ່ອິນເດຍໃນປັດຈຸບັນ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຕາມຫຼັກໃນສະໄໝອາລະຍະທຳສິນທຸມີຄວາມເຄົາລົບງົວຜູ້ ເພາະງົວຜູ້ເປັນພາຫະນະຂອງພະຜູ້ເຈົ້າ. ສ່ວນຊາວອາລະຍັນແມ່ນເຄົາລົບງົວແມ່ ເພາະງົວແມ່ແມ່ນມີບົດບາດໃນການໃຫ້ນົມ ການເຄົາລົບງົວແມ່ນເປັນສັດສະແດງເຖິງຄວາມໝັ້ນຄົງ ປັດຈຸບັນຊາວອິນເຄົາລົບທັງງົວຜູ້ແລະງົວແມ່. ການເຄົາລົບງົວຂອງຊາວອິນເດຍ ລ້ວນແລ້ວແຕ່ເປັນມໍລະດົກຕົກທອດມາຈາກວັດທະນະທຳລຸ່ມແມ່ນ້ຳສິນທຸ.

## 2.3 ຄວາມເສື່ອມໂຊມຂອງອາລະຍະທຳລຸ່ມແມ່ນ້ຳສິນທຸ

ອາລະຍະທຳລຸ່ມແມ່ນ້ຳສິນທຸ ເຖິງຈະມີຄວາມຈະເລີນຫຼາຍປານໃດກໍຕາມ ກໍຕ້ອງພົບກັບຄວາມເສື່ອມເປັນຂອງທຳມະດາ ບໍ່ມີນັກຄົ້ນຄວ້າບູຮານຄະດີທ່ານໃດພົບຄວາມເສື່ອມຂອງອາລະຍະທຳຂອງສິນທຸໄດ້ ມີແຕ່ຜູ້ສັນນິຖານຈາກການຂຸດພົບເມືອງຮ້າງ ທີ່ຕັ້ງຢູ່ແຄມຝັ່ງແມ່ນ້ຳອິນດັດ ແລະແມ່ນ້ຳລາວີ ແລະໄດ້ຄົ້ນພົບຊາກກະດູກກອງກັນຢູ່ເປັນຈຳນວນຫຼວງຫຼາຍ ອາດຈະແມ່ນການເສື່ອມຈາກໂລກລະບາດ, ຖືກໄພທຳມະຊາດນ້ຳຖ້ວມ ຫຼືເສື່ອມເພາະຕ່າງຊາດເຂົ້າມາຮຸກຮານ ເມື່ອພວກອາລະຍັນຊະນະແລ້ວກໍສ້າງຊຸມຊົນຂອງຕົນແລ້ວປະຫານຊົນຊາດພື້ນເມືອງຖິ້ມໝົດ.

ເວົ້າລວມແລ້ວອາລະຍະທຳລຸ່ມແມ່ນ້ຳສິນທຸ ເກີດຂຶ້ນໃນບໍລິເວນນ້ຳສິນທຸ ເມື່ອພວກດຣາວິດຽນຕັ້ງຖິ່ນຖານທີ່ໝັ້ນຄົງແລ້ວ ຢູ່ປະເທດປະກິສະຖານໃນປັດຈຸບັນ ເຊື່ອວ່າ ມີອາຍຸ 3000 ປີກ່ອນ ຄສ ລັກສະນະເດັ່ນຂອງອາລະຍະທຳສິນທຸຢູ່ທີ່ການກໍ່ສ້າງ ແລະການວາງຜັງເມືອງ ເຊິ່ງສະແດງໃຫ້ເຫັນເຖິງສະຕິປັນຍາ ແລະຄວາມສາມາດຂອງພວກດຣາວິດຽນ ໃນເມືອງຮາລະປາ ແລະໂມເຫັນໂຈດາໂຣ ໄດ້ຂຸດພົບສິ່ງກໍ່ສ້າງທີ່ມີຮາກຖານທົນທານ ແຂງແຮງ ທີ່ສ້າງດ້ວຍດິນຈີ່ ແລະໂບກປູນ ສ່ວນໃຫຍ່ແມ່ນເຮືອນຢູ່ອາໄສເປັນຮູບສີ່ຫຼ່ຽມ ມີປະຕູລ່ວງແຕ່ຫຼັງບ້ານຫາໜ້າບ້ານ ແບບບໍ່ມີການຕົກແຕ່ງ ແຕ່ເນັ້ນເລື່ອງຄວາມສະດວກສະບາຍ ແລະຄວາມສະອາດເປັນຕົ້ນຕໍ. ປັດໄຈສຳຄັນທີ່ເຮັດໃຫ້ອາລະຍະທຳສິນທຸເສື່ອມ ເຊື່ອວ່າ ເກີດຈາກການຮຸກຮານຂອງຊົນຊາດອາລະຍັນ ແລ້ວຈຶ່ງຄ່ອຍແຜ່ຂະຫຍາຍອິນທິພົນທາງພາກກາງ ແລະພາກໃຕ້ຂອງອິນເດຍໃນບໍລິເວນແມ່ນ້ຳຄົງຄາ ແລະແມ່ນ້ຳພົມມະບຸດ.

ຄຳຖາມ: 1) ໃຫ້ນັກສຶກສາແຕ້ມແຜນທີ່ອາຊີໃຕ້ ພ້ອມທັງແຕ້ມຮູບຂອງແມ່ນ້ຳສິນທຸ, ແມ່ນ້ຳຄົງຄາ ແລະອະທິບາຍເຖິງລັກສະນະຂອງອາລະຍະທຳສິນທຸໂດຍຫຍໍ້?

2) ໃຫ້ອະທິບາຍເຖິງມໍລະດົກທາງວັດທະນະທຳ ແລະຄວາມເສື່ອມຂອງອາລະຍະທຳລຸ່ມແມ່ນ້ຳສິນທຸ ພ້ອມທັງຍົກຕົວຢ່າງມາປະກອບ?

ກິດຈະກຳ [illegible]

1. ຈົ່ງອະທິບາຍ [illegible], ລັກສະນະເດັ່ນ [illegible] ຂອງອາລະຍະທຳລຸ່ມແມ່ນ້ຳສິນທຸ.

2. ຈົ່ງອະທິບາຍມໍລະດົກທາງວັດທະນະທຳ [illegible] ພ້ອມທັງຍົກຕົວຢ່າງມາປະກອບ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

# ບົດທີ 3

## ອາລະຍະທຳຂອງພວກອາລະຍັນ

### 3.1 ອາລະຍະທຳອິນເດຍເມື່ອຊາວອາລະຍັນມາຕັ້ງຖິ່ນຖານ (ປະມານ 1500 ປີກ່ອນ ຄສ ເຖິງ ສະຕະວັດທີ 6

### 3.1.1 ຊົນຊາດອາລະຍັນ

ພວກອາລະຍັນເປັນພວກອິນໂດ-ຢູໂຣປຽນ ພວກນີ້ມີຮູບຮ່າງໃຫຍ່ ຜິວຂາວດັງໂນ່, ຫົວຍາວ ຖິ່ນກຳເນີດຂອງພວກອາລະຍັນນີ້ບໍ່ແນ່ນອນ ບາງທ່ານສັນນິຖານວ່າ ຢູ່ພາກກາງຂອງທະວີບອາຊີ, ຮົງກາລີ, ອີຫຼ່ານ, ອາຊີຕາເວັນອອກ, ຣັດເຊຍ ແລະບໍລິເວນຂົ້ວໂລກເໜືອ. ພວກອາລະຍັນມີຄວາມເປັນຢູ່ແບບງ່າຍໆ ສ່ວນໃຫຍ່ແມ່ນອາຊີບລ້ຽງ ເລີ້ລອນ, ມີນິໄສມັກຕໍ່ສູ້, ມີວິທີຕ່າງໆທີ່ຈະເອົາຊະນະສັດຕູເຊັ່ນ ການໃຊ້ທະນູໄຟ, ການໃຊ້ດາບ, ການກໍ່ໃຫ້ເກີດຄວາມວຸ້ນວາຍພາຍໃນກຸ່ມຂອງພວກດຣາວິດຽນ.

ຊົນຊາດອາລະຍັນໄດ້ອົບພະຍົບໄປຢູ່ທີ່ຕ່າງໆຂອງໂລກ ໄດ້ແບ່ງອອກເປັນກຸ່ມດັ່ງນີ້:

ກຸ່ມທຳອິດ: ໄດ້ອົບພະຍົບໄປທາງຕາເວັນຕົກ ແລະແຈກຢາຍເປັນພົນລະເມືອງຂອງປະເທດຕ່າງໆໃນຢູໂຣບເຊັ່ນ ປະເທດເຢຍລະມັນ, ອິສຕຣາລີ, ຮົງກາລີ ແລະໂປໂລຍ ກຸ່ມນີ້ເອີ້ນວ່າ ອາລະຍັນ-ຢູໂຣບປຽນ.

ກຸ່ມທີສອງ: ອົບພະຍົບໄປທາງຕາເວັນອອກສ່ຽງໃຕ້ເຂົ້າໄປໃນປະເທດອັຟການິສະຖານ ແລະຂະຫຍາຍໄປທາງທິດຕາເວັນຕົກເຂົ້າໄປທາງອ່າວເປີເຊຍ. ກຸ່ມນີ້ຮຽກຕົນເອງວ່າ ອາລະຍັນ-ອີຣະນຽນ.

ກຸ່ມທີສາມ: ມາຈາກອາຊີກາງອົບພະຍົບໄປທາງຕາເວັນອອກ ທາງຮ່ອມພູເຂົາໄຄເບີ ແລະໂບລັນ ເຊິ່ງຢູ່ທາງຕອນເໜືອຂອງອິນເດຍ ແລະໄດ້ອາໄສຢູ່ໄລຍະໜຶ່ງ ອາດຈະເປັນລຸ່ມແມ່ນ້ຳສິນທຸ ແລ້ວຈຶ່ງອົບພະຍົບລົງມາທາງພາກກາງ ແລະພາກໃຕ້ຂອງອິນເດຍ ຮຽກວ່າ ອາລະຍັນ-ອິນໂດ.

ການເຂົ້າມາໃນບໍລິເວນທີ່ຮາດລຸ່ມປັນຈາບຂອງອາລະຍັນນີ້ມີອາຊີບລ້ຽງສັດ ບາງຫຼັກຖານກ່າວເປັນການຫາບ່ອນຢູ່ທີ່ອຸດົມສົມບູນ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

### 3.1.2 ດ້ານການເມືອງຂອງອາລະຍັນ

ເມື່ອຊາວອິນໂດ-ອາລະຍັນອົບພະຍົບເຂົ້າມາ ແລະຄ່ອຍໆຂະຫຍາຍຕົວໄປທາງຕາເວັນອອກ ແລ້ວສະຖາປະນາອານາຈັກຂຶ້ນດ້ານການເມືອງ, ການປົກຄອງ, ເສດຖະກິດ ແລະສັງຄົມມີການປ່ຽນແປງໄປຕາມເວລາ ໂດຍສະເພາະແມ່ນທາງດ້ານການເມືອງການປົກຄອງມີການປ່ຽນແປງທີ່ຊ້ອນຊ້າງໄວຈົນເຫັນໄດ້ຈະແຈ້ງ, ສ່ວນດ້ານເສດຖະກິດຄ່ອຍໆຂະຫຍາຍຕົວຢ່າງຊ້າໆ.

ໃນໄລຍະທຳອິດຊາວອິນໂດ-ອາລະຍັນສະຖາປະນາອານາຈັກຕ່າງໆຂຶ້ນໃນລຸ່ມແມ່ນ້ຳຄົງຄາເຊັ່ນ: ອານາຈັກປັນຈະລະ, ມະຄົດ, ໂກສົນ, ກາສີ, ວັດຊີ, ວິເທຫະ ແລະອັງຄະ...ອາຈານຈັກເຫຼົ່ານີ້ມີສະພາບເປັນນະຄອນລັດອິດສະຫລະ. ນັກປະຫວັດສາດນິຍົມເອີ້ນອານາຈັກນ້ອຍໆເຫຼົ່ານີ້ວ່າ ອານາຈັກເຜົ່າ (Tribal Kingdoms) ຜູ້ປົກຄອງມີຕຳແໜ່ງເປັນລາຊາ ມີທັງມາຈາກການເລືອກຕັ້ງ ແລະສືບສາຍເລືອດ. ບາງອານາຈັກມີການປົກຄອງແບບສາທາລະນະລັດ. ອານາຈັກແຕ່ລະແຫ່ງມີການປົກຄອງທີ່ສຳຄັນສາມອົງການໄດ້ແກ່: 1) ລາຊາ, 2) ສະພາ ແລະ3) ສະມິຕິ.

ລາຊາເປັນຜູ້ນຳໃນການປົກຄອງ ແລະເປັນຜູ້ນຳທັບ. ລາຊາຍ່ອມມີຜູ້ຊ່ວຍຝ່າຍຕ່າງໆທີ່ສຳຄັນຄື ປຸໂລຫິດ ເຊິ່ງເປັນນັກບວດທີ່ເຮັດໜ້າທີ່ປະກອບພະລາຊະພິທີເປັນໂຫນ ແລະເປັນທີ່ປຶກສາລາຊະການ. ຕຳແໜ່ງເສນາ ເຊິ່ງເປັນຜູ້ຮັບຜິດຊອບດ້ານການທະຫານ.

ສະພາ ແລະສະມິຕິເປັນອົງການທຳໜ້າທີ່ໃນການປົກຄອງ ແລະຕັດສິນບັນຫາຕ່າງໆຮ່ວມກັບລາຊາ. ແຕ່ບໍ່ພົບຫລັກຖານທາງປະຫວັດສາດທີ່ຈະໃຫ້ຄວາມກະຈ່າງແຈ້ງກ່ຽວກັບອຳນາດໜ້າທີ່ທີ່ຊັດເຈນຂອງສະພາ ແລະສະມິຕິ. ສັນນິຖານວ່າ ສະພາເປັນສະມາຄົມຂອງພວກຜູ້ເຖົ້າໃນເຜົ່າ, ສ່ວນສະມິຕິເປັນສະມາຄົມຂອງລາສະດອນທັງເຜົ່າ ຫລືໃນທາງກົງກັນຂ້າມສະພາອາດເປັນສະມາຄົມຂອງປະຊາຊົນທັງໝົດ, ສ່ວນສະມິຕິເປັນສະມາຄົມຂອງພວກຜູ້ເຖົ້າໃນເຜົ່າກໍເປັນໄດ້.

ໃນເວລາຕໍ່ມາລາສະດອນໃນແຕ່ລະອານາຈັກເພີ່ມຂຶ້ນ, ການແຍ່ງຊີງດິນແດນ ແລະຊັບສິນກໍເກີດຂຶ້ນລຽນຕິດ ດັ່ງນັ້ນ ລາຊາຈຶ່ງມີອຳນາດ ແລະເປັນຜູ້ນຳໃນການລົບ. ການປົກຄອງກໍມີລັກສະນະສັບສົນຂຶ້ນ ສະນັ້ນ, ການປົກຄອງແບບລາຊາທິປະໄຕ (Monarchy) ກໍເກີດຂຶ້ນ.

ອານາຈັກຕ່າງໆທີ່ປົກຄອງແບບລາຊາທິປະໄຕມີລາຊາເປັນຜູ້ປົກຄອງສູງສຸດ, ພະລາຊາເໝືອນເທບພະເຈົ້າ ມີພາມເປັນຜູ້ປະກອບລາຊະພິທີຄື ເຊີນເທບພະເຈົ້າໃຫ້ມາສະຖິດໃນອົງລາຊາ. ເຊິ່ງໄດ້ເຮັດໃຫ້ລາຊາປ່ຽນຈາກມະນຸດເປັນເທບພະເຈົ້າ, ຕຳແໜ່ງລາຊາຈະສືບຕໍ່ຈາກພະລາຊະບິດາໄປສູ່ພະລາຊະໂອລົດ.

ປະຊາທິປະໄຕ ລາຊາທິປະໄຕ
ສ.ປ.ປ.ລາວ. ລາວ ສ.ປ.ຈ.

### 3.1.3 ດ້ານເສດຖະກິດ

ຊາວອາລະຍັນດຳລົງຊີວິດໂດຍການກະສິກຳລ້ຽງສັດເປັນຕົ້ນແມ່ນງົວ, ຮອງລົງມາແມ່ນມ້າ, ແກະ, ແບ້ ນອກນັ້ນມີອາຊີບຊ່າງໄມ້, ຊ່າງປະດິດອາວຸດສົງຄາມເຊັ່ນ ຂວານ, ຫອກ, ດາບ, ທະນູ, ຊ່າງໂລຫະ, ຊ່າງເຫຼັກ ແລະຊ່າງທອງແດງ.

ການຄ້າກັບຕ່າງແດນທາງຕາເວັນຕົກໄດ້ແກ່ ຊີເລຍ, ອີຢີບ, ເກຣັກ. ສ່ວນອາຊີຕາເວັນອອກໄດ້ແກ່ຈີນ. ສິນຄ້າສົ່ງອອກທີ່ສຳຄັນໄດ້ແກ່ເຄື່ອງເທດ, ໄຂ່ມຸກ, ເພັດ, ໄມ້ຈັນ, ງາຊ້າງ, ຜ້າຝ້າຍ, ເສັ້ນໄໝ ແລະອື່ນໆ. ສິນຄ້າຂາເຂົ້າທີ່ສຳຄັນໄດ້ແກ່ເງິນ, ທອງ, ໝາກໄມ້ແຫ້ງ. ການຂະຫຍາຍຕົວທາງດ້ານເສດຖະກິດເຮັດໃຫ້ເກີດມີນະຄອນໃຫຍ່ເກີດຂຶ້ນເຊັ່ນ:ນະຄອນຕັກສິລາ, ອຸດເຊນີ, ໂກສຳພີ ຮວມທັງປາລີບຸດ. ຊາວເມືອງເຫຼົ່ານີ້ດຳລົງຊີວິດຢ່າງສະດວກ ແລະສະໜຸກສະໜານດັ່ງປາກົດໃນຄຳພີການະສູດໄດ້ກ່າວເຖິງຊີວິດແບບຊາວເມືອງຂອງພວກອາລະຍັນ.

### 3.1.4 ດ້ານສັງຄົມຂອງຊາວອາລະຍັນ

ລັກສະນະສັງຄົມຂອງຊາວອາລະຍັນເລີ່ມກໍ່ຕົວເປັນຊົນຊັ້ນມີສາມຊົນຊັ້ນຄື ນັກລົບ, ສາມັນຊົນ ແລະພະ. ຈະເຫັນວ່າບົດບາດຂອງນັກລົບ ຫຼືກະສັດຈະເປັນຜູ້ປົກຄອງ ແລະເປັນຜູ້ໜຶ່ງສະເໝີ ສະພາບຂອງຄົນກຸ່ມນີ້ຈະຈັດຢູ່ໃນຊົນຊັ້ນດີທີ່ສຸດ ພະຫຼືນັກບວດຈັດໄວ້ຢູ່ໃນຊົນຊັ້ນຮອງຈາກກະສັດ ສະນັ້ນ ພວກພະຫຼືນັກບວດຈຶ່ງພະຍາຍາມຊີງກຸ່ມນັກລົບໃຫ້ເປັນໜຶ່ງ ຕໍ່ມາລະບົບວັນນະກໍເກີດຂຶ້ນ. ໂຄງສ້າງທາງສັງຄົມຈຶ່ງແມ່ນພາມເປັນຜູ້ມີບົດບາດ ຮອງລົງມາແມ່ນກະສັດ, ແພດ, ສູດ. ເວົ້າລວມແລ້ວໂຄງສ້າງທາງສັງຄົມອາລະຍັນເປັນພື້ນຖານໂຄງສ້າງສັງຄົມອິນເດຍໃນປັດຈຸບັນໂຄງສ້າງດັ່ງກ່າວ ຍັງມີອິດທິພົນຢູ່ທຸກຫົນທຸກແຫ່ງໃນປະເທດ.

ເມື່ອສົງຄາມລະຫວ່າງອາລະຍັນ ແລະດຣາວິດຽນສິ້ນສຸດລົງ ຄວາມສຳພັນລະຫວ່າງສອງກຸ່ມກໍ່ໄດ້ປ່ຽນສະພາບຄື ຜູ້ຊະນະ ແລະທາດ. ພວກດຣາວິດຽນບາງກຸ່ມອົບພະຍົບໜີຈາກການປົກຄອງຂອງພວກອາລະຍັນລົງໄປຢູ່ທາງພາກໃຕ້ຂອງອິນເດຍ, ຊະເລີຍຊາວດຣາວິດຽນທີ່ຍັງເຫຼືອຕ້ອງຢູ່ໃນການດູແລຂອງພວກອາລະຍັນ, ຊະເລີຍສ່ວນໃຫຍ່ຈະເປັນຜູ້ຍິງ ພວກອາລະຍັນໄດ້ເອົາໄປເປັນທາດຮັບໃຊ້ຢູ່ໃນເຮືອນ ເນື່ອງຈາກວ່າພວກອາລະຍັນເຂົ້າມາໃນອິນເດຍນັ້ນເປັນພວກເລລອນພະຈົນໄພ, ຜູ້ຍິງອາລະຍັນຈຶ່ງມີໜ້ອຍ ເພາະຕ້ອງສ່ຽງໄພ ແລະເສຍຊີວິດໃນລະຫວ່າງການເດີນທາງ. ໃນເວລາຕໍ່ມາພວກດຣາວິດຽນກໍໄດ້ປ່ຽນຈາກທາດມາເປັນຄົນຮັກ, ມາເປັນເມຍ. ໃນໄລຍະນີ້ມີການແຕ່ງງານລະຫວ່າງພວກອາລະຍັນກັບພວກດຣາວິດຽນ, ລູກທີ່ມີແມ່ເປັນດຣາວິດຽນພໍ່ເປັນອາລະຍັນຕ້ອງຢູ່ໃນຄວາມດູແລຂອງແມ່ທາງດ້ານຄວາມຄິດ, ປະເພນີ ແມ່ນແຕ່ຊື່ລູກກໍຕ້ອງໃສ່ຕາມຊື່ແມ່, ຖືເຊື້ອສາຍຕາມແມ່ ສະນັ້ນສະຖານະພາບໃນຄອບຄົວຂອງພວກອາລະຍັນກໍປ່ຽນແປງໄປ. ພວກອາລະຍັນຢ້ານພວກດຣາວິດຽນກືນກິນເຜົ່າພັນຂອງຕົນເອງຈຶ່ງໄດ້ອອກກົດ

ຫ້າມພວກອາລະຍັນແຕ່ງງານກັບພວກດຣາວິດຽນເດັດຂາດ ນີ້ເປັນຈຸດເລີ່ມຕົ້ນຂອງການຕັ້ງລະບົບວັນນະ ເພື່ອຮັກສາຄວາມບໍລິສຸດຂອງເຊື້ອຊາດອາລະຍັນໄວ້.

ຈຸດປະສົງຂອງການມີລະບົບວັນນະ ເພື່ອຢຸດຢັ້ງການປະສົມປະສານຂອງກຸ່ມຊົນ ແລະເພື່ອຫຼີກລ່ຽງຈາກຄົນກຸ່ມໜ້ອຍໃນສັງຄົມຈະຮວມອຳນາດແຕ່ຜູ້ດຽວ ລະບົບວັນນະຈຶ່ງເກີດຂຶ້ນ ແລະເປັນກົດທີ່ພວກພາມເປັນຜູ້ກຳນົດອອກໄປຕາມກຸ່ມອາຊີບ.

### 3.1.5 ລະບົບວັນນະຂອງຊາວອາລະຍັນ

ຄຳວ່າ"ວັນນະ"ແປວ່າ ສີ ໝາຍເຖິງສີຜິວ, ການແບ່ງວັນນະກໍໝາຍເຖິງການແບ່ງສີຜິວລະຫວ່າງພວກຜິວຂາວຄື ພວກອາລະຍັນກັບພວກຜິວດຳຄື ພວກມີລັກຂະ (ດຣາວິດຽນ). ດັ່ງນັ້ນໃນຄຳສອນຄຳພີພະເວດຈຶ່ງໄດ້ປັບປຸງເພີ່ມຕື່ມກ່ຽວກັບການແບ່ງຊົນຊັ້ນໄວ້ຢ່າງຈະແຈ້ງ ເຊິ່ງໄດ້ແບ່ງອອກເປັນ 4 ວັນນະຄື:

1) ວັນນະພາມ ຫຼືນັກບວດ ມີໜ້າທີ່ສຶກສາຮ່ຳຮຽນຄຳພີພະເວດສອງ ເພື່ອເປັນຜູ້ປະກອບພິທີກຳຕ່າງໆຂອງທຸກໆວັນນະ ເຊິ່ງມີຄຸນສົມບັດດັ່ງນີ້: ມີຄວາມສຸພາບພາຍໃນຈິດໃຈ, ລະງັບຈິດໃຈບໍ່ໃຫ້ເກີດມີຄວາມໂລບ ໂກດ ຫຼົງ, ມີຄວາມອົດທົນ, ມີຄວາມເມດຕາກະລຸນາເປັນທີ່ຕັ້ງ, ພໍໃຈໃນຄວາມສຸກທີ່ມີຢູ່, ມີຄວາມອົດທົນໃນການບຳເພັນພຽນ ເພື່ອຫາຄວາມຮູ້ໃນທາງທີ່ຊອບທຳ, ຈົ່ງຮັກພັກດີຕໍ່ພະພົມ, ມີຄວາມເຫັນທີ່ຊື່ສັດສຸດຈະລິດ., ມີຄວາມພັກດີຕໍ່ພາມ, ມີຄວາມມ່ອນຊື່ນ, ພ້ອມຮັກສາປະເທດຊາດໄດ້ທຸກເວລາ.

2) ວັນນະກະສັດ ຫລືນັກຮົບ ມີໜ້າທີ່ໃນການຂະຫຍາຍອານາເຂດ ແລະຮັກສາເຂດແດນເວລາສັດຕູພາຍນອກເຂົ້າມາຮຸກຮານ ແລະສຶກສາຄຳພີພະເວດ~~ພະເວດ~~ສາມ. ວັນນະກະສັດມີຄຸນສົມບັດດັ່ງນີ້: ຕ້ອງກ້າຫານ ບໍ່ມີຄວາມຢ້ານກົວ, ມີຄວາມອົດທົນ ບໍ່ທໍ້ຖອຍໃນການປະເຊີນໄພ, ມີຍຶດມີກຽດ ຮູ້ນຳໃຊ້ອຳນາດໃນທາງທີ່ຖືກຕ້ອງ,ມີຄວາມຊື່ສັດສຸດຈະລິດ, ມີຄວາມເມດຕາກະລຸນາເປັນທີ່ຕັ້ງ

3) ວັນນະແພດ ເປັນຊົນຊັ້ນກະສິກອນ ເຊິ່ງເປັນສາມັນຊົນ, ມີໜ້າທີ່ຄ້າຂາຍປູກຝັງລ້ຽງສັດ ຫຼືວ່າ ຫາລ້ຽງສັງຄົມ. ວັນນະແພດມີຄຸນສົມບັດດັ່ງນີ້: ຕ້ອງເປັນຄົນສະຫຼຽວສະຫຼາດໃນການແລກປ່ຽນສິ່ງຂອງ, ມີຄວາມຮູ້ໃນການຄິດໄລ່, ຈົ່ງຮັກພັກດີຕໍ່ພະພົມ, ນັບຖືພາມ ແລະກະສັດເພື່ອສະແຫວງຫາຄວາມຮູ້.

4) ວັນນະສູດ ເປັນກຳມະກອນຮັບຈ້າງຫຼືຮັບໃຊ້ວັນນະອື່ນ, ມີຄຸນສົມບັດດັ່ງນີ້: ມີຄວາມສະຫງ່ຽມຈຽມຕົວ, ທຳຕົວໃຫ້ບໍລິສຸດທັງຮ່າງກາຍ ແລະຈິດໃຈ, ບໍ່ເປັນຜູ້ຮ້າຍອ້າຍໂຈນ, ບໍ່ເປັນຄົນປະຈົບປະແຈງ ແລະບໍ່ຄິດທໍລະຍົດ, ເຄົາລົບນັບຖືວັນນະທີ່ສູງກວ່າ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ນອກນີ້ ຍັງມີພວກນອກວັນນະຄື ພວກທີ່ແຕ່ງງານຂ້າມວັນນະ, ລູກເກີດມາກໍຈະເປັນທາດທັນທີ ຫຼືເອີ້ນວ່າ ຈັນດານ. ຖືວ່າພວກວັນນະສູງຈະແຕະຕ້ອງຈັບບາຍຄົນວັນນະນີ້ບໍ່ໄດ້, ຖ້າແຕະຕ້ອງຈະເຮັດໃຫ້ວັນນະທີ່ສູງກວ່າເປິ້ເປື້ອນ ແລະມີມົນທິນຕິດຕົວ.

ວັນນະທີ່ສູງກວ່າໝູ່ແມ່ນວັນນະພາມ ເພາະພາມມີສິດຕິດຕໍ່ກັບພະພົມໄດ້ພຽງແຕ່ພວກດຽວ. ວັນນະອື່ນບໍ່ມີສິດ ແລະໃນຄຳພີພະເວດກໍໄດ້ກ່າວໄວ້ວ່າ ພາມແມ່ນເກີດມາຈາກອະໄວຍະວະສ່ວນສູງຂອງພະພົມຄືເກີດຈາກປາກ, ກະສັດແມ່ນເກີດຈາກແຂນຂອງພະພົມ, ແພດແມ່ນເກີດຈາກຂາຂອງພະພົມ, ສ່ວນວັນນະສູດແມ່ນເກີດຈາກຕີນຂອງພະພົມ. ທຸກວັນນະຕ້ອງປະຕິບັດຕົນຕາມວັນນະໃຫ້ເຄັ່ງຄັດ, ຖ້າພວກໃດຝ່າຝືນ ກໍຈະຕົກໄປຢູ່ໃນວັນນະທີ່ຕ່ຳກວ່າ ຫຼືຮ້າຍແຮງກວ່ານັ້ນຈະບໍ່ມີວັນນະໃຫ້ຢູ່.

### 3.1.6 ຄວາມເຊື່ອຂອງພວກອາລະຍັນ

ຊາວອາລະຍັນໃນຍຸກນີ້ມີຊີວິດຢູ່ຢ່າງມີຄວາມສຸກສະໜຸກສະໜານ, ມີຄວາມມ່ວນຊື່ນມັກເຕັ້ນລຳ, ມັກດື່ມເຫຼົ້າ, ຫຼີ້ນການພະນັນ. ຊາວອາລະຍັນຍຸກນີ້ແມ່ນເບິ່ງໂລກເຕັມໄປດ້ວຍຄວາມສວຍງາມໝົດ ຈະເຫັນໄດ້ຈາກການຊື່ນຊົມທຳມະຊາດຢູ່ອ້ອມຮອບຕົວ ໂດຍການລິດຈະນາໂຄງກອນອອກມາດ້ວຍປາກເປົ່າ ເພື່ອສັນລະເສີນພະເຈົ້າ, ຄວາມຄິດຂອງພວກເຂົາເຕັມໄປດ້ວຍຄວາມກະຕືລືລົ້ນ, ເຂົາເຊື່ອກ່ຽວກັບຄວາມສຸກໃນຊີວິດການເປັນຢູ່ໃນປັດຈຸບັນ ແລະຫຼັງຄວາມຕາຍແລ້ວ.

ພວກນີ້ມີຄວາມເຊື່ອໃນເລື່ອງວິນຍານ (Soul) ເຊື່ອວ່າເມື່ອມະນຸດຕາຍໄປແລ້ວ ຈະກັບມາເກີດໃໝ່ອີກ, ຖ້າຫາກວ່າຮັກສາຊາກສົບຂອງຜູ້ຕາຍໄວ້ບໍ່ໃຫ້ເປື່ອຍເນົ່າ, ວິນຍານທີ່ລ່ອງລອຍອອກໄປຈາກຮ່າງກາຍນັ້ນ ກໍຈະຫວນກັບມາສູ່ຮ່າງກາຍເດີມອີກ ຄົນຕາຍນັ້ນຈະຟື້ນຄືນຊີບ ( ເຊິ່ງຄວາມເຊື່ອນີ້ຄ້າຍຄືກັບຄວາມເຊື່ອຂອງຊາວເອຢິບບູຮານທີ່ໄດ້ສ້າງທໍປີລະມິດ ເພື່ອຝັງສົບຟາໂຣ ເຊິ່ງເປັນກະສັດເອຢິບ ເພື່ອຈະຄອຍຖ້າວິນຍານຂອງຟາໂຣກັບຄືນສູ່ຮ່າງເດີມ ແລ້ວຄືນຊີບ ).

ນອກຈາກນີ້, ຊາວອາລະຍັນຍັງມີຄວາມເຊື່ອວ່າ ພະເຈົ້າເປັນຜູ້ສ້າງໂລກ ແລະສັບພະສິ່ງໃນໂລກ, ເປັນຜູ້ຄວບຄຸມຮັກສາ ແລະທຳລາຍ ຫລືບັນດານໃຫ້ສິ່ງຕ່າງໆເປັນໄປແນວໃດກໍໄດ້ຕາມທີ່ພະອົງພໍໃຈ. ຖ້າມະນຸດຢາກພົ້ນຈາກໄພພິບັດຕ່າງໆ ມະນຸດຕ້ອງເຮັດໃຫ້ພະເຈົ້າພໍໃຈ ດ້ວຍການສວດມົນພາວະນາ, ອ້ອນວອນໃຫ້ພະອົງຄຸ້ມຄອງ.ແນວຄິດແລະຄວາມເຊື່ອຂອງຊາວອາລະຍັນເຫຼົ່ານີ້ໄດ້ກາຍເປັນກົກເຄົ້າ ຫຼືພື້ນຖານຂອງພະເວດ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຄຳພີພະເວດເປັນຄຳພີທີ່ເກົ່າແກ່ຂອງສາສະໜາພາມໃນອິນເດຍ ແລະອາດເປັນຄຳພີທີ່ເກົ່າແກ່ທີ່ສຸດຂອງໂລກ. ຄຳພີພະເວດບໍ່ໄດ້ປາກົດຊື່ຜູ້ແຕ່ງ ຫຼືສາສະດາຜູ້ກໍ່ຕັ້ງ. ຕາມປະຫວັດຄວາມເປັນມາຂອງຄຳພີພະເວດວ່າ "ພະເວດເປັນຄຳສອນຂອງພະເຈົ້າທີ່ໄດ້ລົງມາບອກລືສີໃນຂະນະທີ່ລືສີບຳເພັນຢູ່ໃນປ່າ ແລ້ວລືສີກໍຈົດຈຳທ່ອງເອົາຄຳສອນເຫຼົ່ານັ້ນ ແລ້ວມາບອກແກ່ຊາວອາລະຍັນ".

ຄຳວ່າ "ເວດ"ຫຼື"ເວທະ"ມາຈາກ "ວິທະ"ແປວ່າ ຄວາມຮູ້ຄວາມສະຫລາດ. ຄຳພີພະເວດເປັນຄຳພີທີ່ໄດ້ປະມວນເອົາຄວາມຮູ້ໃນດ້ານຕ່າງໆໄວ້ຢ່າງຄົບຖ້ວນເຊັ່ນ: ຄວາມຮູ້ໃນການດຳລົງຊີວິດ, ສາສະໜາ, ປັດຊະຍາ, ວັນນະຄະດີ, ກະວີນິພົນແລະເວດມົນກັບຄາຖາຕ່າງໆ. ການສຶກສາປະຫວັດສາດຂອງອິນເດຍສະໄໝບູຮານຕ້ອງໄດ້ອາໄສຄຳພີພະເວດ. ຄຳພີພະເວດປະກອບມີ 4 ຄຳພີຄື: ລຶຄະເວດ, ຍະຊຸລະເວດ, ສາມເວດ ແລະອະຖັນເວດ.

– ລຶຄະເວດ ເປັນຄຳພີວ່າດ້ວຍບົດສູດສັນລະເສີນເທບພະເຈົ້າ, ໄດ້ກ່າວເຖິງຊື່ຂອງເທວະດາໄວ້ຢ່າງຫຼວງຫລາຍເຊັ່ນ: ພະພົມ, ພະອິນ, ພະອັດນີເປັນຕົ້ນ. ຄຳພີດັ່ງກ່າວແຕ່ງເປັນບົດກອນ.

– ຍະຊຸຣະເວດ ເປັນຄຳພີທີ່ຂຽນເປັນຄຳຮ້ອຍແກ້ວ; ເວົ້າກ່ຽວກັບການບູຊາເທບພະເຈົ້າ ແລະເທວະດາ, ການເຮັດພິທີກຳ, ການບູຊາຍັນ, ການບວງສວງເທບພະເຈົ້າ. ລັກສະນະຂອງການບູຊາ, ບວງສວງແບ່ງອອກເປັນສອງປະເພດຄື: ການບູຊາດ້ວຍໄຟ ແລະການບູຊາດ້ວຍຊີວິດ. ນອກຈາກນີ້ ຍະຊຸຣະເວດຍັງໄດ້ຮວບຮວມເອົາບົດຄາຖາສຳລັບໃຊ້ສູດໃນພິທີບູຊາຍັນ, ເວດມົນຮັກສາໂລກ ແລະຕຳຢາທີ່ເຊື່ອວ່າ ເທບພະເຈົ້າເປັນຜູ້ປະທານມາໃຫ້.

– ສາມເວດ ເປັນບົດສູດສຳລັບສັນລະເສີນບຸນຄຸນ ແລະອິດທິລິດຂອງພະເຈົ້າ ໂດຍສະເພາະພະອິນ ແລະສູດໃນພິທີຖວາຍນ້ຳໂສມແກ່ພະອິນເປັນພິທີກຳໃຫຍ່.

– ອາຖັນເວດ ເປັນຄຳພີກ່ຽວກັບຄາຖາອາຄົມ; ໃຊ້ສຳລັບເສກເປົ່າສະເດາະເຄາະເຂັນ, ແກ້ສິ່ງຂຶດງຶດຈັງໄຮ, ນຳເອົາຄວາມສະຫວັດດີ ມີໄຊມາສູ່ຕົນຫລືນຳເອົາຜົນຮ້າຍໃຫ້ແກ່ສັດຕູເພາະເຊື່ອວ່າ ອຳນາດຂອງເທວະດາ ແລະຜີສາງນາງຮ້າຍສາມາດບັນດານທຸກຫຼືສຸກໃຫ້ແກ່ມະນຸດໄດ້.

ຕາມຫລັກຖານທາງວັດຖຸບູຮານໄດ້ສະແດງໃຫ້ຮູ້ວ່າ ຕອນທີ່ພວກອາລະຍັນມາຕັ້ງຫຼັກແຫຼ່ງທຳອິດນັ້ນ, ເຂົາເຈົ້ານັບຖືພະອາທິດມາກ່ອນແລ້ວ. ພະອາທິດດຳລົງຢູ່ໃນຖານເທບພະເຈົ້າຮຽກວ່າ "ສາວິຕຣີ"ເປັນເທບແຫ່ງດວງອາທິດ, ພະວິຣຸນເປັນເທບພະເຈົ້າແຫ່ງຝົນ, ເຮັດໜ້າທີ່ຄຸ້ມຄອງ



yahoo.com
Google.com
Bing.com
Facebook.com

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຈັກກະວານ ເມື່ອເປັນດັ່ງຈິ່ງຖືວ່າພະພົມເປັນພະບິດາຂອງພວກເທວະດາຢູ່ເທິງຟ້າ ແລະເປັນພະບິດາຂອງພວກມະນຸດ. ພະພົມເປັນເທບພະເຈົ້າແຫ່ງຜູ້ສ້າງໂລກ ແລະເທບພະເຈົ້າແຫ່ງສົງຄາມ, ພະຍາຍົມເປັນເທບພະເຈົ້າແຫ່ງຄວາມຕາຍ ເປັນຜູ້ປົກຄອງຊີວິດຫຼັງຄວາມຕາຍຂອງມະນຸດ. ເທບພະເຈົ້າທັງສີ່ອົງນີ້ຖືວ່າເປັນເທບພະເຈົ້າຮຸ່ນທຳອິດຂອງຍຸກພະເວດ.

ໃນຍຸກຕົ້ນຂອງຄຳພີພະເວດ, ກະສັດໃນຍຸກນັ້ນ ກ່ອນຈະຍົກທັບອອກໄປຕໍ່ສູ້ກັບສັດຕູກະສັດຈະຕ້ອງທຳພິທີບວງສວງພະອິນເປັນພິເສດ, ເມື່ອຊະນະສົງຄາມແລ້ວກໍຈັດພິທີບວງສວງເທບພະເຈົ້າອີກເທື່ອໜຶ່ງ. ການບວງສວງນັ້ນຕ້ອງເອົາຜູ້ຍິງທີ່ບໍລິສຸດເປັນຂອງສັງເວີຍ ( ອ້າງໃນອາລະຍະທຳອິນເດຍ, ໜ້າ 115 ).

ພວກອາລະຍັນພະຍາຍາມຄົ້ນຄິດຫາເຫດຜົນຂຶ້ນມາ ເພື່ອໃຫ້ຕົນເອງມີບົດບາດສຳຄັນຫຼາຍຂຶ້ນເຊັ່ນກ່າວວ່າ ທຸກສິ່ງທຸກຢ່າງໃນໂລກມີອຳນາດເລິກລັບ ແລະມີແຕ່ພາມເທົ່ານັ້ນຈະເປັນສື່ກາງລະຫວ່າງມະນຸດກັບພະພົມ ແລະກໍມີແຕ່ພາມເທົ່ານັ້ນທີ່ເປັນຄົນສົມບູນ ເມື່ອຕາຍໄປແລ້ວກໍຈະໄປຢູ່ກັບພະພົມເລີຍ ສ່ວນວັນນະອື່ນຖືວ່າເປັນຄົນບໍ່ສົມບູນ ເວລາຕາຍໄປແລ້ວຈະກັບມາເກີດອີກ ແລະບໍ່ສາມາດທຳພິທີກຳໄດ້ຄືພາມ.

### 3.1.7 ຄວາມເຊື່ອທາງສາສະໜາ

ຄວາມເຊື່ອທາງສາສະໜາໃນອິນເດຍ ເກີດຂຶ້ນຢູ່ໃນຕອນປາຍຂອງຍຸກພະເວດ ເພາະຍຸກນີ້ພາມເປັນກຸ່ມຄົນທີ່ມີອຳນາດຫຼາຍ ເນື່ອງຈາກວ່າ ພາມເປັນຜູ້ທຳພິທີທາງສາສະໜາທີ່ຫຍຸ້ງຍາກສັບສົນຫຼາຍ ເຮັດໃຫ້ວັນນະກະສັດບໍ່ພໍໃຈໃນພິທີກຳອັນຫຍຸ້ງຍາກນັ້ນ ຈຶ່ງເກີດມີການຍາດຊີງອຳນາດກັນ ແລະໄດ້ມີຄົນພະຍາຍາມຄິດຫາທາງແກ້ໄຂບັນຫາທີ່ເກີດຂຶ້ນ ຕໍ່ມາກໍໄດ້ມີສອງແນວຄິດສອງຫຼັກການ ແລ້ວໄດ້ ເກີດສາສະໜາທີ່ສຳຄັນຂອງໂລກຄື ສາສະໜາພຸດກັບສາສະໜາເຊນ. ສາສະດາທັງສອງລ້ວນແຕ່ກຳເນີດໃນວັນນະກະສັດ, ສາສະດາທັງສອງມີຈຸດປະສົງຈະຕໍ່ຕ້ານຄຳພີພະເວດ ບໍ່ໃຫ້ມີຄົນເປັນສື່ກາງລະຫວ່າງມະນຸດກັບເທບພະເຈົ້າ, ຈຸດປະສົງຂອງສາສະດາທັງສອງແມ່ນຍາກເນັ້ນໜັກກ່ຽວກັບສະພາບຈິດໃຈ ແລະເຮັດໃຫ້ຈິດໃຈສະບາຍ ເມື່ອຈິດໃຈສະບາຍແລ້ວກໍສາມາດແກ້ໄຂບັນຫາຕ່າງໆດ້ວຍຕົນເອງໄດ້.

ກ) ສາສະໜາພາມ

ສາສະໜາພາມເປັນສາສະໜາໜຶ່ງທີ່ເກົ່າແກ່ ມີແຫຼ່ງກຳເນີດໃນອາຊີໃຕ້ຄືປະເທດອິນເດຍ ຜູ້ນັບຖືຫຼາຍແມ່ນປະເທດອິນເດຍ ນອກນັ້ນມີປະເທດສີລັງກາ, ອິນໂດເນເຊຍ, ໄທ, ອາຟຣິກາໃຕ້ , ມີຜູ້ນັບຖືທັງໝົດ 475 000 000 ຄົນ. ສາສະໜາພາມຫຼືຮິນດູ ບໍ່ມີສາສະດາຄືສາສະໜາອື່ນເພາະຄຳສອນຕ່າງໆ ກຸ່ມພາມຫຼືລືສີ ໄດ້ຍິນຫຼືໄດ້ຟັງມາຈາກສຽງທິບ ຫຼືສຽງສະຫວັນ ແລ້ວນຳມາ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຈົດຈຳຖ່າຍທອດຕໍ່ໆກັນ ມີຄຳພີພະເວດເປັນພື້ນຖານ, ມີຫຼັກຄຳສອນຄື ຫຼັກອາຄົມສີ່ມີ ພົມມະຈາລີ, ຄະລືຫັດ, ວະນະປະລັດ ແລະສັນຍາສີ່, ມີພິທີກຳ, ພິທີປຸຣຸດູ, ພິທີສັງສະການ, ພິທີໃສ່ສາຍຝ້າຍ, ພິທີແຕ່ງດອງ, ພິທີສະຣາດ, ພິທີສິວາລາຕີ....ສັນຍະລັກຄືເຄື່ອງໝາຍເທວະນາຄະລີນ "ໂອມ" ເປັນຄ□າສັກສິດທີ່ສຸດໃນສາສະໜາພາມ. ແລະມີພະເຈົ້າສາມອົງຄື ພະສິວະ, ພະນາລາຍ ແລະພະພົມ. ມີສາມນິກາຍຄື

ນິກາຍໄວສະນະວະເປັນນິກາຍນັບຖືພະວິສະນຸ ເປັນເທບທີ່ຍິ່ງໃຫຍ່ກວ່າເທບພະເຈົ້າອົງໃດ, ເປັນເທບພະເຈົ້າແຫ່ງທະເລ. ພວກພາມທີ່ນິຍົມພະວິສະນຸຈະແຕ້ມກາທາງຕັ້ງໃສ່ໜ້າຜາກເປັນສີຟ້າເຂັ້ມ ເພື່ອໃຫ້ແຕກຕ່າງກັບພະເຈົ້າອົງອື່ນ.

ນິກາຍໄສວະເປັນນິກາຍທີ່ນັບຖືພະສິວະໃຫຍ່ກວ່າພະເຈົ້າອົງອື່ນ ແລະຍົກໃຫ້ເປັນພະເຈົ້າແຫ່ງພູເຂົາ ທັງຫຼາຍແລະເປັນພະເຈົ້າ "ຈະເລີນພັນ" ໝາຍຄວາມວ່າ ພະສິວະເປັນພະເຈົາທີ່ເຮັດໃຫ້ມະນຸດຂະຫຍາຍພັນ ພວກທີ່ນິຍົມພະສິວະນີ້ຈະແຕ້ມກາຂີດທາງຂວາງໃສ່ໜ້າຜາກເປັນສີຂາວຫຼືສີເທົາ ເປັນເສັ້ນຂີດຕັ້ງສາກຈາກຕີນຜົມຄ້າຍຄືໂຕ "ບ" ໝາຍເຖິງລຶງຄະຂອງພະສິວະ.

ນິກາຍສັກກະຕິເປັນນິກາຍນັບຖືມະເຫສີຂອງເທບທັງສາມຄື ນາງສະລັດວະດີ ( ເມຍພະພົມ), ນາງລັກສະໝີ ( ເມຍພະວິສະນຸ), ນາງອຸມາ (ເມຍພະສິວະ). ການບູຊານິກາຍນີ້ຕ້ອງຕາຍຄໍແກະບູຊາເຈົ້າແມ່ກາລີ ຫຼືເຄື່ອງປະກອບຫ້າຢ່າງມີ ເຫຼົ້າ, ຊີ້ນສັດ, ປາ, ເມັດແປ້ງ ແລະເມຖຸນ.

2) ສາສະໜາພຸດ

ສາສະໜາພຸດເປັນສາສະໜາໜຶ່ງທີ່ມີແຫຼ່ງກຳເນີດໃນອິນເດຍມີຫຼາຍປະເທດນັບຖືເຊັ່ນ ອິນເດຍ, ລາວ, ໄທ, ມຽນມາ, ສີລັງກາ, ຕິເບດ, ເນປານ, ກຳປູເຈຍ, ເກົາຫຼີ, ຍີ່ປຸ່ນ, ຫວຽດນາມ ແລະທະວີບເອີຣົບບາງສ່ວນ. ສະຖິຕິຜູ້ນັບຖືປະມານຫ້າຮ້ອຍລ້ານຄົນ. ມີສາສະດາຊື່ວ່າ ສິທັດຖະ, ມີຄຳພີພະໄຕປິດົກ, ມີຫຼັກຄຳສອນ, ມີສອງນິກາຍຄື ຫີນະຍານ ແລະມະຫາຍານ. ນິກາຍຫີນະຍານແມ່ນຕັ້ງໝັ້ນຢູ່ປະເທດສີລັງກາ,ມຽນມາ, ລາວ, ໄທ ແລະກຳປູເຈຍ; ນິກາຍມະຫາຍານແມ່ນແຜ່ຫຼາຍໃນປະເທດຕິເບດ, ຈີນ, ມົງໂກນ, ຫວຽດນາມ....ສັນຍະລັກຂອງສາສະໜາພຸດຄືກາທຳມະຈັກ ເຊິ່ງໝາຍເຖິງວົງລໍ້ ປະກອບດ້ວຍຊີ່ລໍ້ແປດຊີ່, ແຕ່ລະຊີ່ມີຄວາມໝາຍຂອງອົງຄະຂອງອາລິຍະມັກ (ທັນທາງພົ້ນທຸກ) ວົງລໍ້ທີ່ກິ້ງກັບພື້ນນັ້ນໝາຍເຖິງທຸກ ແລະສະມຸທະໄທ ເຊິ່ງທຸກຄົນເກີດມາແລ້ວຈະຕ້ອງພົບ, ວົງມົນຢູ່ໃຈກາງນັ້ນໝາຍເຖິງຈຸດໝາຍສູງສຸດຄື ນິໂລດ ຫຼືນິພານ, ມີພິທີກຳການບວດ, ການທອດກະຖິນ....

3) ສາສະໜາເຊນ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ສາສະໜາເຊນເປັນສາສະໜາໜຶ່ງທີ່ເກີດຂຶ້ນໃນປະເທດອິນເດຍ ມີຄົນນັບຖືປັດຈຸບັນແມ່ນຢູ່ທຸກລັດຂອງອິນເດຍໃນບໍລິເວນແມ່ນ້ຳຄົງຄາ ມີຄົນນັບຖືປະມານ 2 ລ້ານຄົນ, ບໍ່ໄດ້ເຜີຍແຜ່ອອກນອກປະເທດ.

ສາສະໜາເຊນເກີດກ່ອນສາສະໜາພຸດເລັກນ້ອຍ, ເປັນສາສະໜາທີ່ເກີດຈາກການປະຕິຮູບສາສະໜາພາມ ຫຼືຮິນດູ, ເປັນສາສະໜາທີ່ບໍ່ຍອມເຊື່ອພະເຈົ້າ ແລະປະຕິເສດການເຊື່ອຖືຊົນຊັ້ນວັນນະ, ມີສາສະດາຊື່ວ່າ ມະຫາວີລະ ເປັນນັກບວດເປືອຍກາຍ, ເກີດຂຶ້ນທີ່ເມືອງເວສາລີ ໃນພາກເໜືອຂອງອິນເດຍ. ປະຫວັດຂອງມະຫາວີລະຄ້າຍຄືກັບປະຫວັດຂອງພະພຸດທະເຈົ້າຫຼາຍຈົນເກືອບຈະເປັນຄົນດຽວກັນ, ມີຄຳພີອະຄະມະ ຫຼືສິດທັນຕະ, ມີຫຼັກຄຳສອນອະນຸພົດ ຫຼືບາງເທື່ອເອີ້ນ ປະຕິນຍານ 5 ປະການຄື

- ບໍ່ໃຫ້ບຽດບຽນຄົນອື່ນ
- ບໍ່ໃຫ້ເວົ້າຕົວະ ມີຄວາມຊື່ສັດທັງກາຍ ແລະວາຈາ
- ບໍ່ໃຫ້ເອົາສິ່ງຂອງໃດໆທີ່ຕົນບໍ່ໄດ້ເປັນເຈົ້າຂອງ
- ຄວນປະພຶດແຕ່ສິ່ງດີງາມ ໂດຍການເວັ້ນຈາກການປະພຶດຊົ່ວເຊັ່ນ ການປະພຶດຜິດທາງກາມ ແລະຢູ່ຮ່ວມກັບໂສເພນີ, ດື່ມເຫຼົ້າເສບຢາ.
- ຄວາມບໍ່ໂລບມາກຢາກໄດ້ຂອງຄົນອື່ນ, ພໍໃຈໃນສິ່ງຂອງຂອງຕົນ.

ພິທີກຳຂອງສາສະໜາເຊນມີການບວດ, ການທໍລະມານຕົນໃຫ້ໄດ້ຮັບຄວາມລຳບາກ, ມີສອງນິກາຍຄື ນິກາຍນຸ່ງຜ້າຂາວ ແລະນິກາຍນຸ່ງລົມຫົ່ມຟ້າ. ສັນຍະລັກຂອງສາສະໜາເຊນຄືຮູບປັ້ນຂອງມະຫາວີລະຢູ່ໃນເຮືອນ, ໃນໂບດ ຫຼືໃນວັດເຊນທົ່ວໆໄປຈະມີຮູບປັ້ນຂອງສາສະດາມະຫາວີລະປະດິດສະຖານຢູ່ ແລະມີຫຼາຍທ່າເຊັ່ນ ຢືນ, ນັ່ງ ບາງຮູບກໍຄືພະພຸດທະຮູບຫຼາຍ.

ສະຫຼຸບແລ້ວ ອາລະຍະທຳຂອງອິນເດຍແຜ່ຂະຫຍາຍໄປສູ່ດິນແດນຕ່າງໆໃນທະວີບອາຊີມີສາມທາງຄື: ທາງການຄ້າຂາຍ, ທາງດ້ານການເຜີຍແຜ່ສາສະໜາ ແລະທາງດ້ານການອົບພະຍົບໄດ້ໄປປະສົມປະສານເຂົ້າກັບວັດທະນະທຳພື້ນເມືອງທົ່ວດິນແດນຕ່າງໆຈົນກາຍເປັນສ່ວນໜຶ່ງຂອງສັງຄົມນັ້ນໆ. ພຸດທະສາສະໜານິກາຍມະຫາຍານໃນອິນເດຍໄດ້ມີອິດທິພົນຢ່າງໃຫຍ່ຫຼວງໃນອາຊີຕາເວັນອອກ ໂດຍສະເພາະດ້ານປັດຊະຍາ, ດ້ານແນວຄວາມຄິດ, ຄວາມເຊື່ອພິທີກຳທາງສາສະໜາ ແລະສິລະປະກຳໃນຂະແໜງຕ່າງໆ. ທີ່ຈະແຈ້ງທີ່ສຸດກໍຄືຢູ່ແຖບຕາເວັນອອກສ່ຽງໃຕ້, ອາລະຍະທຳອິນເດຍໄດ້ປະສົມປະສານກັບຄວາມເຊື່ອດັ້ງເດີມໃນທ້ອງຖິ່ນຕ່າງໆຈົນກາຍເປັນພື້ນຖານທີ່ສຳຄັນຂອງວັດທະນະທຳໃນແຖບນີ້ໃນທຸກຍຸກທຸກສະໄໝ ເຊິ່ງປາກົດໃຫ້ເຫັນຕາມສາສະນະສະຖານ ແລະສິລະປະທີ່ເປັນວັດຖຸຂອງປະເທດຕ່າງໆ. ພາສາບາລີ ແລະສັນສະກິດ ເຊິ່ງເປັນພາສາທີ່ໃຊ້ບັນທຶກຄຳສອນຂອງສາສະໜາພຸດ ແລະສາສະໜາຮິນດູໄດ້ກາຍເປັນຮາກຖານ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ອັກສອນສາດ ແລະວັນນະກຳຂອງປະເທດຕ່າງໆໃນອາຊີຕະເວັນອອກສ່ຽງໃຕ້, ມີການແປເລື່ອງພາລະຕະ ແລະເລື່ອງພະລັກພະລາມເປັນພາສາຕ່າງໆເຊັ່ນ: ລາວ, ໄທ, ມຽນມາ, ອິນໂດເນເຊຍ ແລະກຳປູເຈຍເປັນຕົ້ນ.

ຄຳຖາມ: 1) ອາລະຍັນເຂົ້າມາຕັ້ງຖິ່ນຖານໃນອິນເດຍຢູ່ບໍລິເວນໃດ?

– ຈົ່ງອະທິບາຍລັກສະນະເສດຖະກິດ-ສັງຄົມ ແລະການປົກຄອງຂອງອາລະຍັນ?

2) ອາລະຍະທຳອິນໂດ-ອາລະຍັນທີ່ເປັນແມ່ແບບຂອງອາລະຍະທຳຕ່າງໆຄືອັນໃດ? ໃຫ້ອະທິບາຍພ້ອມທັງຍົກຕົວຢ່າງມາປະກອບ?

3) ໃຫ້ອະທິບາຍເຖິງເປົ້າໝາຍຂອງສາສະໜາພຸດ ພ້ອມດ້ວຍຫຼັກທຳໂດຍຫຍໍ້?

24 / VII
ห้ามจำหน่าย

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

## ບົດທີ 4

## ອານະຍະທຳອິນເດຍສະໄໝທີ່ປົກຄອງໂດຍລາຊະວົງ

ຫຼັງຈາກພະພຸດທະເຈົ້າປະລິນິພານ ປະມານ 359 ປີ. ໄດ້ມີລາສະວົງຕ່າງໆເຂົ້າມາປົກຄອງອິນເດຍຢ່າງຫຼວງຫລາຍ ມີທັງກໍ່ຕັ້ງຂື້ນພາຍໃນປະເທດ ແລະມາຈາກນອກປະເທດ. ລາຊະວົງທີ່ສຳຄັນມີ ລາຊະວົງໂມລິຍະ, ລາຊະວົງສັງກະ, ລາຊະວົງກຸສານະ, ລາຊະວົງຄຸປະຕະ, ລາຊະວົງ ປາລະ... ລາຊະວົງທີ່ສຳຄັນທີ່ສຸດໄດ້ແກ່ລາຊະວົງໂມລິຍະ, ລາຊະຄຸປະຕະ ສອງລາຊະວົງນີ້ໄດ້ສ້າງຄວາມຈະເລີນຕ່າງໆໃຫ້ແກ່ອິນເດຍຢ່າງຫຼວງຫລາຍເພາະສາມາດຮອບຮອມແຜ່ນດິນອິນເດຍເກືອບທັງໝົດປະເທດເຂົ້າກັນໃຫ້ເປັນຈັກະພັດພາຍໃຕ້ການປົກຄອງຂອງລັດຖະບານດຽວຄືລາຊະວົງໂມລິຍະແລະລາຊະວົງຄຸປະຕະຊຶ່ງຈະສະເໜີຕໍ່ໄປນີ້.

### 4.1 ລາຊະວົງໂມລິຍະ (321-184 ປີກ່ອນ ຄ.ສ)

ເຮົາຮູ້ເລື່ອງລາວແລະຄວາມຈະເລີນໃນດ້ານຕ່າງໆຂອງລາຊະວົງໂມລິຍະ ແມ່ນໄດ້ຈາກຫຼັກຖານທາງປະຫວັດສາດທີ່ປະກົດຢູ່ໃນປະຈຸບັນມີ 3 ຢ່າງຄື

ກ. ບັນທຶກຂອງທູດເກຼັກຊື່ ເມກາສະທີນິດ ຊຶ່ງເປັນຕົວແທນຂອງເກລັກທີ່ມາປະຈຳຢູ່ໃນເມືອງປາຕາລິບຸດ ເມືອງຫຼວງຂອງລາຊະວົງໂມລິຍະ

ຂ. ຄຳພີອໍລະຖາສາດ. ບໍ່ປາກົດຊື່ຜູ້ແຕ່ງແລະເວລາປະພັນ. ແຕ່ນັກປະຫວັດສາດຍຸກຫຼັງສັນນິຖານວ່າເປັນຜົນງານຂອງເກົາຖິລະຍະ ຜູ້ເປັນມະຫາເສນາບໍດີຂອງລາຊະວົງໂມລິຍະ. ຄຳພີຂອງ ອໍລະຖາສາດ ນີ້ເປັນຕຳລາທາງລັດປະສາສະນະສາດ ວ່າດ້ວຍການປົກຄອງ, ການທູດ, ເສດຖະກິດ ແລະສັງຄົມໃນສະໄໝໂມລິຍະ.

ຄ. ຫຼັກຖານທາງບູຮານວັດຖຸຄື ເສົາສີລາຈາລຶກ ຂອງພະເຈົ້າອະໂສມະຫາລາດຊຶ່ງມີຢູ່ທົ່ວອານາຈັກໂມລິຍະ ຕັ້ງແຕ່ເໜືອເຖິງໃຕ້.

ລາຊະວົງໂມລິຍະໄດ້ຮັບການສະຖາປານາຂື້ນເມື່ອ 321-184 ( ປີກ່ອນ ຄ.ສ ) ຜູ້ຕັ້ງລາຊະວົງຄື ພະເຈົ້າຈັນທະຄຸບຈາກເຜົ່າໂມລິຍະ. ປັດໃຈສຳຄັນທີ່ເຮັດໃຫ້ຈັນທະຄຸບຕັ້ງລາຊາວົງໂມລິຍະສຳເລັດ. ຍ້ອນອິນເດຍສະໄໝນັ້ນບໍ່ມີຄວາມເອກະພາບ ບ້ານເມືອງຕົກຢູ່ໃນຄອບຄົວອ່ອນແອ ( ຖືກຕ່າງຊາດຮຸກຮານຄືພະເຈົ້າອາເລັກຊັນເດີຂອງເກຼັກ ).

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຫຼັງຈາກຂັບໄລ່ຄົນຕ່າງຊາດໃຫ້ອອກໄປຈາກດິນແດນແລ້ວ.ລາຊະວົງໂນລິຍະໄດ້ກາຍເປັນຈັກກະພັດທີ່ຍິ່ງໃຫຍ່ສາມາດຄອບຄຸມອິນເດຍເກືອບໝົດປະເທດ ຍ້ອນຄວາມສາມາດຂອງກະສັດຄືພະເຈົ້າຈັນທະຄຸບ ແລະພະເຈົ້າອະໂສມະຫາລາດ.

### 4.1.1. ລັກສະນະເດັ່ນຂອງການປົກຄອງ.

ການປົກຄອງໃນສະໄໝນີ້ເດັ່ນທີ່ສຸດຄື ແມ່ນໃຊ້ລະບົບປະຊາທິປະໄຕເພາະກະສັດຜູ້ປົກຄອງບໍ່ໄດ້ດຳລົງຕົນຢູ່ໃນຖານະເປັນເທບພະເຈົ້າ.ກົງກັນຂ້າມກັບປົກຄອງເໝືອນເປັນຜູ້ຮັບໃຊ້ປະຊາຊົນ ເອົາໃຈໃສ່ດູແລປະຊາຊົນເປັນຢ່າງດີ ເຫັນປະໂຫຍດຂອງປະຊາຊົນຫຼາຍກວ່າຜົນປະໂຫຍດສ່ວນຕົວ ນອກນັ້ນຍັງໃຫ້ສິດທິແກ່ປະຊາຊົນໃນການຖອດຖອນກະສັດອອກຈາກຕຳແໜ່ງເມື່ອກະສັດປະພຶດຕົວບໍ່ເໝາະສົມ ໃນການບໍລິຫານການປົກຄອງຂອງພະເຈົ້າຈັນທະຄຸບໄດ້ເນັ້ນການປົກຄອງສ່ວນທ້ອງຖິ່ນເປັນສິ່ງສຳຄັນ.ມີການແບ່ງເຂດອອກເປັນເມືອງ,ແຂວງ ແຕ່ລະແຂວງມີຂ້າຫຼວງໃຫຍ່ປົກຄອງ ຂ້າຫຼວງໃຫຍ່ສ່ວນຫລາຍຈະເປັນເຊື້ອພະວົງທີ່ກະສັດໄວ້ວາງໃຈ.

#### ດ້ານການທະຫານ.

ດ້ານການທະຫານກະສັດໄດ້ເປັນແມ່ທັບນຳໜ້າດ້ວຍພະອົງເອງ. ແມ່ທັບນາຍກອງຕ້ອງຖະຫວາຍສັດປະຕິຍານຕົນທະຫານ ແລະໃຫ້ຄວາມຈົ່ງຮັກພັກດີຕໍ່ກະສັດມີກອງທັບເຂັ້ມແຂງທັງທະຫານແລະລົດສູ້ລົບ. ແຕ່ໃນບັ້ນປາຍຂອງພະເຈົ້າຈັນທະຄຸບມີການປ່ຽນແປງໃຫ້ເສນາບໍດີທຳໜ້າທີ່ເປັນແມ່ທັບ ສະນັ້ນຄວາມຈົ່ງຮັກພັກດີຈຶ່ງປ່ຽນໄປຈາກກະສັດແລ້ວໄປຂຶ້ນກັບເສນາບໍດີ.

#### ດ້ານເສດຖະກິດ.

ອາຊີບທີ່ສຳຄັນຂອງລາຊາດອນຄືການກະສິກຳ ລາຍໄດ້ຂອງປະເທດໄດ້ຈາກການເກັບພາສີເພາະຖືວ່າທີ່ດິນເປັນຂອງພະເຈົ້າແຜ່ນດິນ. ຜົນປະໂຫຍດຈາກແຜ່ນດິນຕ້ອງເສຍພາສີໃຫ້ແກ່ລັດມີການທະນຸບຳລຸງຊົນລະປະທານ ເພື່ອເປັນການສົ່ງເສີມການປູກຝັງ,ຕາມເສັ້ນທາງໄດ້ສ້າງບ່ອນພັກໃຫ້ຄົນເດີນທາງແລະໄປສະນີໄວ້ ທາງດ້ານລາຍຈ່າຍສ່ວນຫລາຍແມ່ນຈ່າຍທາງດ້ານການບຳລຸງກອງທັບແລະການປົກຄອງ.

ເມື່ອພະເຈົ້າຈັນທະຄຸບສິ້ນພະຊົນ, ພະເຈົ້າພິນທຸສານ ເປັນຜູ້ສືບລາຊະບັນລັງແທນ ແລະໄດ້ຂະຫຍາຍອານາເຂດໄປທາງຕະເວັນເຂດພູເຂົາວິນໄຊ ທາງໃຕ້ໄດ້ຄອບຄຸມແຖບຮາບສູງເດດຂ່ານເກືອບທັງໝົດ. ລາຊະວົງໂມລິຍະຈະເລີນສູງສຸດໃນສະໄໝພະເຈົ້າອະໂສກມະຫາລາດ. ຊຶ່ງເປັນໂອລົດຂອງພະເຈົ້າພິນທຸສານ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

4.1.2.ພະເຈົ້າອະໂສກມະຫາລາດກັບການທະນຸບຳລຸງພຸດທະສາສະໜາ.

ພະເຈົ້າອະໂສກມະຫາລາດເປັນກະສັດທີ່ຍິ່ງໃຫຍ່ທີ່ສຸດໃນລາຊະວົງໂມລິຍະ ສືບລຳຊະສົມບັດຕໍ່ຈາກບິດາ. ພະເຈົ້າອະໂສກນັບຖືສາສະໜາພາມ ມີນະໂຍບາຍຈະຮວມອິນເດຍໃຫ້ເປັນອັນໜຶ່ງອັນດຽວກັນຕາມນະໂຍບາຍຂອງປູ່ທີ່ໄດ້ວາງແຜນໄວ້ເພື່ອຈະຮວມແຄວັນກາລິງຄະມີການຕໍ່ສູ້ກັນຢ່າງດຸເດືອດແລະມີການລົ້ມຕາຍເປັນຈຳນວນຫຼວງຫຼາຍ. ພະອົງຈຶ່ງຫັນມານັບຖືພຸດທະສາສະໜາ ແລະປ່ຽນການປົກຄອງມາໃຊ້ຫຼັກສັນຕິທຳໃນການປົກຄອງ.

ພະລາຊະກໍລະນີຍະກິດທີ່ສຳຄັນຂອງພະອົງໄດ້ປາກົດໃນອັນນະກຳຕ່າງໆແລະຈາລຶກຂອງພະອົງເອງມີດັ່ງນີ້:

- ພະອົງທຳສົງຄາມຂະຫຍາຍດິນແດນຂຶ້ນໄປທາງເໜືອໄດ້ອາຟການິສະຖານ, ແຄສະເມຍ, ເນປານ, ສິຂິມ ແລະດິນແດນພາກເໜືອທັງໝົດ. ທາງໃຕ້ຂະຫຍາຍເຂດໄປເຖິງແມ່ນ້ຳກິດສະນະ.
- ປົກຄອງລາຊະດອນແບບບິດາປົກຄອງບຸດ.
- ປັບປຸງແກ້ໄຂກົດລະບຽບ ການລົງໂທດຜູ້ກະທຳຜິດໃຫ້ເໝາະສົມ.
- ທະນຸບຳລຸງພຸດທະສາສະໜາ.
- ສົ່ງສະມານະທູດຫຼາຍຄະນະໄປເຜີຍແຜ່ພຸດທະສາສະໜາໃນຕ່າງແດນ.
- ສ້າງສະຖູບສັນຈິທີ່ເມືອງສັນຈິ ເພື່ອບັນຈຸກະດູກຂອງພະພຸດທະເຈົ້າ
- ສ້າງເສົາຫີນຈາລຶກຫຼັກທຳມະຂອງພະພຸດທະສາສະໜາຢ່າງຫຼວງຫຼາຍກະຈາຍຢູ່ທົ່ວອິນເດຍ.
- ສ້າງສັນຍາລັກຕ່າງໆເຊັ່ນ ເສມາທຳມະຈັກ ໝາຍເຖິງການສະແດງປະຖົມເທດສານາ. ດອກບົວໝາຍເຖິງປະສູດ ຕົ້ນໂພໝາຍເຖິງບ່ອນຕັດສະຮູ້.
- ໃນດ້ານສາທາລະນະສຸກໄດ້ສ້າງໂຮງພະຍາບານແລະໂອສົດຫຼາຍແຫ່ງເພື່ອສົ່ງເສີມການແພດ.
- ສັ່ງໃຫ້ເລີກພິທີກຳຕ່າງໆແລະສົ່ງເສີມໃຫ້ປະຊາຊົນປະຕິບັດທຳມະແທນ.
- ອະນຸລັກຊີວິດສັດ,ອອກກົດໝາຍຫ້າມລ່າສັດປ່າແລະຂ້າສັດເຊັ່ນ ນົກຍູງ ເປັນສັນຍາລັກແຫ່ງລາຊະວົງໂມລິຍະ ປັດຈຸບັນນີ້ນົກຍູງໄດ້ກາຍເປັນສັດປະຈຳຊາດຂອງອິນເດຍ.

ສິລະປະກຳໃນສະໄໝພະເຈົ້າອະໂສກມະຫາລາດນີ້ສ່ວນຫຼາຍເປັນປະຕິມະກຳແລະການກໍ່ສ້າງ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

### ກ. ດ້ານການກໍ່ສ້າງ.

ພະເຈົ້າອະໂສກມະຫາລາດໄດ້ເປັນນັກກໍ່ສ້າງທີ່ຍິ່ງໃຫຍ່ຄື ໄດ້ສ້າງສາສະນາສະຖານທາງສາສະໜາພຸດ, ປະສາດລາຊະວັງ, ໂບດ, ວິຫານແລະສະຖູບ ການສ້າງສະຖູບນີ້ໄດ້ສ້າງຊື່ສຽງໃຫ້ພະອົງຫຼາຍໃນສະໄໝນັ້ນ. ເພາະການກໍ່ສ້າງສະໄໝກ່ອນພະເຈົ້າອະໂສກນັ້ນແມ່ນສ້າງດ້ວຍດິນກີ່ແລະໄມ້, ໃນສະໄໝພະເຈົ້າອະໂສກແມ່ນການກໍ່ສ້າງດ້ວຍຫີນເປັນສ່ວນໃຫຍ່. ການກໍ່ສ້າງສະໄໝນີ້ແມ່ນໄດ້ຮັບອິດທິພົນຈາກພວກເປີເຊຍແລະເກຼັກ. ຍ້ອນວ່າຊ່າງສະໄໝນີ້ສ່ວນໃຫຍ່ເປັນຊາວຕ່າງຊາດ(ເປີເຊຍ) ແລະເຂົາເຈົ້າມີຄວາມຊໍານານດ້ານການຕັດ, ຂັດແລະແກະສະລັກຫີນດ້ວຍຄວາມປານີດ. ການກໍ່ສ້າງທີ່ຂື້ນຊື່ຄື: ເສົາຫີນແລະສະຖູບ. ຢູ່ໃນເສົາຫີນນັ້ນໄດ້ຈາລຶກພະທໍາຄໍາສອນໄວ້ແລະໄດ້ຕັ້ງຢາຍໄປຕາມສາຍແດນທົ່ວອານາຈັກ. ສະຖູບສ້າງຂື້ນເພື່ອລໍາລຶກເຖິງປາງປະລິນິພານຂອງພະພຸດທະເຈົ້າ. ສ້າງຂື້ນເປັນຮູບບາດຄວ່ຳຢູ່ເທິງຈອມທາດມີແທນສີ່ລ່ຽມຊຶ່ງສະແດງເຖິງຖານະຂອງກະສັດ ແລະມີຮົ້ວຫີນອ້ອມຮອບໆ ແລະປະຕູທັງ4ທິດມີການແກະສະລັກລວດລາຍຕ່າງໆຊຶ່ງເອີ້ນວ່າ **ສະຖູບສັນຈິ**

### ຂ.ດ້ານປະຕິມາກໍາ.

ການແກະສະລັກຫີນສ່ວນໃຫຍ່ແມ່ນກ່ຽວຂ້ອງກັບສາສະໜາພຸດແລະປະຫວັດເຊັ່ນ ການແກະສະລັກຫົວເສົາ,ແລະແກະສະລັກປະຕູເຂົ້າສະຖູບ.ຫົວເສົາໄດ້ຈາລຶກພະທໍາຂອງພະພຸດທະເຈົ້າ

### 4.1.3. ຄວາມເຊື່ອຂອງລາຊະວົງໂມລິຍະ

ເມື່ອໝົດລາຊະການຂອງພະເຈົ້າອະໂສກມະຫາລາດອານາຈັກອັນຍິ່ງໃຫຍ່ຂອງພະອົງກໍ່ແຕກແຍກແລະເສື່ອມສະລາຍໄປ. ຊຶ່ງມີສາເຫດສໍາຄັນດັ່ງນີ້:

- ນະໂຍບາຍການປົກຄອງແບບທໍາມະຂັດຜົນປະໂຫຍດກັບພວກພາມ
- ກອງທັບອ່ອນແອຫຼາຍ.
- ອານາຈັກກ້ວາງໃຫຍ່ເກີນໄປເບິ່ງແຍງບໍ່ທົ່ວເຖິງ.
- ລັດຖະບານກາງບໍ່ເຂັ້ມແຂງມີຄວາມແຕກແຍກກັນ.
- ຖືກເສນາບໍດີຄິດທໍລະຍົດ

**ສະຫຼຸບລວມແລ້ວ:** ອາລະຍະທໍາອິນເດຍພາຍໃຕ້ການປົກຄອງຂອງລາຊະວົງແມ່ນມີຄວາມຈະເລີນຫຼາຍໃນດ້ານການກໍ່ສ້າງ ແລະປະລິມາກໍາໃນລາຊະວົງນີ້ໄດ້ແຜ່ອານາຈັກຢ່າງກວ້າງຂວາງນັບຕັ້ງແຕ່ທະເລອາລັບຈົນເຖິງອ່າວເບັງກອນ ນັບວ່າເປັນຄັ້ງທໍາອິດໃນປະຫວັດສາດເກີດມີການປົກຄອງທີ່ມີລັດຖະບານດຽວ. ການປົກຄອງຂອງພະເຈົ້າຈັນທະຄຸບປົກຄອງຢ່າງເດັດຂາດແລະຮຸນ

ແຮງ. ແຕ່ໃນສະໄໝພະເຈົ້າອະໂສກແມ່ນໃຊ້ຫຼັກທຳມະໃນພຸດທາສາສະໜາເປັນຫຼັກໃນການປົກຄອງແລະປົກຄອງລາດໃນຮູບແບບບິດາປົກຄອງບຸດ.

### 4.2. ລາຊະວົງຄຸປະຕະ (ຄ.ສ 320-535).

ຫຼັງຈາກລາຊະວົງໂມລິຍະເສື່ອມລົງເປັນເວລາຫຼາຍຮ້ອຍປີ. ໄດ້ມີຊາວຕ່າງຊາດຫຼາຍພວກເຂົ້າມາຮຸກຮານແລະມີຫຼາຍລາຊະວົງພະຍາຍາມສະຖາປະນາປົກຄອງອານາຈັກຂອງຕົນເອງຂຶ້ນມາ. ເຊັ່ນ ລາຊະວົງສັງກະ, ລາສະວົງກຸສະນະ ແຕ່ບໍ່ປະສົບຜົນສຳເລັດ. ມີພຽງລາຊະວົງຄຸປະຕະເທົ່ານັ້ນສາມາດສ້າງອານາຈັກຂອງຕົນເອງໄດ້ສຳເລັດຈົນກາຍເປັນຈັກກະພັດທີ່ຍິ່ງໃຫຍ່ຈົນໄດ້ນາມວ່າ " ຄຸປະຕະສະໄໝທອງຂອງອິນເດຍ." ມີຄວາມຈະເລີນຫຼາຍດ້ານຄື:

#### 4.2.1. ດ້ານການປົກຄອງ

ສະໄໝລາຊະວົງຄຸປະຕະນີ້ແມ່ນໄດ້ນຳເອົາຮູບແບບການປົກຄອງແບບລາຊະວົງໂມລິຍະຄືຂະຫຍາຍອານາເຂດໄດ້ຢ່າງກວ້າງຂວາງ ກະສັດອົງທຳອິດກໍ່ຄືຈັນທະຄຸບທີ່1. ການປົກຄອງຂອງພະເຈົ້າຈັນທະຄຸບທີ່1. ແມ່ນມີສູນກາງຢູ່ເມືອງຫຼວງມີພະເຈົ້າແຜ່ນດິນເປັນປະມຸກແລະມີອຳນາດເດັດຂາດ. ມີການແບ່ງເຂດອອກເປັນແຂວງແຕ່ລະແຂວງມີຫຼາຍເມືອງແລະເຈົ້າເມືອງຕ່າງໆປົກຄອງກັນເອງ.ແລະມີໜ້າທີ່ອ່ອນນ້ອມຖ່ອມຕົວຕໍ່ກະສັດແລະນຳສິ່ງເຄື່ອງບັນນາການໃຫ້ແກ່ສູນກາງ. ໃນລາຊະວົງຄຸປະຕະນີ້ໄດ້ຟື້ນຟູອາລະຍະທຳຂອງຮິນດູທີ່ເສື່ອມລົງມາແຕ່ສະໄໝໂມລິຍະນັ້ນໃຫ້ດີຂຶ້ນອີກ. ແລະກໍ່ໃຫ້ເສລີພາບແກ່ປະຊາຊົນບໍ່ໄດ້ບັງຄັບໃນການນັບຖືສາສະໜາ.

#### 4.2.2.ດ້ານເສດຖະກິດ.

ລາຊະວົງຄຸປະຕະໄດ້ມີການສົ່ງເສີມການຄ້າກັບຕ່າງປະເທດ. ໂດຍສະເພາະແມ່ນການຄ້າທາງທະເລ. ລາຍໄດ້ສ່ວນຫຼາຍແມ່ນໄດ້ມາຈາກການເກັບພາສີຈາກກະສິກຳ ອຸດສາຫະກຳຕຳຜ້າ, ແລະພາສີການຄ້າ, ສູນກາງການຕຳຜ້າຢູ່ທີ່ເບັງກອນ, ຄຸຊະຣັດ, ພາຣານາສີ, ແລະທາງພາກໃຕ້ຂອງປະເທດ. ການຄ້າສ່ວນຫຼາຍແມ່ນໃຊ້ກວຽນເປັນພາຫະນະໃນການຂົນສົ່ງ. ສູນກາງການຄ້າ, ຢູ່ທີ່ເມືອງພາຣານະສີ, ໂກສຳພີ, ສາວັດຖີ, ມິຖິລາ, ໄພສາລີ, ມາຖຸລາ. ສິນຄ້າທີ່ສຳຄັນໄດ້ແກ່ຜ້າຝ້າຍ, ເຂົ້າ, ສາລີ, ເຄື່ອງເທດ, ເພັດແລະພອຍ .......

#### 4.2.3. ສະພາບສັງຄົມ.

ແມ່ນໄດ້ປະຕິຮູບໂຄງສ້າງທາງສັງຄົມ ໄດ້ຈັດລະບຽບທາງສັງຄົມໃໝ່ເຊັ່ນ ລະບົບວັນນະແມ່ນໄດ້ກຳນົດໄວ້ຢ່າງເຄັ່ງຄັດ, ໃຫ້ແຕ່ລະວັນນະຕ້ອງໄດ້ເຮັດໄປຕາມແຕ່ລະອາຊີບຂອງຕົນເທົ່ານັ້ນ. ມາຮອດສະໄໝກາງຂອງລາຊະວົງຄຸປະຕະໂຄງສ້າງແລະກົດຕ່າງໆໃນສັງຄົມແມ່ນ

ພົບຄວາມສັບສົນວຸ້ນວາຍຫຼາຍ ວັນນະສູດບາງຄັ້ງກໍ່ມາທຳໜ້າທີ່ຂອງພາມ, ວັນນະກະສັດກໍ່ມາເປັນນັກບວດຫຼືຄູບາອາຈານໃຫ້ສາສະໜາພຸດໄດ້ເສື່ອມລົງໄປເກືອບໝົດຍ້ອນ. ສາສະໜາຮິນດູໄດ້ມີການພັດທະນາຂື້ນເລື້ອຍໆຈົນໄດ້ກາຍເປັນສາສະໜາປະຈຳຊາດຂອງຊາວອຸປະຕະ.

### 4.2.4. ຄວາມຈະເລີນຮຸ່ງເຮືອງຂອງສະໄໝຄຸປະຕະສະແດງອອກດັ່ງນີ້:

#### 1. ຄວາມຈະເລີນດ້ານການສຶກສາ.

ໃນສະໄໝນີ້ມີຄວາມຈະເລີນຮຸ່ງເຮືອງຫຼາຍເພາະມີມະຫາວິທະຍາໄລທີ່ມີຊື່ສຽງຫຼາຍແຫ່ງເຊັ່ນມະຫາວິທະຍາໄລອຸດເຊນີ ມີຊື່ສຽງດ້ານດາລາສາດ, ມະຫາວິທະຍາໄລອະຊັນຕະ ມີຊື່ສຽງໃນດ້ານສິລະປະກຳ, ມະຫາວິທະຍາໄລພາຣານາສີ ເປັນສູນກາງທາງພຸດທາສາສະໜາ ແລະສາສະໜາພາມ, ມະຫາວິທະຍາໄລນາລັນທາ ເປັນມະຫາວິທະຍາໄລທີ່ມີຊື່ສຽງໂດ່ງດັງໄປທົ່ວໂລກເພາະເປັນມະຫາວິທະຍາໄລທີ່ຮວບຮວມວິຊາ, ຂະແໜງຕ່າງໆໂດຍສະເພາະແມ່ນພະພຸດສາສະໜາປັດຊະຍາ, ສິລະປະກຳ, ສະຖາປັດຕະຍະກຳ, ເສດຕະກຳ.

#### 2. ດ້ານດາລາສາດ.

ດາລາສາດສະໄໝນີ້ຈະເລີນຮຸ່ງເຮືອງຫຼາຍເພາະສາມາດພິສູດໄດ້ວ່າໂລກກົມແລະໂຄຈອນຮອບດວງອາທິດ. ນັກດາລາສາດຜູ້ນີ້ຊື່ວ່າ ອາຣະຍະພັດທະ. ເປັນນັກດາລາສາດທີ່ມີຊື່ສຽງໂດ່ງດັງຫຼາຍຈົນຊາວອິນເດຍຕັ້ງຊື່ດາວທຽມດວງທຳອິດຂອງຕົນວ່າ " ອາຣະຍະພັດທະ. "

#### 3. ດ້ານຄະນິດສາດ.

ມີນັກຄະນິດສາດທີ່ມີຊື່ສຽງຢູ່ 2 ທ່ານຄື ອາຣະຍະພັດທະ ແລະ ພົມມະຄຸບ. ອາຣະພັດທະເປັນທັງນັກດາລາສາດແລະນັກຄະນິດສາດເປັນຜູ້ຄິດຫົດສະວັດໄດ້ເປັນຄົນທຳອິດຂອງໂລກຖືວ່າເປັນມໍລະດົກທີ່ສຳຄັນຂອງໂລກຕໍ່ມາຊາວອາລັບໄດ້ນຳໄປເຜີຍແຜ່ໃນເອີລົບ.

#### 4. ທາງດ້ານວິທະຍາສາດ.

ໄດ້ມີການຄົ້ນພົບວິທີເຮັດສະບູ, ຊີມັງ ແລະປະດິດຫັດຖະກຳຕ່າງໆຢ່າງຫຼວງຫຼາຍແລະໄດ້ເຊື່ອມເຫຼັກໃຫ້ເປັນແຜ່ນດຽວກັນຢ່າງລະອຽດ.

#### 5. ທາງດ້ານການແພດ.

ໃນສະໄໝຄຸປະຕະຖືວ່າໄດ້ຮັບການຍົກຍ້ອງແລະຍອມຮັບວ່າມີວິທີການແລະເຕັກນິກໃນການຮັກສາໂລກສູງ. ໂດຍສະເພາະການຜ່າຕັດມີການຮັກສາຄວາມສະອາດແລະປ້ອງກັນເຊື້ອໂລກຢ່າງ

ດີການ ໃຊ້ຢາປະເພດຕ່າງໆ ຖືວ່າມີຄວາມກ້າວໜ້າຫຼາຍ. ແພດອິນເດຍມີຄວາມສາມາດສູງແລະຮູ້ຈັກໃຊ້ຢາຫຼາຍຂະໜານກ່ອນຊາວເອີລົບແລະຢາບາງຊະນິດຍັງໃຊ້ຮັກສາໂລກຈົນເຖິງປັດຈຸບັນ. ແພດທີ່ມີຊື່ສຽງທີ່ສຸດຄື ອາຣະກະແລະພົມມະຄຸບ ເປັນຜູ້ຊຳນານດ້ານອາຍຸລະເວຊ.

## 6. ດ້ານສິລະປະກຳ.

ມີການສ້າງພະພຸດທະຮູບທົ່ວປະເທດອິນເດຍ. ສິລະປະຄຸປະຕະເປັນສິລະປະທີ່ສວຍງາມແລະເປັນຕົ້ນແບບຂອງການສ້າງພະພຸດທະຮູບຢູ່ຫຼາຍປະເທດໃນອາຊີຕາເວັນອອກແລະອາຊີອາຄະເນ (ການສ້າງພະພຸດທະຮູບຄັ້ງແລກເກີດຂື້ນໃນສະໄໝຄັນທາຣະກ່ອນລາຊະວົງຄຸປະຕະ) ຄອງລາດ.

## 7. ວັນນະຄະດີ.

ວັນນະຄະດີສັນສະກິດແມ່ນຈະເລີນຮຸ່ງເຮືອງໃນສະໄໝຂອງພະເຈົ້າຈັນທະຄຸບທີ່2 ຄື ກະສັດອົງທີ່3 ຂອງລາຊະວົງຄຸປະຕະກະວີທີ່ມີຊື່ສຽງຄື ກາລິທາສະ, ກາລິທາສະເປັນນັກກະວີທີ່ມີຄວາມຮູ້ຫຼາຍໃນການແຕ່ງໂຄງ,ກອນ,ກາບ,ບົດລະຄອນ. ນອກນັ້ນຍັງມີເທບນິຍາຍ,ນິທານແລະນິຍາຍພື້ນເມືອງຕ່າງໆ.

ລາຊະວົງຄຸປະຕະເສື່ອມລົງໃນປີ ຄ.ສ.454 ເປັນຕົ້ນມາຈົນເຖິງ ຄ.ສ 535 ດິນແດນອິນເດຍທີ່ເຄີຍກວ້າງໃຫຍ່ໄພສານໄດ້ແຕກແຍກອອກເປັນແຄວັນເລັກແຄວັນນ້ອຍແລະກໍ່ໄດ້ປິດສາກລົງ.ຄົງເຫຼືອໄວ້ແຕ່ມໍລະດົກທາງອາລະຍະທຳແລະວັດທະນະທຳຕ່າງໆໃນແຜ່ນດິນອິນເດຍ.

ຄຳຖາມ:
1. ການປົກຄອງຂອງພະເຈົ້າອະໂສກມະຫາລາດເປັນປະຊາທິປະໄຕທີ່ສຸດນັ້ນ ພວກເຈົ້າເຂົ້າໃຈແນວໃດ?
2. ຄວາມເສື່ອມຂອງລາຊະວົງໂມລິຍະມີສາເຫດມາຈາກອັນໃດແດ່?

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ບົດທີ 5

## ວັດທະນະທຳອິນເດຍໃນສະໄໝກາງ

ນັບແຕ່ລາຊະວົງຄຸປະຕະໝົດອຳນາດໃນປາຍສະຕະວັດທີ 6 ນັ້ນ ຄວາມເປັນອັນໜຶ່ງອັນດຽວຂອງອິນເດຍກໍໝົດໄປ. ໃນໄລຍະນີ້ຊາວມຸດສະລິມໄດ້ເລີ່ມເຂົ້າມາຮຸກຮານ, ເຮັດໃຫ້ອິນເດຍຂະນະນັ້ນໄດ້ເຖິງຈຸດເສື່ອມໃນທຸກໆດ້ານຄື ດ້ານແນວຄິດ, ດ້ານປັດຊະຍາ, ດ້ານການເມືອງ ແລະຍຸດທະວິທີໃນການເຮັດສົງຄາມ ຕະຫຼອດທັງຄວາມຮູ້ ແລະການຕິດຕໍ່ກັບໂລກພາຍນອກ.

ພວກມຸດສະລິມເຂົ້າຮຸກຮານອິນເດຍໃນສະຕະວັດທີ 7-8, ໄລຍະນີ້ເປັນໄລຍະທີ່ພວກອາຫຼັບໄດ້ຂະຫຍາຍອິດທິພົນໄປທາງຕາເວັນຕົກຜ່ານທາງອັຟຣິກາເໜືອ ເຂົ້າໄປສະເປນ ແລະທາງຕາເວັນອອກຜ່ານທາງປາເລສຕິນ, ເມໂສໂປເຕເມຍ ແລະເປີເຊຍ ແລ້ວເຂົ້າມາໃນເຂດອິນເດຍ, ໃນໄລຍະນີ້ພວກອາຫຼັບຍັງບໍ່ສາມາດເຂົ້າມາປົກຄອງອິນເດຍໄດ້ເທື່ອ, ມີພຽງແຕ່ເຂົ້າມາມີບົດບາດໃນອິນເດຍເທົ່ານັ້ນ.

ມາຮອດສະຕະວັດທີ 11, ພວກມຸດສະລິມໄດ້ເຂົ້າມາຮຸກຮານອິນເດຍຢ່າງໜັກໜ່ວງ ແລະກໍມີມຸດສະລິມຫຼາຍພວກເຊັ່ນ: ພວກເຕີກ ແລະອາຟການໄດ້ເຂົ້າມາຍຶດຄອງບໍລິເວັນແຄວັ້ນປັນຈາບ, ຕໍ່ມາກໍໄດ້ຂະຫຍາຍອານາເຂດໄປເຖິງເດລີ ( ແດນຣີ) ແລະລຸ່ມແມ່ນ້ຳຄົງຄາ. ໃນໄລຍະນີ້ຜູ້ປົກຄອງຂອງມຸດສະລິມກໍໄດ້ສະຖາປະນາຕົນເອງຂຶ້ນເປັນ " ສຸລະຕານ" ແຫ່ງເດລຮີ. ຫຼັງຈາກນັ້ນແບກແດດໄດ້ໝົດອຳນາດໄປໃນປີ ຄສ 1258, ແລ້ວເດລຮີກໍກາຍເປັນສູນກາງຄວາມຈະເລີນທາງດ້ານສິລະປະວັດທະນະທຳແບບອິດສະລາມ (ໂດຍສະເພາະທາງພາກເໜືອ).

ລັກສະນະຂອງວັດທະນະທຳອິນເດຍໃນດ້ານຕ່າງໆໃນສະໄໝສຸລະຕານນີ້ເປັນວັດທະນະທຳແບບປະສົມປະສານລະຫວ່າງຮິນດູແລະມຸດສະລິມຫຼາຍກວ່າ. ເຖິງວ່າ ສຸລະຕານຈະດຳເນີນນະໂຍບາຍການປົກຄອງຢ່າງເດັດຂາດຄື ພະຍາຍາມກຳຈັດຜູ້ຢູ່ນອກສາສະໜາອິດສະລາມເຊັ່ນ: ທຳລາຍໂບດວິຫານຂອງຮິນດູ ແລະພຸດທະສາສະໜາ, ແຕ່ພໍປົກຄອງຢູ່ຫຼາຍປີກໍເຫັນໃຈຊາວຮິນດູຫຼາຍຂຶ້ນ ຈຶ່ງເກີດມີການປະສົມປະສານລະຫວ່າງສອງອາລະຍະທຳຄື ອາລະຍະທຳຊາວມຸດສະລິມ ແລະຊາວຮິນດູ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

## 5.1 ດ້ານການເມືອງ, ເສດຖະກິດ ແລະສັງຄົມ

### 5.1.1 ດ້ານການເມືອງ

ການປົກຄອງໃນສະໄໝສຸລະຕານແຫ່ງເດລຮີນີ້ບໍ່ສາມາດທຽບໄດ້ກັບຄວາມຍິ່ງໃຫຍ່ໃນສະໄໝໂມລີຍະແລະຄຸປະຕະມີມາກ່ອນ ເພາະສຸລະຕານເປັນລາຊະວົງທີ່ຍິ່ງໃຫຍ່ ແຕ່ບໍ່ໄດ້ປົກຄອງອິນເດຍໄດ້ທັງໝົດ. ສູນກາງການປົກຄອງໃນຂະນະນັ້ນແມ່ນຢູ່ທີ່ເດນຮີ ແລະເດນຮີເອງກໍມີການປົກຄອງຫຼາຍລາຊະວົງ. ໃນໄລຍະທຳອິດຂອງສະໄໝສຸລະຕານແຫ່ງເດນຮີ, ສຸລະຕານດຳເນີນການປົກຄອງຢ່າງເດັດຂາດ, ພະຍາຍາມກຳຈັດຜູ້ຢູ່ນອກສາສະໜາອິດສະລາມ. ການປົກຄອງໃນໄລຍະນີ້ໄດ້ເນັ້ນຄວາມສຳຄັນຂອງສະຖາບັນກະສັດໃຫ້ສູງ, ຖືວ່າ ຜູ້ສູງສຸດໃນສາສະໜາອິດສະລາມຄື ສາສະດາ, ຕໍ່ຈາກສາສະດາລົງມາຜູ້ຍິ່ງໃຫຍ່ທີ່ສຸດຄື ສຸລະຕານ. ດັ່ງນັ້ນ ສຸລະຕານຈຶ່ງມີອຳນາດເດັດຂາດທັງການປົກຄອງ ແລະສາສະໜາ. ສຳລັບການປົກຄອງແຕ່ລະພາກນັ້ນກໍໄດ້ແຕ່ງຕັ້ງເສນາຊັ້ນຜູ້ໃຫຍ່ອອກໄປປົກຄອງ.

ມາເຖິງປະມານສະຕະວັດທີ 14, ລັກສະນະການປົກຄອງມີການປ່ຽນແປງ ອຳນາດຂອງສູນກາງທີ່ເຄີຍແຂງແກ່ນນັ້ນ ເລີ່ມອ່ອນແອລົງ ເພາະຖືກຮຸກຮານຈາກພວກມຸດສະລິມອີກເຊື້ອສາຍໜຶ່ງຄື ລາຊະວົງໂມກຸນ ແລະລາຊະວົງນີ້ກໍເປັນລາຊະວົງສຸດທ້າຍຂອງອິນເດຍ.

### 5.1.2 ດ້ານເສດຖະກິດ

ດ້ານເສດຖະກິດ, ລັດຖະບານບໍ່ມີນະໂຍບາຍເສດຖະກິດທີ່ແນ່ນອນ, ບໍ່ໄດ້ມີການວາງແຜນເພື່ອຍົກລະດັບທາງເສດຖະກິດ ຫຼືລະດັບການຄອງຊີບຂອງປະຊາຊົນ. ນະໂຍບາຍທາງເສດຖະກິດມີຈຸດມຸ່ງໝາຍເພື່ອຜົນປະໂຫຍດທາງການເມືອງຂອງຜູ້ປົກຄອງເປັນຫຼັກ. ປະຊາຊົນສ່ວນຫຼາຍມີອາຊີບທາງກະສິກຳ. ລາຍໄດ້ຫຼັກຂອງລັດກໍຄືພາສີທີ່ດິນ ແລະຍັງມີພາສີອີກປະເພດໜຶ່ງຄືພາສີທີ່ເກັບຈາກຜູ້ທີ່ບໍ່ໄດ້ເປັນມຸດສະລິມ ເຊິ່ງເປັນຜົນຕອບແທນຈາກການທີ່ຄົນເຫຼົ່ານີ້ໄດ້ຮັບການປົກປ້ອງຊີວິດ ແລະຊັບສິນ.

### 5.1.3 ດ້ານສັງຄົມ

ໃນໄລຍະນີ້ຖືວ່າເປັນຈຸດປ່ຽນແປງທີ່ສຳຄັນຈຸດໜຶ່ງຄື ເລີ່ມມີຜູ້ນັບຖືສາສະໜາອິດສະລາມເປັນຈຳນວນຫຼວງຫຼາຍ ເຊິ່ງແຕ່ກ່ອນຊາວອິນເດຍນັບຖືສາສະໜາຮິນດູເປັນຫຼັກ. ເມື່ອພວກມຸດສະລິມເຂົ້າມາອິນເດຍ, ຜູ້ນັບຖືສາສະໜາອິດສະລາມກໍເພີ່ມເປັນຈຳນວນຫຼວງຫຼາຍ, ສາເຫດສຳຄັນທີ່ເຮັດໃຫ້ພວກຮິນດູຫັນມານັບຖືສາສະໜາອິດສະລາມຄື ບໍ່ຢາກເສຍພາສີຫຼາຍ ເພາະຜູ້ໃດທີ່ບໍ່ໄດ້ນັບຖືສາສະໜາອິດສະລາມຈະໄດ້ເສຍພາສີຫຼາຍທີ່ສຸດ. ອີກດ້ານໜຶ່ງສາສະໜາອິດສະລາມບໍ່ໄດ້ມີ

ການແບ່ງຊັ້ນວັນນະ, ພວກຖືສາສະໜາອິດສະລາມທຸກຄົນລ້ວນແຕ່ເປັນພີ່ນ້ອງກັນ, ມີສິດເທົ່າທຽມກັນ ແລະມີຫຼັກການປະຕິບັດທີ່ງ່າຍຕໍ່ການນັບຖື. ພວກຮິນດູທີ່ມີວັນນະຕ່ຳພໍໃຈໃນແນວຄິດແບບນີ້ຈຶ່ງຫັນມານັບຖືສາສະໜາອິດສະລາມ. ນອກຈາກນັ້ນຕຳແໜ່ງສູງທາງລາຊະການກໍເປັນສິດພິເສດຂອງພວກມຸດສະລິມ. ສະນັ້ນຈຶ່ງເຮັດໃຫ້ຊາວຮິນດູແລະຊາວມຸດສະລິມຢູ່ໃນສັງຄົມອິນເດຍຮ່ວມກັນ ແລະມີການປະສົມປະສານທາງດ້ານຂະນົບທຳນຽມປະເພນີເຊັ່ນ:

**ກ) ດ້ານພາສາ**: ໃນໄລຍະທຳອິດພວກມຸດສະລິມໄດ້ນຳເອົາພາສາຕ່າງຊາດທີ່ເຄີຍໃຊ້ເຂົ້າມາເຊັ່ນ: ພາສາເປີເຊຍ, ແຕ່ຊາວຮິນດູກໍໄດ້ຕໍ່ຕ້ານຢ່າງຮຸນແຮງ. ຕໍ່ມາຈຶ່ງເກີດມີພາສາໃໝ່ຄືພາສາອູຣະດູ ເຊິ່ງເປັນພາສາປະສົມປະສານກັບພາສາເປີເຊຍກັບພາສາອາຣະບິດ, ເຕີກ, ສັນສະກິດ ແລະຮິນດີ. ປັດຈຸບັນພາສາອູຣະດູເປັນສາພາຫຼັກທີ່ໃຊ້ຢູ່ປາກີສະຖານ.

**ຂ) ດ້ານຂະນົບທຳນຽມປະເພນີ**: ການປະສົມປະສານທາງດ້ານຂະນົບທຳນຽມປະເພນີລະຫວ່າງຊາວຮິນດູ ແລະຊາວມຸດສະລິມແມ່ນມີຕັ້ງແຕ່ຂັ້ນລາຊະສຳນັກຈົນເຖິງລະດັບສາມັນຊົນເຊັ່ນກັນ. ຊາວຮິນດູຮັບເອົາອິດທິພົນຈາກຊາວມຸດສະລິມເຊັ່ນ ປະເພນີການຄຸມໜ້າຂອງຜູ້ຍິງ,ການມີທາດ,ຍຸດທະວິທີໃນການຮົບ....ຊາວມຸດສະລິມກໍຮັບເອົາປະເພນີການແຕ່ງກາຍຕາມແບບອິນເດຍເຊິ່ງເໝາະສົມກັບສະພາບແວດລ້ອມຂອງດິນຟ້າອາກາດ, ປະເພນີການຊຳລະຮ່າງກາຍໃຫ້ສະອາດບໍລິສຸດ ກ່ອນຈະມີການປະກອບພິທີກຳຄືກັບພວກຮິນດູເປັນຕົ້ນ.

## 5.2 ການສະແດງອອກທາງດ້ານສິລະປະ

ສິລະປະອິນເດຍໃນຍຸກນີ້ ປາກົດໃຫ້ເຫັນຢ່າງຈະແຈ້ງໃນດ້ານສະຖາປັດຕະຍະກຳຫຼາຍກວ່າໝູ່. ເຊິ່ງກໍມີລັກສະນະຂອງການປະສົມປະສານລະຫວ່າງສິລະປະຮິນດູ ແລະອິດສະລາມເຊັ່ນດຽວກັນ. ລັກສະນະການປະສົມປະສານດັ່ງກ່າວມີສາເຫດຫຼາຍປະການຄື ພວກມຸດສະລິມເຂົ້າມາອິນເດຍສ່ວນຫຼາຍເປັນພວກທະຫານ ແລະຜູ້ປົກຄອງ, ບໍ່ມີຊ່າງສີມື ຈຶ່ງຈຳເປັນຕ້ອງໃຊ້ຊ່າງຮິນດູກໍ່ສ້າງທາງດ້ານວຽກງານສິລະປະ; ໄລຍະທຳອິດຂອງສະໄໝສຸລະຕານແຫ່ງເດນຣີ ທີ່ມີການທຳລາຍໂບດວິຫານຂອງພວກຮິນດູຢູ່ນັ້ນ ສຸລະຕານໄດ້ໄດ້ສ້າງວັງ, ຫຼຸມຝັງສົບ ຫຼືສິ່ງກໍ່ສ້າງອື່ນເຊິ່ງໃຊ້ວັດສະດຸບາງສ່ວນທີ່ໄດ້ຈາກການທຳລາຍສາສະນະສະຖານຂອງພວກຮິນດູ; ນອກຈາກນັ້ນຍັງມີການດັດແປງໂບດວິຫານຂອງພວກຮິນດູໃຫ້ເປັນຂອງພວກມຸດສະລິມໂດຍເພີ່ມການຕົບແຕ່ງທີ່ເປັນສັນຍະລັກຂອງສາສະໜາອິດສະລາມເຂົ້າໄປ. ດ້ວຍເຫດຜົນຕ່າງໆເຫຼົ່ານີ້ ຈຶ່ງເຮັດໃຫ້ມີການປະສົມປະສານຂອງສາສະໜາຮິນດູແລະອິດສະລາມໃນໄລຍະນີ້. ລັກສະນະຂອງສິລະປະຮິນດູໃນສະຖາປັດຕະຍະກຳໃນຍຸກນີ້ມີປັດຊະຍາຊ້ອນແຝງຢູ່ເຊັ່ນ: ແຜນຜັງຂອງອາຄານເປັນລັກສະນະສີ່ຫຼ່ຽມທີ່ບັນຈຸຢູ່ໃນວົງກົມ ເຊິ່ງໝາຍເຖິງຮູບຂອງໂລກ, ມີຫໍຄອຍທີ່ຮຽກວ່າ ສິຂະຣະ (ແປວ່າພູເຂົາ) ໃຫ້ຄວາມໝາຍຂອງຫໍຄອຍວ່າ ເສົາລະຫວ່າງສະຫວັນ ແລະໂລກມະນຸດ. ສ່ວນ

24/VII

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ລັກສະນະສິລະປະອິດສະລາມນັ້ນ ທີ່ສຳຄັນຄືແຜນຜັງຂອງອາຄານມີລັກສະນະກົ່ງໂຄ້ງກວມເອົາທໍຄອຍ, ສ່ວນຝາຜະນັງມີລັກສະນະລຽບໆ, ບໍ່ມີການຕົບແຕ່ງ.

ຮູບ Q u t b m i n a r ໃນເດນຮີ, ສະຖາປັດຕະຍະກຳອິດສະລາມໄລຍະແຮກໃນອິນເດຍ, ສ້າງຂຶ້ນປະມານ ຄສ 1230 ສັນນິຖານວ່າ ສ້າງເພື່ອເປັນອະນຸສອນແຫ່ງໄຊຊະນະຂອງສຸລະຕ່ານແຫ່ງເດນຮີ.



ດ້ານວັນນະກຳກໍມີລັກສະນະປະສົມປະສານລະຫວ່າງຮິນດູ ແລະອິດສະລາມຄືກັນກັບດ້ານອື່ນໆເຊັ່ນ: ມີການແປວັນນະກຳຂອງຮິນດູ ແລະອິດສະລາມ. ທາງລາຊະສຳນັກໄດ້ໃຫ້ການອຸປະຖຳວັນນະກຳອິດສະລາມ ໂດຍເອົາວັນນະກຳຂອງເປີເຊຍ ແລະອາຫຼັບເປັນຕົ້ນແບບ, ນອກຈາກນັ້ນກໍໄດ້ແປຕຳລາທີ່ສຳຄັນໆທີ່ເປັນພາສາສັນສະກິດໃຫ້ເປັນພາສາເປີເຊຍເຊັ່ນ: ຕຳລາແພດ, ປັດຊະຍາ ແລະຕຳລາກ່ຽວກັບດາລາສາດເປັນຕົ້ນ ( ອ້າງໃນ ອາລະຍະທຳສະໄໝບູຮານ-ສະໄໝກາງ, 254 ).

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

**ເວົ້າລວມແລ້ວ** ອິນເດຍໃນສະໄໝກາງນີ້ຈະເຫັນໄດ້ວ່າເປັນຈຸດເລີ່ມຕົ້ນຂອງພວກມຸດສະລິມເຂົ້າມາໃນອິນເດຍ, ເຮັດໃຫ້ສັງຄົມອິນເດຍທີ່ເປັນສັງຄົມເກົ່າແກ່ ແລະຍິ່ງໃຫຍ່ຂອງພວກຮິນດູນັ້ນ ກາຍເປັນສັງຄົມທີ່ປະກອບດ້ວຍກຸ່ມຄົນ 2 ກຸ່ມທີ່ມີສາສະໜາຕ່າງກັນຄື ຮິນດູ ແລະມຸດສະລິມ. ໃນໄລຍະນີ້ລັກສະນະຕ່າງໆທາງການເມືອງ, ເສດຖະກິດ, ສັງຄົມ ແລະສິລະປະຈະເປັນໄປໃນທາງດຽວກັນຄື ການປະສົມປະສານລະຫວ່າງອິດທິພົນຂອງພວກຮິນດູ ແລະມຸດສະລິມເຂົ້າກັນໄດ້ດີ. ເວລາຜ່ານໄປເຫິງນານຮິນດູ ແລະມຸດສະລິມກໍມີຄວາມຂັດແຍ້ງກັນໃນປະເດັນຕ່າງໆຫຼາຍຂຶ້ນ ຈົນຮອດຫຼັງສົງຄາມໂລກຄັ້ງທີ 2. ເມື່ອອິນເດຍໄດ້ຮັບເອກະລາດຈາກອັງກິດ ສັງຄົມອິນເດຍທີ່ມີຊາວຮິນດູແລະມຸດສະລິມນັ້ນ ບໍ່ສາມາດຮ່ວມກັນໄດ້ ຈຶ່ງເກີດມີການແບ່ງປະເທດເປັນອິນເດຍ ແລະປາກີສະຖານ (ຕາເວັນຕົກ ແລະຕາເວັນອອກ) ຍ້ອນພື້ນຖານຂອງຄວາມແຕກຕ່າງທາງສາສະໜາຂອງປະຊາຊົນເປັນປັດໄຈສຳຄັນ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

## ບົດທີ 6

## ວັດທະນະທຳຈີນບູຮານ

### 6. ຄວາມເປັນມາຂອງວັດທະນະທຳຈີນໂດຍສັງເຂບ

ຈີນເປັນປະເທດໜຶ່ງທີ່ມີວັດທະນະທຳ,ອາລະຍະທຳທີ່ຍິ່ງໃຫຍ່,ເກົ່າແກ່,ແລະຈະເລີນຮຸ່ງເຮືອງຂຶ້ນຢ່າງລຽນຕິດ ແຕ່ກໍມີຄວາມຈະເລີນລຸນຫຼັງວັດທະນະທຳອິນເດຍ. ຈີນມີປະຊາກອນຫຼາຍກວ່າໝູ່ໃນໂລກ, ວັດທະນະທຳຈີນໄດ້ກໍ່ຕົວຂຶ້ນເປັນຄັ້ງທຳອິດໃນເຂດບໍລິເວນແມ່ນ້ຳຮວງໂຮ. ແມ່ນ້ຳນີ້ໄຫລຜ່ານຈາກທິດຕາເວັນຕົກໄປຫາທິດຕາເວັນອອກ ແລ້ວລົງສູ່ທະເລເຫຼືອງ ແລະມະຫາສະໝຸດປາຊີຟິກ. ວັດທະນະທຳຈີນໄດ້ຮັບອິດທິພົນຈາກໂລກພາຍນອກໜ້ອຍທີ່ສຸດ ເນື່ອງຈາກວ່າທິດຕາເວັນອອກຕິດກັບມະຫາສະໝຸດປາຊີຟິກ, ທາງໃຕ້ເຕັມໄປດ້ວຍພູເຂົາປ່າດົງດິບຂອງອິນເດຍ , ມຽນມາ ແລະອິນໂດຈີນ, ສ່ວນທາງທິດຕາເວັນຕົກ ແລະທິດເໜືອກໍເປັນເຂດທົ່ງຫຍ້າ, ທະເລຊາຍ ແລະພູເຂົາ. ເວົ້າລວມແລ້ວ ຈີນເປັນສູນກາງຂອງໂລກ ຫຼືອານາຈັກກາງ ( Middle Kingdom ) ເຊິ່ງເປັນແຫຼ່ງກຳເນີດຂອງຄວາມຈະເລີນຕ່າງໆ. ບໍລິເວນທີ່ອຸດົມສົມບູນ ເປັນແຫຼ່ງຂອງຄວາມຈະເລີນຂອງວັດທະນະທຳຈີນໄດ້ແກ່ບ່ອນຮາບພຽງຂອງແມ່ນ້ຳຮວງໂຮ ແລະແມ່ນ້ຳຢັງຊີກຽງ ກັບບ່ອນຮາບພຽງລຸ່ມແມ່ນ້ຳນ້ອຍໆອີກສາຍໜຶ່ງຄືແມ່ນ້ຳແຢງຊີ ທີ່ຢູ່ທາງຕອນໃຕ້ຂອງຈີນ. ເຊິ່ງໄດ້ຄົ້ນພົບຫຼັກຖານຢູ່ເຂດເມືອງຢາງເຊົາ (Yang chow) ໃນເຂດມົນທົນໂຫນານ (Honan) ແລະເຂດເມືອງລຸງຊັນ (Lungshan) ໃນເຂດມົນທົນຊານຕຸງ ເຊິ່ງເອີ້ນວ່າ ວັດທະນະທຳຢາງເຊົາ ແລະລຸງຊັນ, ເພາະວ່າຢູ່ເຂດນີ້ເຂົາເຈົ້າໄດ້ຂຸດພົບວັດຖຸບູຮານທີ່ມີອາຍຸເກົ່າແກ່ປະມານ 2000 ປີ ກ່ອນ ຄ ສ, ເຊິ່ງເປັນເຄື່ອງໃຊ້ທີ່ເຮັດດ້ວຍຫີນ, ທອງສຳລິດ, ກະດູກສັດ ແລະຄົ້ນພົບຮ່ອງຮອຍຂອງມະນຸດປັກກິ່ງ.

### 6.1 ວັດທະນະທຳຈີນສະໄໝເລີ່ມຕົ້ນ

ວັດທະນະທຳຈີນສະໄໝເລີ່ມຕົ້ນເກີດຂຶ້ນບໍລິເວນທີ່ຮາບພຽງແມ່ນ້ຳຮ່ວງໂຮແລະຂະຫຍາຍລົງໄປທາງພາກກາງແລະພາກໃຕ້ຂອງປະເທດພາກເໜືອເປັນເຂດກະສິກຳສາມາດຕິດຕໍ່ກັບອາຊີຕາເວັນຕົກ ຈຶ່ງມີຜູ້ສັນນິຖານວ່າ ວັດທະນະທຳສະໄໝເລີ່ມຕົ້ນນີ້ໄດ້ຮັບອິນທິພົນຈາກອາຊີຕາເວັນຕົກ ນັກປະຫວັດສາດບາງທ່ານສັນນິຖານວ່າເກີດຂຶ້ນໃນປະເທດຈີນໂດຍແທ້ເພາະໄດ້ຄົ້ນພົບເຄື່ອງປັ້ນດິນເຜົາຊຶ່ງເປັນຫລັກຖານສຳຄັນໃນການຄົ້ນຄວ້າເຊັ່ນວັດະນະທຳຢາງເຊົາແລະວັດທະນະທຳຫລຸງຊານ.

ກ່ຽວກັບການກຳເນີດຂອງອາລະຍະທຳຈີນສະໄໝເລີ່ມຕົ້ນມີຕຳນານເລົ່າກັນມາດັ່ງນີ້:
ເລື່ອງທຳອິດຕຳນານການກຳເນີດຂອງຈີນ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຈີນກຳເນີດມາຕັ້ງແຕ່ເມື່ອໂລກແຕກແຍກອກມາຈາກສະຫວັນ, ຈາກນັ້ນກໍມີເທບພະເຈົ້າຫຼາຍອົງຕ່າງກໍມາຊ່ວຍກັນສ້າງຄວາມຈະເລີນໃຫ້ແກ່ຈີນເຊັ່ນ: ສ້າງໄຟ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສ ແລະເຄື່ອງມືໃນການລ່າສັດ. ຈາກນັ້ນຊຸມຊົນກໍໄດ້ຂະຫຍາຍຕົວຂຶ້ນ. ປະມານ 2000 ປີ ກ່ອນ ຄ ສ ກໍມີຫວັງຕີ ເຊິ່ງເປັນຫົວໜ້າກຸ່ມຊົນນັ້ນ ຕັ້ງຕົວເປັນໃຫຍ່ ກໍ່ຕັ້ງລາຊະວົງຂຶ້ນປົກຄອງຊາວຈີນ.

ຕຳນານທີ 2 ເປັນເລື່ອງກ່ຽວກັບມະນຸດປັກກິ່ງ, ເປັນຄວາມເຊື່ອທີ່ຕັ້ງກັນຂຶ້ນມາຕາມຂໍ້ມູນທີ່ໄດ້ມາຈາກການຂຸດຄົ້ນພົບໂຄງກະດູກຂອງມະນຸດປັກກິ່ງ ທີ່ເມືອງນ້ອຍແຫ່ງໜຶ່ງທາງພາກໃຕ້ຂອງນະຄອນປັກກິ່ງໃນປີ ຄສ 1927. ຈຶ່ງເຊື່ອວ່າຊາວຈີນໄດ້ກຳເນີດມາຕັ້ງແຕ່ປະມານ 350000 ຫາ 400000 ປີ. ຄວາມຈະເລີນສະໄໝນີ້ ຊາວຈີນໄດ້ຮູ້ຈັກນຳໃຊ້ກ້ອນຫີນມາດັດແປງເປັນເຄື່ອງມືສຳລັບລ່າສັດ ແລະເອົາມາໄວ້ປ້ອງກັນຕົວ, ຮູ້ຈັກນຳໃຊ້ໄຟເຂົ້າໃນການດຳເນີນຊີວິດ.

ຕຳນານທີ 3 ໄດ້ແກ່ຕຳນານທາງດ້ານສັງຄົມວິທະຍາ ແລະມະນຸດວິທະຍາເວົ້າວ່າ ຈີນກຳເນີດຂຶ້ນໃນຍຸກຫີນໃໝ່ ເມື່ອປະມານ 4000 ປີກ່ອນ ຄສ ນີ້ເອງ. ໂດຍມີສູນກາງຢູ່ຕາມລຸ່ມແມ່ນ້ຳເຫຼືອງ ທີ່ເຕັມໄປດ້ວຍຄວາມອຸດົມສົມບູນ. ຄວາມເຊື່ອນີ້ໄດ້ສອດຄ່ອງກັບຫຼັກຖານວັດຖຸບູຮານເຊັ່ນ: ເຄື່ອງປັ້ນດິນເຜົາ ແລະຫຼັກຖານອື່ນໆ.

**1) ວັດທະນະທຳລີ້ ແລະວັດທະນະທຳສ້ຽນ**: ເປັນວັດທະນະທຳເຄື່ອງປັ້ນດິນເຜົາຮຸ່ນທຳອິດທີ່ຄົ້ນພົບຢູ່ຈີນ. ແຫຼ່ງທີ່ພົບແມ່ນຢູ່ທາງພາກຕາເວັນອອກສ່ຽງເໜືອ, ມີອາຍຸປະມານ 4000 ປີ ກ່ອນ ຄສ, ລັກສະນະເດັ່ນຂອງເຄື່ອງປັ້ນດິນເຜົາລີ້ເປັນເຄື່ອງປັ້ນດິນເຜົາທີ່ເປັນພາຊະນະໃນການຕົ້ມເຂົ້າ, ມີ 3 ຂາ. ສ່ວນວັດທະນະທຳເຄື່ອງປັ້ນດິນເຜົາສ້ຽນເປັນອຸປະກອນຄ້າຍຄືກະຊອນ. ນັກຄົ້ນຄວ້າຈຶ່ງສັນນິຖານວ່າ ວັດທະນະທຳເຄື່ອງປັ້ນດິນເຜົາລີ້ ມີໄວ້ເພື່ອໃຊ້ໃນການທຸງຕົ້ມ, ສ່ວນວັດທະນະທຳເຄື່ອງປັ້ນດິນເຜົາສ້ຽນ ມີໄວ້ເພື່ອໃຊ້ໃນການໜຶ້ງຫຼາຍກວ່າ.

**2) ວັດທະນະທຳຢາງເຊົາ ແລະວັດທະນະທຳຫລຸງຊານ**

ວັດທະນະທຳສະໄໝນີ້ເອີ້ນວ່າ ວັດທະນະທຳເຄື່ອງປັ້ນດິນເຜົາ, ມີອາຍຸປະມານ 2000-1000 ປີກ່ອນ ຄສ. ເຄື່ອງປັ້ນດິນເຜົາຢາງເຊົາພົບຫຼາຍໃນແຂວງໂຫນານ (Honan) ທາງພາກຕາເວັນຕົກສ່ຽງເໜືອ. ລັກສະນະເດັ່ນຂອງເຄື່ອງປັ້ນດິນເຜົາໃນສະໄໝນີ້ມີການແຕ້ມສີເພີ່ມຄວາມສວຍງາມເຂົ້າໄປ ເຊິ່ງມີທັງສີແດງ, ສີຂາວ, ສີດຳ ແລະສີນ້ຳຕານ. ນອກຈາກນີ້ ຍັງມີການແຕ້ມຮູບສັດ, ເຄື່ອງມືໃນການລ່າສັດ ເຊິ່ງເປັນເຄື່ອງປັ້ນດິນເຜົາທີ່ມີຄວາມສວຍງາມ ແລະທົນທານທີ່ສຸດ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ



ໝໍ້ດິນເຜົາວັດທະນະທຳຢາງເຊົາ ໃນຍຸກຫີນໃໝ່, ແຕ້ມລວດລາຍເປັນຫົວຄົນ



ໂຖດິນເຜົາວັດທະນະທຳຢາງເຊົາໃນຍຸກຫີນໃໝ່

ສ່ວນວັດທະນະທຳລຸງຊັນພົບຫຼາຍໃນເມືອງຫລຸງຊານແຂວງຊານຕຸງ ທາງພາກຕາເວັນອອກຂອງປະເທດ,ລັກສະນະເດັ່ນຂອງວັດທະນະທຳລຸງຊັນຈະຜິດໄປຈາກແບບຂອງວັດທະນະທຳຢາງເຊົາຄື ພື້ນລຽບມີລັກສະນະເຫລື້ອມມັນ, ບໍ່ທາສີ, ບໍ່ມີການປະດັບປະດາ, ຮູບຮ່າງຂອງເຄື່ອງປັ້ນກໍບໍ່ປານິດປານໃດ ແລະຄວາມທົນທານກໍບໍ່ມີ ຈະແຕກຫັກງ່າຍ. ນັກບູຮານຄະດີສັນນິຖານວ່າວັດທະນະທຳລຸງຊານນີ້ແມ່ນບັນພະບຸລຸດຂອງຊາວຈີນທີ່ສ້າງເຄື່ອງປັ້ນດິນເຜົາຂອງຈີນຕໍ່ໆມາ. ຈີນເຖິງວັດທະນະທຳຍຸກທອງສຳລິດເຊັ່ນ ການປັ້ນຫລໍ່ ພາຊະນະສາມຂາສຳລັບໃຊ້ໃນພິທີກຳທາງສາສະໜາເຊິ່ງຜະລິດດ້ວຍທອງສຳລິດ ໃນສະໄໝຕໍ່ມານັກບູຮານຄະດີສັນນິຖານວ່າ ມະນຸດໃນສະໄໝຫລຸງຊານນີ້ ອາດຈະຢູ່ກະແຈກກະຈາຍເຊັ່ນ ຢູ່ຊົນນະບົດ, ຢູ່ຕາມເປີ້ນພູ ຫລື ຢູ່ໃກ້ແມ່ນ້ຳ. ນອກຈາກນີ້ ຍັງໄດ້ຂຸດພົບໃນບໍລິເວນພາກກາງແລະພາກໃຕ້ຂອງແມ່ນ້ຳແຍງຊີ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ



ພາຊະນະທອງສຳລິດໃສ່ເຫຼົ້າ,
ຕົບແຕ່ງຝາເປັນຮູບສັດຊະນິດຕ່າງໆ



ໂຖດິນເຜົາ 3 ຂາສີຂາວ,
ວັດທະນະທຳລຸງຊັນໃນຍຸກຫີນໃໝ່

ນອກຈາກການຂຸດພົບວັດທະນະທຳເຄື່ອງປັ້ນດິນເຜົາ 2 ຊະນິດແລ້ວ, ຍັງພົບອີກວ່າ ຊາວຈີນໃນສະໄໝນີ້ເປັນສະໄໝສັງຄົມທີ່ພັດທະນາແລ້ວ, ເປັນສັງຄົມກະສິກຳ ມີການລ້ຽງສັດ, ໝາ, ໝູ, ແກະ, ງົວ, ຄວາຍ, ມ້າ ແລະລີງ; ຮູ້ຈັກຂຸດສະນ້ຳໄວ້ໃຊ້ໃນຍາມຂາດເຂີນ, ມີການຕ່ຳຜ້າ, ມີການຮັກສາຄວາມປອດໄພເປັນຢ່າງດີຄື: ສ້າງກຳແພງດິນໜຽວປະສົມກັບຫຍ້າອ່ອນອ້ອມຮອບບ້ານ. ມີຄວາມເຊື່ອກ່ຽວກັບໂຊກຊະຕາ ເພາະເຊື່ອວ່າ ຄວາມຈະເລີນຮຸ່ງເຮືອງຂອງແຕ່ລະລາຊະວົງນັ້ນຂຶ້ນຢູ່ກັບຄວາມພໍໃຈຂອງສະຫວັນ. ຜູ້ນຳຈີນໄດ້ຮັບຕຳແໜ່ງບໍ່ແມ່ນເພາະຄວາມສາມາດຢ່າງດຽວ ແຕ່ຈະຕ້ອງໄດ້ຮັບການໂປດປານຈາກສະຫວັນ, ຈະຕ້ອງເຊື່ອຟັງຄຳສອນຂອງສະຫວັນ ແລະປົກຄອງແຜ່ນດິນຕາມກົດຂອງທຳມະຊາດ. ຖ້າຫາກປະພຶດຜິດຈາກການບັນຊາຂອງສະຫວັນ ຫຼືປົກຄອງບ້ານເມືອງບໍ່ທ່ຽງທຳ ສະຫວັນຈະລົງໂທດໃຫ້ກະສັດນັ້ນສິ້ນສຸດລົງ ແລ້ວ

ຕັ້ງລາຊະວົງໃໝ່ຂຶ້ນ. ຄວາມເຊື່ອດັ່ງກ່າວໄດ້ຮັບການສະໜັບສະໜູນໃຫ້ແຜ່ຫຼາຍໃນສະໄໝຕໍ່ມາ ( ອ້າງໃນອາລະຍະທຳໂລກ, ໜ້າ 270-273 ).

## 6.2 ວັດທະນະທຳຈີນສະໄໝກ່ອນປະຫວັດສາດ

### 6.2.1 ລາຊະວົງເສັຍ

ຜູ້ທີ່ສະຖາປະນາລາຊະວົງເສຍຂຶ້ນປົກຄອງປະເທດໄດ້ແກ່"ຫຢູ່"ເຊິ່ງເປັນຂ້າລາຊະ ການແຫ່ງລາຊະສຳນັກ, ເປັນຜູ້ມີຄວາມສາມາດເປັນເລີດ ແລະໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳ ແໜ່ງເປັນປະມຸກປະເທດ. ລາຊະວົງນີ້ມີສູນກາງປົກຄອງຢູ່ແຂວງຊານຊີ ແລະປົກຄອງແຜ່ນດິນຈີນຍາວນານເຖິງ 400 ປີ, ນີ້ເສື່ອມລົງໃນທີ່ສຸດ.

400 ປີກວ່າທີ່ລາຊະວົງເສັຍປົກຄອງ, ໄດ້ສ້າງຄວາມຈະເລີນໄວ້ຫຼາຍຢ່າງເຊັ່ນ: ທາງດ້ານການປົກຄອງແບບນະຄອນລັດ, ຕຳແໜ່ງກະສັດສືບທອດກັນໂດຍສາຍເລືອດ, ປະມຸກເປັນຜູ້ນຳບໍ່ວ່າໃນຍາມສະຫງົບ ແລະຍາມສົງຄາມ, ພ້ອມນັ້ນກໍຍັງເປັນຜູ້ຕິດຕໍ່ກັບສະຫວັນ, ມີການໃຊ້ລົດມ້າໃນການເຮັດສົງຄາມ. ໃນສະໄໝນີ້ເລີ່ມມີການໃຊ້ອັກສອນພາບເປັນສື່, ປະຕິທິນຂອງລາຊະວົງນີ້ແມ່ນໄດ້ຮັບການຍອມຮັບວ່າ ມີຄວາມໃກ້ຄຽງກັບປະຕິທິນຈີນໃນປັດຈຸບັນຫຼາຍ. ນອກນີ້ຍັງມີການນຳໃຊ້ທອງສຳລິດມາແທນທີ່ດິນເຜົາ. ຈັກກະພັດອົງສຸດທ້າຍຂອງລາຊະວົງເສັຍມີພະນາມວ່າ " ເສັຍເຈັ້ຍ". ເສັຍເຈັ້ຍບໍ່ໄດ້ປົກຄອງປະຊາຊົນດ້ວຍຄວາມເປັນທຳແລະບໍ່ສົນໃຈຕໍ່ການຄຳນວນປະຕິທິນເຮັດໃຫ້ຊາວກະສິກຳເສຍຫາຍຈຶ່ງເສື່ອມຄວາມນິຍົມຈາກປະຊາຊົນ, ຂຸນນາງທັງຫຼາຍຈຶ່ງກໍ່ກະບົດເຮັດໃຫ້ລາຊະວົງນີ້ເສື່ອມລົງໃນທີ່ສຸດ

### 6.2.2 ລາຊະວົງຊາງຫຼືລາຊະວົງຍິນ

ຜູ້ກໍ່ການກະບົດລົ້ມລາຊະວົງເສັຍແມ່ນ"ຕັງ"ແລະ ສະຖາປະນາລາຊະວົງໃໝ່ຂຶ້ນຄື ລາຊະວົງຊາງ. ລາຊະວົງນີ້ຍ້າຍເມືອງຫຼວງຫຼາຍຄັ້ງ ເພື່ອຫຼີກເວັ້ນຈາກການໂຈມຕີຂອງສັດຕູ.ຮູບການປົກຄອງຍັງໃຊ້ແບບດຽວກັບລາຊະວົງເສັຍດ້ານເສດຖະກິດແມ່ນການກະສິກຳ. ທອງສຳລິດໄດ້ແຜ່ອອກຢ່າງກວ້າງຂວາງ. ອັກສອນພາບທີ່ເກີດຂຶ້ນໃນລາຊະວົງກ່ອນໄດ້ມີການພັດທະນາໃຫ້ທັນສະໄໝຂຶ້ນເຊັ່ນ: ເມື່ອເອົາອັກສອນພາບເຫຼົ່ານັ້ນມາປະສົມເຂົ້າກັນຈະເກີດຄຳທີ່ມີຄວາມໝາຍຂຶ້ນ. ອັກສອນເຫຼົ່ານີ້ຂຽນໃສ່ກະດອງເຕົ່າ ແລະກະດູກສັດ. ຂໍ້ຄວາມຂຽນສ່ວນຫຼາຍຈະກ່ຽວກັບຄຳທຳນາຍຕ່າງໆ ແລະອັກສອນພາບເຫຼົ່ານີ້ກໍໄດ້ເປັນຕົ້ນກຳເນີດຂອງອັກສອນຈີນໃນສະໄໝຕໍ່ມາ. ສະໄໝລາຊະວົງຊາງ ມີຄວາມເຊື່ອກ່ຽວກັບເທບພະເຈົ້າຢູ່ສາມອົງເຊັ່ນ: ບັນພະບຸລຸດທີ່ລ່ວງລັບໄປ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ແລ້ວ, ຕ້ອງມີການເຄົາລົບບູຊາ ເພື່ອສະແດງເຖິງຄວາມກະຕັນຍູ ແລະເປັນການບູຊາເພື່ອໃຫ້ເກີດຄວາມຈະເລີນຮຸ່ງເຮືອງຂອງຄົນທີ່ຢູ່ເບື້ອງຫຼັງ ເພາະທັງນີ້ເຊື່ອວ່າ ຜູ້ຕາຍສາມາດດົນບັນດານຄວາມສຸກທຸກໃຫ້ແກ່ຜູ້ຢູ່ໄດ້; ເທບພະເຈົ້າອົງທີ 2 ໄດ້ແກ່ເທບພະເຈົ້າແຫ່ງທຳມະຊາດ ແລະເທບພະເຈົ້າ ອົງທີ 3 ທີ່ເປັນເທບພະເຈົ້າສຳຄັນຄື ເທບພະເຈົ້າແຫ່ງສົງຄາມ.



ພາຊະນະທອງສຳລິດມີການ
ຕົບແຕ່ງດ້ວຍການຝັງເງິນ

ທາງດ້ານສັງຄົມມີການແບ່ງຊົນຊັ້ນ ເຊິ່ງສາມາດເຫັນໄດ້ຈາກຫຼັກຖານທີ່ຢູ່ອາໄສ. ການແບ່ງຊົນຊັ້ນນີ້ໄດ້ຖືເອົາຖານະທາງສັງຄົມ ແລະເສດຖະກິດເປັນຂໍ້ກຳນົດເຊັ່ນ: ຊົນຊັ້ນສູງຈະອາໄສຢູ່ໃນພະລາຊະວັງອັນໃຫຍ່ໂຕ, ຊົນຊັ້ນທຳມະດາຈະມີທີ່ຢູ່ອາໄສທີ່ທຸກຍາກ. ເວົ້າລວມແລ້ວຖານະຂອງຄົນໃນສັງຄົມຈີນນັ້ນບໍ່ຄົງທີ່ ເພາະມີການປ່ຽນແປງໄດ້ຕາມຄວາມສາມາດຫຼາຍກວ່າຕາມຊົນຊັ້ນກຳເນີດຂອງແຕ່ລະບຸກຄົນ.

1. ວັດທະນະທຳທີ່ສຳຄັນຂອງລາຊະວົງສາງ

ກ. ອັກສອນຈີນ

ອັກສອນໃນເບື້ອງຕົ້ນເປັນອັກສອນພາບແລະກໍ່ມີການພັດທະນາຂື້ນພ້ອມກັບຄວາມເຊື່ອກ່ຽວກັບການສ່ຽງທາຍ ຈາກການຂຸດຄົ້ນດ້ານບູຮານຄະດີມີການຈາລຶກຕົວອັກສອນໃສ່

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ກະດອງເຕົ່າແລະກະດູກຊີ່ງກະດູກເຫລົ່ານີ້ຮຽກວ່າກະດູກສ່ຽງທາຍ(oraclebone) ວິທີຂຽນແມ່ນຄວັດກະດູກສັດໃຫ້ເປັນຕົວໜັງສືແລ້ວເອົາໄຟລົນເຮັດໃຫ້ກະດູກເກີດຮອຍແຕກແຍກ ແລະຮອຍແຕກລ້າວນັ້ນເປັນຄຳຕອບຂອງບັນຫາທີ່ຖາມ.ຄຳຖາມສ່ວນຫລາຍແມ່ນຖາມກ່ຽວກັບດິນຟ້າອາກາດ

ພຶດຜົນຕ່າງໆແລະການເຮັດສົງຄາມຈາກການສ່ຽງທາຍເຮັດໃຫ້ເກີດມີການຈາລຶກຂໍ້ຄວາມຕ່າງໆໄວ້ໃນກະດູກສັດ. ນອກຈາກນີ້ກໍຍັງມີການຂຽນຕົວໜັງສືໄວ້ໃນເຄື່ອງໃຊ້ໃນທອງສຳລິດ.



ກະດູກທຳນາຍສະໄໝລາສະວົງສາງ

ຂ. ການປະດິດເຄື່ອງສຳລິດ.

ພາຊະນະທອງສຳລິດເປັນເຄື່ອງໃຊ້ຂອງກຸ່ມຄົນຊັ້ນສູງໃນສະໄໝລາຊະວົງຊາງສ່ວນຫລາຍເປັນພາຊະນະໃນພິທີກຳທາງສາສະໜາ ແລະສັງຄົມລັກສະນະການອອກແບບເປັນວັດທະນະທຳຂອງຈີນແທ້ເຊັ່ນ ພາຊະນະສາມຂາທີ່ແກະສະລັກພາບນູນແລະຈາລຶກຕົວອັກສອນໃສ່ພາຊະນະພ້ອມ.

ຄ. ຄວາມເຊື່ອ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ໃນສະໄໝນີ້ແມ່ນມີລັດທິບູຊາດວງວິນຍານບັນພະບູລຸດ. ການບູຊາດວງວິນຍານຂອງບັນພະບູລຸດມີຄວາມສຳຄັນຕໍ່ສັງຄົມຈີນຫລາຍຂື້ນ.ເມື່ອຜູ້ໃຫຍ່ໃນຕະກູນລ່ວງລັບໄປແລ້ວກໍ່ມີການບູຊາກາບໄຫວ້ກັນຢູ່ ເພາະເຊື່ອວ່າເປັນການສະແດງຄວາມກະຕັນຍູເປັນການບູຊາເພື່ອຄວາມຈະເລີນຮຸ່ງເຮືອງຂອງຄົນຢູ່ເບື້ອງຫລັງ ເພາະເຂົາເຈົ້າເຊື່ອວ່າຜູ້ຕາຍຈະສາມາດດົນບັນດານຄວາມສຸກທຸກໃຫ້ແກ່ຜູ້ຍັງມີຊີວິດຢູ່. ບັນພະບູລຸດທີ່ສຳຄັນຂອງລາຊະວົງຊາງຄືຊັງຕີ.



ໝໍ້ສາມຂາ[illegible]າສຳ

ລັບອຸ່ນເຫຼົ້າໃນລາຊະວົງຊາງ

6.2.3 ລາຊະວົງໂຈ

ໃນຂະນະທີ່ລາຊະວົງຊາງກຳລັງຈະເລີນຮຸ່ງເຮືອງຢູ່ທາງພາກຕາເວັນອອກນັ້ນ, ຢູ່ທາງພາກຕາເວັນຕົກໃນແຂວງຊານຊີໄດ້ຍົກທັບມາຍາດດິນແດນ ແລະສະຖາປະນາລາຊະວົງໃໝ່ຂື້ນປົກຄອງຄື ລາຊະວົງໂຈ.ເມື່ອໂຈເຂົ້າມາປົກຄອງໃນດິນແດນກໍ່ຮັບເອົາວັດທະນະທຳຄວາມຈະເລີນຂອງລາຊະວົງຊາງ ດ້ວຍເຫດນີ້ຄວາມຈະເລີນສ່ວນໃຫຍ່ຂອງໂຈກໍ່ຄືຄວາມຈະເລີນຂອງລາຊະວົງຊາງ, ລາຊະວົງໂຈໄດ້ວາງຮາກຖານຄວາມຈະເລີນຕ່າງໆສືບຕໍ່ລາຊະວົງຊາງ. ລາຊະວົງໂຈໄດ້ລົດອຳນາດຂອງຜູ້ປົກຄອງໃນລາຊະວົງຊາງລົງໃຫ້ເປັນພຽງຂຸນຊັ້ນສູງເທົ່ານັ້ນ.ດິນແດນໃນສະໄໝ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ລາຊະວົງໂຈແມ່ນກວ້າງຂວາງຫຼາຍ. ການປົກຄອງໃນລາຊະວົງໂຈເປັນການປົກຄອງແບບສັກດີນາ (Feudalism), ກະສັດຄືໂອລົດຂອງສະຫວັນ ເຊິ່ງສະຫວັນໄດ້ມອບອຳນາດໃຫ້ມາປົກຄອງຈີນແທນລາຊະວົງຊາງ. ກະສັດໄດ້ຈັດທີ່ດິນໃຫ້ແມ່ທັບ, ນາຍກອງເພື່ອເປັນຂອງຂວັນໃນການປາບປາມລາຊະວົງຊາງໄດ້ສຳເລັດ ພ້ອມກັນນັ້ນກໍໄດ້ມອບສິດອຳນາດຕ່າງໆໃຫ້ມີສິດຢ່າງເຕັມທີ. ການປົກຄອງຂອງລາຊະວົງໂຈເບື້ອງຕົ້ນແມ່ນສາມາດຮວບຮວມອຳນາດໄວ້ໄດ້ຢ່າງໝັ້ນຄົງ, ມາໄລຍະກາງເປັນສະໄໝທີ່ກະສັດເສື່ອມອຳນາດ ຈຶ່ງເຮັດໃຫ້ເກີດມີການຍາດແຍ່ງດິນແດນ ຊີງຄວາມເປັນໃຫຍ່ ແລະໃນສະໄໝໂຈຕອນທ້າຍເປັນສະໄໝສົງຄາມ ແລະຕໍ່ສູ້ກັນເປັນເວລາຫຼາຍປີ ສົງຄາມໄດ້ສິ້ນສຸດລົງດ້ວຍໄຊຊະນະຂອງພວກ "ຈີນ" ທີ່ມີອຳນາດຫຼາຍກວ່າລັດອື່ນໆສາມາດຮວບຮວມຈີນໃຫ້ເປັນອັນໜຶ່ງອັນດຽວໄດ້.

ການປົກຄອງສະໄໝລາຊະວົງໂຈ ເຖິງວ່າຈະມີຄວາມຫຍຸ້ງຍາກທາງດ້ານການເມືອງ ແລະສັງຄົມກໍຕາມ ແຕ່ເຂົາເຈົ້າກໍມີຄວາມຈະເລີນຮຸ່ງເຮືອງທາງດ້ານເຕັກໂນໂລຊີ, ມີການປັບປຸງຖະໜົນຫົນທາງ ແລະຂະຫຍາຍການຄ້າກັບຕ່າງປະເທດ, ມີການໃຊ້ມ້າ ແລະລົດໃນການສູ້ຮົບ. ອາວຸດທີ່ຮ້າຍແຮງສະໄໝນີ້ແມ່ນທະນູ, ມີການຂຸດຮ່ອງຊົນລະປະທານ ເພື່ອປ້ອງກັນນ້ຳຖ້ວມ ແລະການກະສິກຳ, ມີການໃຊ້ປຸ໋ຍທຳມະຊາດ ແລະປະດິດຄັນໄຖເຫຼັກເປັນຄັ້ງທຳອິດ. ພ້ອມນັ້ນກໍໄດ້ຮວບຮວມປະເພນີທີ່ມີມາແຕ່ບູຮານໄວ້ຢ່າງເປັນລະບຽບ. ທາງດ້ານການຄ້າສະໄໝນີ້ໄດ້ຮວບຮວມເອົາເຂດເມືອງທີ່ມີກິດຈະການຄ້າຂາຍມາໄວ້ໃນກຳແພງນີ້ສະແດງໃຫ້ເຫັນວ່າ ລັດໄດ້ເຫັນຄວາມສຳຄັນທາງການຄ້າແລະນິຍົມສ້າງກຳແພງເມືອງໃຫ້ເຂັ້ມແຂງເພື່ອປ້ອງກັນການຮຸກຮານຂອງເຜົ່າຕ່າງໆ. ຄວາມນິຍົມສ້າງກຳແພງໄດ້ພັດທະນາຕໍ່ມາເລື້ອຍໆຈົນເຖິງສະໄໝຈິນຊີຮ່ອງເຕ້.

ກ. ດ້ານສັງຄົມຂອງລາຊະວົງໂຈ.

ສະໄໝລາຊະວົງໂຈນີ້ເປັນສະໄໝທີ່ສັງຄົມຈີນມີຊົນຊັ້ນຄື ສັງຄົມຊັ້ນສູງ ແລະສັງຄົມຊັ້ນຕໍ່າ.

ສັງຄົມຊັ້ນສູງປະກອບມີເຈົ້າດິນ, ນັກປາດ, ນັກສຶກສາ, ຂ້າລາຊະການ, ພໍ່ຄ້າ, ທະຫານ. ສັງຄົມຊັ້ນຕໍ່າມີຊາວນາ. ເຈົ້າທີ່ດິນ, ຂ້າລາຊະການ, ນັກປາດ, ທະຫານເປັນຊົນຊັ້ນທີ່ໄດ້ຮັບສິດທິພິເສດເຊັ່ນ ບໍ່ໃຫ້ເສຍພາສີ, ຍົກເວັ້ນບໍ່ໃຫ້ເກນແຮງງານ, ສາມາດຫາຜົນປະໂຫຍດໄດ້ຢ່າງເຕັມທີ. ສະນັ້ນ ຊາວນາຈີນໃນຍຸກນັ້ນຈະກຽດຊັງກຸ່ມຄົນພວກນີ້ຫຼາຍ ເພາະພໍ່ຄ້າມີແຕ່ຫວັງຜົນກຳໄລ ແລະຈະໃຊ້ເລ່ຫຼ່ຽມຫຼອກລວງຕ່າງໆ ເພື່ອເອົາລັດເອົາປຽບເພື່ອນມະນຸດດ້ວຍກັນ. ສ່ວນທະຫານມີແຕ່ທຳລາຍຫຼາຍກວ່າສ້າງສັນເຊັ່ນ ທຳລາຍຊີວິດ ແລະຊັບສິນຂອງສັດຕູ. ການມີທະຫານເປັນເຫດໃຫ້ນຳໄປສູ່ການມີສົງຄາມ ເຮັດໃຫ້ສັງຄົມສັບສົນວຸ້ນວາຍ ແລະທຳລາຍລ້າງສິ່ງທີ່ມະນຸດສ້າງຂຶ້ນມາ ດ້ວຍຄວາມທຸກຍາກລຳບາກ. ເຈົ້າທີ່ດິນມີແຕ່ເອົາລັດເອົາປຽບປະຊາຊົນ. ກົງກັນຂ້າມກັບ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຊາວນາເຊັ່ນ ຊາວນາ ການຄອງຊີບຕໍ່າ, ເຮັດວຽກໜັກ, ການດໍາລົງຊີວິດແມ່ນຕິດຢູ່ກັບດິນຟ້າອາກາດ, ບໍ່ໄດ້ຮັ່ງຮຽນ, ຖືກບຽດບຽນຈາກຄົນຊັ້ນສູງ. ການເສຍພາສີຊາວນາກໍຈະໄດ້ເສຍຫຼາຍເຊັ່ນ: ພາສີທ້ອງຖິ່ນ, ເສຍພາສີໃຫ້ກຸ່ມຄົນຜູ້ດີຄື ຂ້າລາຊະການຖືວ່າ ຊົນຊັ້ນຊາວນາເປັນຊົນຊັ້ນທີ່ບໍລິການແຮງງານ ແລະສາທາລະນຸປະໂພກຕ່າງໆໃຫ້ແກ່ລັດຖະບານເປັນຢ່າງດີ. ການເສຍພາສີຫຼືເກນແຮງງານແມ່ນຖືກຕ້ອງຕາມກົດໝາຍບ້ານເມືອງຢ່າງເຄັ່ງຄັດ. ກົງກັນຂ້າມສັງຄົມຈີນຈະຈະເລີນຮຸ່ງເຮືອງໝັ້ນຄົງ ແລະຢູ່ລອດ ຫຼືມີຄວາມຫາຍະນະ, ລາຊະວົງຈະເສື່ອມອໍານາດລ້ວນແຕ່ແມ່ນສີມືຂອງຊົນຊັ້ນສູງທັງນັ້ນ. ຄວາມສັບສົນວຸ້ນວາຍຂອງສັງຄົມຈີນທຸກຍຸກທຸກສະໄໝລ້ວນແຕ່ເກີດຂຶ້ນຍ້ອນຊົນຊັ້ນສູງເປັນຕົວການກໍານົດ.

ເຖິງວ່າສັງຄົມຈີນໃນລາຊະວົງໂຈຈະມີການແບ່ງຊົນຊັ້ນ ແລະມີຄວາມແຕກຕ່າງກັນໃນສະພາບຄວາມເປັນຢູ່ກໍຕາມ ແຕ່ເຂົາເຈົ້າກໍມີຈຸດຄືກັນເຊັ່ນ: ໃຫ້ຄວາມສໍາຄັນແກ່ຄອບຄົວ ເພາະເຂົາເຈົ້າຖືວ່າ ຄອບຄົວເປັນອົງປະກອບຂອງສັງຄົມ. ການເຄົາລົບຟັງຄວາມພໍ່ແມ່ເປັນການສຶກສາອົບຮົມສະມາຊິກໃຫ້ຈົ່ງຮັກພັກດີຕໍ່ຜູ້ປົກຄອງຄື ພໍ່ແມ່ ແລະຜູ້ນໍາປະເທດ.

ຂ. ຄວາມເຊື່ອ.

ລາຊະວົງໂຈຕອນປາຍມີການນັບຖືເທບພະເຈົ້າຢ່າງຫລວງຫລາຍແຕ່ທີ່ສໍາຄັນທີ່ສຸດ "ສະຫວັນ" "ທ້ຽນ" ຖືວ່າເປັນຜູ້ໃຫ້ອໍານາດແລະຄຸ້ມຄອງອໍານາດທາງການເມືອງ ກະສັດລາຊະວົງໂຈຈຶ່ງອ້າງຕົນເອງວ່າເປັນໂອລົດຂອງສະຫວັນ ພິທີທີ່ສໍາຄັນຂອງລາຊະວົງໂຈຄືພິທີບູຊາບັນພະບູລຸດຄືສະຫວັນ ຜູ້ທໍາພິທີໄດ້ກໍ່ມີແຕ່ກະສັດເທົ່ານັ້ນ.ສ່ວນຄອບຄົວສາມັນຈະມີການບູຊາເທບພະເຈົ້າແຫ່ງພື້ນດິນແລະບູຊາດວງວິນຍານຂອງພໍ່ແມ່... ຜູ້ທໍາພິທີຄືຫົວໜ້າຄອບຄົວ.

ຄ.ດ້ານສິລະປະວັດທະນະທໍາ.

ເປັນເວລາ 800 ປີທີ່ລາຊະວົງໂຈມີອໍານາດໄດ້ວາງຮາກຖານວັດທະນະທໍາໃຫ້ແກ່ຈີນໃນຍຸກຕໍ່ມາ ວັດທະນະທໍາເຫລົ່ານັ້ນໄດ້ມີຫລັກຖານທາງປະຫວັດສາດຈະແຈ້ງກວ່າສະໄໝກ່ອນໆເຊັ່ນການ ຂຽນຕົວອັກສອນໃສ່ແຜ່ນໄມ້ໄຜ່, ຂຽນໃສ່ແຜ່ນຜ້າ ແລະ ຜ້າໄໝ, ການປະດິດສິລະປະກໍາທາງ ດ້ານທອງສໍາລິດ, ເຄື່ອງປະດິດຕ່າງໆນັ້ນກໍ່ມີການແກະສະລັກຕົວໜັງສືໃສ່. ຕົວອັກສອນຕ່າງໆກໍ່ມີ ການພັດທະນາມາຈາກຕົວອັກສອນຂອງລາຊະວົງຊາງ.

ງ. ທາງດ້ານປັດຊະຍາ.

ວັດທະນະທໍາທີ່ສໍາຄັນອີກດ້ານໜຶ່ງກໍ່ຄືຄວາມຈະເລີນທາງດ້ານປັດຊະຍາ ຊຶ່ງຄໍາສັ່ງສອນຂອງນັກປັດຊະຍາເຫລົ່ານັ້ນ ແມ່ນມີອິດທິພົນຕໍ່ຊີວິດຄວາມເປັນຢູ່ຂອງຊາວຈີນໃນຂະນະນັ້ນຢ່າງ

ຫລວງຫລາຍທີ່ສຸດເຊັ່ນ ຄຳສອນຂອງຂົງຈື້ກໍ່ເປັນທີ່ນັບຖື ແລະປະຕິບັດກັນມາຈົນເຖິງປັດຈຸບັນນີ້ ເຊັ່ນ "ສິ່ງຄາມຈະຽງບສະຫງົບ ແລະເປັນສຸກໄດ້ຖ້າສະມາຊິກໃນສັງຄົມຮູ້ຈັກໜ້າທີ່ຂອງຕົນເອງ" ໜ້າທີ່ຂອງຄົນເຮົາຂອງຂົງຈື້ ແມ່ນໝາຍເຖິງທຳນຽມປະເພນີອັນດີງາມທີ່ຍຶດຖືປະຕິບັດກັນມາຕັ້ງແຕ່ສະໄໝກ່ອນ, ນອກນັ້ນກໍ່ມີກຸ່ມປັດຊະຍານິຕິນິຍົມ ( ລະບົບຟາເຈັຍ).

**ຈ. ວັນນະຄະດີຈີນ**

ວັນນະຄະດີຈີນເປັນໜຶ່ງໃນມໍລະດົກອາລະຍະທຳໂລກ ແລະມີອິດທິພົນໃນຫຼາຍໆປະເທດໃນອາຊີ ໂດຍສະເພາະແມ່ນຍີ່ປຸ່ນ, ເກົາຫຼີ, ຫວຽດນາມ ແລະໄທ. ວັນນະຄະດີທີ່ມີຊື່ສຽງ ແລະມີອິດທິພົນຕໍ່ວິຖີຊີວິດ ແລະວັດທະນະທຳຂອງຊາວຈີນມາຈົນເຖິງປັດຈຸບັນນີ້ຄື ວັນນະຄະດີຂອງຂົງຈື້ ຜູ້ເປັນທັງສາສະດາຂອງລັດທິຂົງຈື້, ທັງເປັນນັກກະວີ ແລະນັກຂຽນທີ່ມີຊື່ສຽງໃນສະໄໝລາຊະວົງໂຈ. ຂົງຈື້ໄດ້ຮວບຮວມ ແລະຮຽບຮຽງບັນທຶກປະຫວັດສາດຈີນເປັນໜັງສື 5 ເຫຼັ້ມ. ໜັງສື 5 ເຫຼັ້ມໄດ້ກາຍເປັນຄຳພີສຳຄັນ ແລະເປັນແຫຼ່ງຂໍ້ມູນທາງດ້ານວິທີການຂຽນ ແລະແນວຄວາມຄິດຂອງຄົນຮຸ່ນຫຼັງໄດ້ຍຶດຖື. ໜັງສື 5 ເຫຼັ້ມມີຄື

**1) ອີ້ຈິງ (I ching) ຕຳລາກ່ຽວກັບການປ່ຽນແປງ**

ຊາວຈີນໃນລາຊະວົງຊາງເອົາກະດູກ ຫຼືກະດອງເຕົ່າມາຂຽນທຳນາຍ, ແຕ່ຊາວຈີນໃນສະໄໝຮຸ່ນຕໍ່ມານິຍົມໃຊ້ງ່າຂອງຕົ້ນ Milsoil (ມິນຊອຍ) ມາໃຊ້ທຳນາຍ ຫຼືຄາດການລ່ວງໜ້າ. ໜັງສືອີ້ຈິງເປັນໜັງສືໃຫ້ຄຳອະທິບາຍ ແລະຄຳຕີຄວາມໝາຍກ່ຽວກັບການທຳນາຍ ໂດຍໃຊ້ງ່າໄມ້ນີ້ເປັນຮູບລັກສະນະຕ່າງໆ.

**2) ຊູຈິງ (Shu jing) ຕຳລາກ່ຽວກັບປະຫວັດສາດ**

ໜັງສືເຫຼັ້ມນີ້ ບັນທຶກຄຳປະກາດ, ຄຳແນະນຳ, ສູນທອນພົດ ແລະຄຳລາຍງານ ເຊິ່ງກ່າວກັນວ່າ ເຈົ້າຜູ້ຄອງລັດ ແລະທີ່ປຶກສາຂອງເຈົ້າຜູ້ຄອງລັດຕ່າງໆໄດ້ຂຽນຂຶ້ນໄວ້ຕັ້ງແຕ່ສະໄໝບູຮານຈີນເຖິງສະໄໝລາຊະວົງໂຈວ (Chou). ໜັງສືເຫຼັ້ມນີ້ນອກຈາກໃຫ້ຄວາມຮູ້ທາງປະຫວັດສາດແລ້ວຍັງໃຫ້ຄວາມຮູ້ກ່ຽວກັບລັກສະນະສັງຄົມຈີນບູຮານອີກດ້ວຍ.

**3) ຊີ່ຈິງ (Shi ching)ເປັນຕຳລາກ່ຽວກັບກາບກອນ**

ໜັງສືເຫຼັ້ມນີ້ຮວບຮວມບົດກອນບູຮານຂອງຈີນ ເຊິ່ງສ່ວນໃຫຍ່ເຊື່ອກັນວ່າ ແຕ່ງຂຶ້ນໃນຕົ້ນລາຊະວົງໂຈ. ບົດກອນເຫຼົ່ານີ້ ບາງບົດກໍເປັນກອນພື້ນເມືອງ ຫຼືບົດເພງຈາກລັດຕ່າງໆ, ບາງບົດກໍເປັນບົດກອນເຊິ່ງຂຸນນາງ, ຂ້າລາຊະການໃນລາຊະສຳນັກແຕ່ງຂຶ້ນ ເພື່ອເປັນບົດຂັບບົດສວດໃນການບູຊາ, ບາງບົດກໍເປັນບົດຮ້ອງໃນງານພິທີ, ບາງບົດກໍເປັນບົດລຳສັນລະເສີນເທບພະເຈົ້າ

ແລະວິລະບຸລຸດ. ຄວາມສຳນຶກເຖິງສະພາບສັງຄົມປາກົດຢູ່ໃນວັນນະຄະດີຈີນຕັ້ງແຕ່ຍຸກຕົ້ນໆ, ພະເຈົ້າແຜ່ນດິນຈີນໃນສະໄໝບູຮານ ບາງຄັ້ງເຖິງກັບສົ່ງຂ້າລາຊະບໍລິວານອອກໄປຮວບຮວມບົດເພງພື້ນເມືອງ ເຊິ່ງປະຊາຊົນຖິ່ນຕ່າງໆແຕ່ງຂຶ້ນເພື່ອຈະຮູ້ເຖິງຄວາມນຶກຄິດ ແລະຄວາມຄິດເຫັນຂອງປະຊາຊົນທີ່ມີຕໍ່ລັດ. ບົດປະພັນສ່ວນໃຫຍ່ໃນໜັງສື ຊື່ຈິງເປັນບົດເພງພື້ນເມືອງ ສະນັ້ນບົດປະພັນໃນໜັງສືເຫຼັ້ມນີ້ ຈຶ່ງເປັນເອກະສານສຳຄັນທີ່ສະແດງເຖິງວັດທະນະທຳຂະນົບທຳນຽມ ປະເພນີຕະຫຼອດຮອດຄວາມເປັນຢູ່ ແລະຄ່ານິຍົມຂອງຈີນໃນຍຸກຕົ້ນໆຖືກັນວ່າ "ຊື່ຈິງ"ຄືໜັງສືບັນທຶກຮວບຮວມກອນບູຮານຂອງຈີນໄດ້ຢ່າງເປັນລະບຽບສົມບູນ ແລະເປັນຊຸດທຳອິດໃນປະຫວັດສາດຈີນ.

**4) ຫຼີຈິງ (Lijing) ຕຳລາກ່ຽວກັບພິທີກຳ**

ໜັງສືເຫຼັ້ມນີ້ຮວບຮວມກ່ຽວກັບຂໍ້ຄິດເຫັນທາງປັດຊະຍາ, ພິທີກຳຕ່າງໆຕະຫຼອດຮອດລາຍລະອຽດກົດເກນ ແລະແນວທາງການປະຕິບັດໃນຊີວິດປະຈຳວັນ.

**5) ຊຸນຊິວ (Chunchiu) ພົງສາວະດານລະດູໃບໄມ້ຫຼົ່ນ**

ໜັງສືເຫຼັ້ມນີ້ເປັນຈົດໝາຍເຫດປະຈຳປີ, ບັນທຶກເຫດການສຳຄັນໆໂດຍຫຍໍ້ຕາມລຳດັບຂອງລັດລູ້ຕັ້ງແຕ່ ປີ 722-481 ກ່ອນ ຄສ. ລັດລູ້ເປັນບ້ານເກີດຂອງຂົງຈື້ ແລະເຊື່ອກັນວ່າຜູ້ຮຽບຮຽງແມ່ນຂົງຈື້. ໜັງສືເຫຼັ້ມນີ້ແມ່ນບົດບັນທຶກປະຈຳປີຂອງລັດລູ້ ( ອ້າງໃນອາລະຍະທຳສະໄໝບູຮານ-ສະໄໝກາງ, 122-123).

**ເວົ້າລວມແລ້ວ** ເລື່ອງທຳອິດແມ່ນຜົນງານຂອງຂົງຈື້ ເຊິ່ງເປັນທັງສາສະດາທັງເປັນນັກກະວີ, ນັກປະພັນ ຜູ້ມີຊື່ສຽງໃນລາຊະວົງໂຈ. ໜັງສືຕ່າງໆຂອງຂົງຈື້ໄດ້ກາຍເປັນຄຳພີທີ່ສຳຄັນ ແລະເປັນແຫຼ່ງຂໍ້ມູນທາງດ້ານການຂຽນ ແລະແນວຄວາມຄິດທີ່ຄົນຮຸ່ນຫຼັງຍຶດຖືລູກສິດຂອງຂົງຈື້ໃນຍຸກຫຼັງຍັງຄົງສືບສານແນວຄິດຂອງຂົງຈື້ວ່າ ວັນນະຄະດີຕ້ອງຮັບໃຊ້ສັງຄົມຫຼັງສະໄໝລາຊະວົງໂຈບໍ່ປາກົດມີການຂຽນວັນນະຄະດີປະເພດນີ້.

ລະຄອນຈີນປຽບເໝືອນເອກະລັກຂອງນາດຕະສິນຈີນ. ນັກຄົ້ນຄວ້າເຊື່ອວ່າ ມີການກຳເນີດມາຈາກພິທີກຳທາງສາສະໜາ, ການບູຊາ ຕ້ອງມີການຟ້ອນລຳ ແລະຂັບຮ້ອງ. ການສະແດງເປັນເລື່ອງຕ່າງໆນັ້ນແມ່ນເລີ່ມໃນສະໄໝລາຊະວົງໂຈ, ເນື້ອເລື່ອງສ່ວນຫຼາຍອີງໃສ່ປະຫວັດສາດ, ນິທານທີ່ຄົນຈີນນິຍົມເອີ້ນວ່າ "ລະຄອນງິ້ວ". ຜູ້ສະແດງຕ້ອງແຕ່ງໜ້າດ້ວຍເຄື່ອງສຳອາງທີ່ມີສີສັນສົດໃສ, ເບິ່ງແລ້ວຄ້າຍຄືໜ້າກາກ. ຮູບແບບການແຕ່ງໜ້າຂອງຕົວລະຄອນແຕ່ລະຕົວນັ້ນສາມາດສະແດງອາລົມໃນບົດບາດຂອງຕົວລະຄອນນັ້ນໄດ້ເປັນຢ່າງດີ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ



ພາຊະນະທອງສຳລິດມີການປະດັບ

ປະດາຕົວອັກສອນຫຼາຍຂຶ້ນ

ຄຳຖາມ 1. ຈົ່ງສຶກສາແຫຼ່ງກຳເນີດວັດທະນະທຳສະໄໝກ່ອນປະຫວັດສາດ?

1. ຈົ່ງວິເຄາະເຖິງເຫດຜົນຂອງຜູ້ນຳແຕ່ລະລາຊະວົງໃນການຈັດຕັ້ງລາຊະທານີແລະການຍົກຍ້າຍລາຊະທານີ?

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

## ບົດທີ 7

## ວັດທະນະທຳຈີນສະໄໝກໍ່ຕັ້ງເປັນອານາຈັກ

### 7.1 ສະໄໝລາຊະວົງຈິນ (Chin)

ລາຊະວົງນີ້ມີຈັກກະພັດອົງດຽວປົກຄອງຄື ຈິ່ນຊີ ຮ່ອງເຕ້ (ຊີຫວັ່ງຕີ໊). ຊີຫວັ່ງຕີ໊ໄດ້ລົ້ມການປົກຄອງຂອງລາຊະວົງໂຈ ຊີຫວັງຕີ່ກາຍເປັນຈັກກະພັດອົງທຳອິດທີ່ສາມາດຮວບຮວມຈີນໃຫ້ເປັນປຶກແຜ່ນ ແລະເປັນອັນໜຶ່ງອັນດຽວ. ໂດຍໃຊ້ອຳນາດເດັດຂາດໃນການປົກຄອງເມືອງຕ່າງໆ ເຊິ່ງໃຊ້ກົດໝາຍເປັນຫຼັກ. ຜູ້ປົກຄອງຕ້ອງວາງກົດເກນ ແລະລະບຽບໃຫ້ເຂັ້ມງວດ ພ້ອມທັງການລົງໂທດດ້ວຍການປະຫານຊີວິດ, ການລົງໂທດດ້ວຍການຕັດອະໄວຍະວະຕ່າງໆເຊັ່ນ ຕັດດັງ, ຕັດຂາ, ສັກລາຍໃສ່ໜ້າ ( ອ້າງໃນປະຫວັດວັດທະນະທຳຈີນ, 35 ).

ຈັກກະພັດຈິ່ນຊີຮ່ອງເຕ້ໄດ້ຍົກເລີກລະບອບສັກດີນາອັນເປັນທີ່ມາຂອງຄວາມອ່ອນແອໃນລາຊະວົງໂຈ ແລ້ວໄດ້ຈັດລະບຽບການປົກຄອງໃໝ່ຈີນໄດ້ກາຍເປັນຮາກຖານການປົກຄອງປະເທດມາຮອດສະຕະວັດທີ 20. ພະອົງໄດ້ແຕ່ງຕັ້ງຂ້າລາຊະການທີ່ຈົງຮັກພັກດີຕໍ່ລັດຖະບານໄປປົກຄອງ. ຂ້າລາຊະການເຫຼົ່ານີ້ມີໜ້າທີ່ດູແລ ແລະເກັບພາສີໃຫ້ແກ່ລັດຖະບານ. ພະອົງໄດ້ບັງຄັບໃຊ້ກົດໝາຍຂະນົບທຳນຽມປະເພນີກ່ຽວກັບລະບົບເງິນຕາ, ການຊັ່ງ, ຕວງ, ວັດແທກໃຫ້ເປັນແບບແຜນດຽວກັນທົ່ວອານາຈັກ ທີ່ສຳຄັນອີກຈຸດໜຶ່ງພະອົງໄດ້ຈັດລະບຽບການຂຽນໜັງສືໃຫ້ເປັນແບບດຽວກັນໝົດ ເນື່ອງຈາກວ່າ ຈີນມີພາສາຖິ່ນຢ່າງຫຼວງຫຼາຍ ອັນເປັນອຸປະສັກໃນການຕິດຕໍ່ສື່ສານ. ທາງດ້ານຮີດຄອງປະເພນີ ພະອົງໄດ້ທຳລາຍປະເພນີດັ້ງເດີມ ແລະຄຳສອນຂອງຂົງຈື້ ໂດຍໃຫ້ເຜົາທຳລາຍຕຳລາຕ່າງໆ ເພື່ອບໍ່ໃຫ້ມີການວິພາກວິຈານ ຫຼືສະແດງຄວາມຄິດເຫັນຂັດແຍ້ງກັບນະໂຍບາຍຂອງພະອົງ, ຕະຫຼອດຮອດຕຳລາວັນນະຄະດີເກົ່າແກ່ ເພື່ອບໍ່ໃຫ້ປະຊາຊົນຈົດຈຳອະດີດ, ຍັງຄົງຮັກສາໄວ້ແຕ່ຈົດໝາຍເຫດຂອງແຄວັ້ນສິນ, ຕຳລາຢາ, ຕຳລາກະສິກຳ ແລະຕຳລາໂຫລະສາດ. ຜູ້ໃດວິພາກວິຈານ ຫຼືຄັດຄ້ານຈະຕ້ອງໄດ້ຮັບການລົງໂທດ ແລະຖືກປະຫານຊີວິດ(ຕຳລາຕ່າງໆທີ່ຖືກເອົາໄປເຜົາທຳລາຍນັ້ນ ກໍຍັງມີຮັກສາ ແລະຊຸກເຊື່ອງໄວ້ ແລະມີການຮວບ ຮວມຄວາມຮູ້ຕ່າງໆຂຶ້ນມາໃໝ່).

ທາງດ້ານສະຖາປັດຕະຍະກຳ ພະອົງໄດ້ສັ່ງໃຫ້ສ້າງເມືອງໃໝ່ທີ່ໃຫຍ່ໂຕມະໂຫລານທີ່ເມືອງຊຽນຢາງ (Xianyang) ແລະສ້າງຖະໜົນ, ຂຸດຄູຄອງ ເພື່ອໃຫ້ເຊື່ອມຕໍ່ກັບເມືອງໃຫຍ່. ການກໍ່ສ້າງທີ່ສຳຄັນໃນສະໄໝນີ້ແມ່ນກຳແພງເມືອງຈີນ ເພື່ອປ້ອງກັນພວກຊົນເຜົ່າເລ່ລອນ. ພະອົງໄດ້ຕໍ່ເຕີມ ແລະເຊື່ອມຕໍ່ກຳແພງທີ່ມີມາແຕ່ໃນລາຊະວົງໂຈໃຫ້ຍາວຢຽດໄປຕາມຊາຍແດນທາງພາກເໜືອຈີນກາຍເປັນກຳແພງເມືອງຈີນໃນສະໄໝປັດຈຸບັນ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ



ກໍາແພງເມືອງຈີນເປັນກໍາແພງຍາວທີ່ສຸດໃນໂລກ, ຍາວປະມານ 2240 Km

ສັນຍະລັກແຫ່ງຄວາມຍິ່ງໃຫຍ່ຂອງພະເຈົ້າຈິ່ນຊີ ຮ່ອງເຕ້ອີກອັນໜຶ່ງຄື ພະລາຊະວັງທີ່ມີຂະໜາດໃຫຍ່ໂຕ ແລະງົດງາມ, ປະດັບປະດາດ້ວຍຊັບສິນທີ່ມີຄ່າ ແລະຮູບປັ້ນຂອງທະຫານມ້າ ແລະນັກຮົບເທົ່າກັບຮູບຕົວຈິງ.

ພະເຈົ້າຈິ່ນຊີ ຮ່ອງເຕ້ຂຶ້ນປົກຄອງປະເທດໄດ້ພຽງ 14 ປີແຕ່ພະອົງສາມາດວາງພື້ນຖານໃຫ້ຈັກກະພັດຈີນສືບຕໍ່ມາເປັນເວລານານເຖິງ 2000 ປີ.ຫຼັງຈາກພະອົງສິ້ນພະຊົນແລ້ວອານາຈັກຈີນກໍຕົກຢູ່ໃນຄວາມວຸ້ນວາຍອີກຄັ້ງໜຶ່ງ. ເນື່ອງຈາກປະຊາຊົນຖືກບັງຄັບໃຫ້ເສຍພາສີ ແລະຖືກຂົ່ມເຫັງແຮງງານຢ່າງໜັກໜ່ວງ ຈົນກະທັ້ງລົ່ວປັງທົນບໍ່ໄດ້ ຈຶ່ງໄດ້ຕັ້ງຕົນເປັນໃຫຍ່ ແລະສະຖາປະນາລາຊະວົງຮັ່ນຂຶ້ນປົກຄອງຈີນ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

**7.2 ສະໄໝລາຊະວົງຮັ່ນ (202ປີ ກ່ອນ ຄສ)**

ລາຊະວົງຮັ່ນ (Han) ຄືຈຸດເລີ່ມຕົ້ນຂອງຄວາມສາມັກຄີທີ່ເປັນປຶກແຜ່ນທາງດ້ານການເມືອງ. ການກຳເນີດລາຊະວົງຮັ່ນແມ່ນເລີ່ມຈາກລິ່ວປັງ. ລິ່ວປັງເປັນຊາວນາສາມາດຍຶດອຳນາດ ແລະປາບການຈະລາຈົນໄດ້ຂັ້ນຕ່ຳໃນສະ ໄໝລາຊະການຈິ່ນຊີ ຮ່ອງເຕ້ທີ່ໄດ້ກາຍມາເປັນຈັກກະພັດອົງທຳອິດຂອງລາຊະວົງຮັ່ນ. ພະອົງຊົງພະນາມວ່າ ຈັກກະພັດຮັ່ນເກົາສູ. ມາຕັ້ງລາຊະທານີຢູ່ທີ່ເມືອງຊຽງອານ (xiang an). ລາຊະວົງນີ້ໄດ້ປັບປຸງຟື້ນຟູອຳນາດທາງດ້ານການເມືອງຫຼາຍຢ່າງ. ໂດຍຍຶດຖືຫຼັກການບາງຢ່າງຂອງຈັກກະພັດຈິ່ນຊີ ຮ່ອງເຕ້ທີ່ວາງໄວ້ກ່ອນ ແລະໄດ້ຍົກເລີກລະບຽບບາງຢ່າງທີ່ເຂັ້ມງວດ ແລະຮຸນແຮງເຊັ່ນ: ການລົງໂທດສັກລາຍໃສ່ໜ້າໄປໃຫ້ເປັນທຳຄວາມສະອາດກຳແພງເມືອງເປັນເວລາ 4 ປີ, ໂທດການຕັດດັງປ່ຽນໃຫ້ເປັນຂ້ຽນ 300 ເທື່ອ, ໂທດການຕັດຂາປ່ຽນໃຫ້ຂ້ຽນ 500 ເທື່ອ ແຕ່ກໍຍັງມີຜູ້ຖືກຂ້ຽນຈົນຕາຍ ແລ້ວຈຶ່ງລົດໂທດລົງໄປເລື້ອຍໆເຊັ່ນ ຂ້ຽນ 300 ໃຫ້ເປັນ 200 ຫຼື 100 ເທື່ອ ( ອ້າງໃນປະຫວັດວັດທະນະທຳຈີນ ໜ້າ 88 ).

ຄວາມຈະເລີນທາງດ້ານວັດທະນະທຳຂອງຮັ່ນເກົາສູ. ໄດ້ຟື້ນຟູປັດຊະຍາຂອງຂົງຈື້ມາໃຊ້ ເຮັດໃຫ້ໜັງສືຂອງຂົງຈື້ກາຍມາເປັນຫລັກໃນການປົກຄອງປະເທດ.ນອກນັ້ນກໍ່ມີວັນນະກຳ ປະຫວັດສາດເກີດຂື້ນ,ນັກປະຫວັດສາດທີ່ມີຊື່ໃນສະໄໝນີ້ຄື ສຸມາຊ້ຽນ, ສຸມາຊ້ຽນເປັນຜູ້ທີ່ມີການສຶກສາດີ,ຜົນງານຂອງເຂົາແມ່ນເປັນແບບຢ່າງຂອງການຈົດບັນທຶກປະຫວັດສາດໃນ ລາຊະວົງລຸ້ນຕໍ່ໆມາ. ຄວາມຈະເລີນອີກອັນໜຶ່ງກໍ່ຄືການພິມພັນທະນະບັດຂື້ນມາໃຊ້ແທນໂລຫະເປັນຄັ້ງທຳອິດ.

ການປົກຄອງລາຊະວົງຮັ່ນມີຄວາມຈະເລີນສູງສຸດໃນສະໄໝຈັກກະພັດຮັ່ນວູ່ຕີ (140-86 ປີກ່ອນ ຄສ ). ຮັ່ນວູ່ຕີໄດ້ຮັບສົມຍະນາມວ່າ "ຈັກກະພັດຊຸນເສິກ" ເພາະພະອົງໄດ້ທຳສົງຄາມຂະຫຍາຍອານາເຂດອອກໄປທາງທິດຕາເວັນຕົກຢ່າງກວ້າງຂວາງ ເຮັດໃຫ້ຈີນໄດ້ມີໂອກາດຕິດຕໍ່ກັບຊາວໂຣມັນເຊິ່ງເວລານັ້ນໂຣມັນກຳລັງມີຄວາມຈະເລີນຮຸ່ງເຮືອງຫຼາຍ.ຈັກກະພັດວູ່ຕີໄດ້ ຂະຫຍາຍອານາເຂດໄປເຖິງເກົາຫຼີເໜືອ. ສ່ວນທາງໃຕ້ໄດ້ຮອບຮວມເອົາແຄວັນຕ່າງໆໃນບໍລິເວັນລຸ່ມແມ່ນ້ຳແຍງຊີກຽງເຊັ່ນ: ກວາງຕຸ້ງ, ກວາງຊີ, ຟູກຽນ, ຢູນນານ ແລະກຽວເຈົາ ຮວມທັງຫວຽດນາມເໜືອ. ນັບວ່າສະໄໝລາຊະວົງຮັ່ນແມ່ນມີຄວາມໂດດເດັ່ນໃນດ້ານການຂະຫຍາຍອຳນາດ ແລະຄວາມຈະເລີນດ້ານວັດທະນະທຳ. ຊາວຈີນໃນເວລານັ້ນມີຄວາມພູມໃຈ ແລະນິຍົມເອີ້ນຕົນເອງວ່າ "ທາຍາດຂອງຮັ່ນ" ແລະໃນສະໄໝນີ້ຖືວ່າເປັນສະໄໝແຫ່ງສັນຕິພາບຈີນ (Paxsinica) ໃນອາຊີກາງ ແລະອາຊີຕາເວັນອອກ ເຊິ່ງພໍດີກັບສະໄໝສັນຕິພາບໂຣມັນໃນໂລກຕາເວັນຕົກ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຈັກກະພັດຮັ່ນວູ່ຕີໄດ້ວາງລະບຽບປົກຄອງ ໂດຍອີງໃສ່ແບບຢ່າງຂອງຈັກກະພັດອົງກ່ອນໆເປັນຫຼັກໃນການປະຕິບັດ. ອຳນາດສູງສຸດແມ່ນຂຶ້ນກັບຈັກກະພັດ, ຮອງລົງມາແມ່ນລັດຖະບານ. ພະອົງໄດ້ແບ່ງການປົກຄອງອອກເປັນກະຊວງຕ່າງໆ ແລະຮັບເອົາພະນັກງານໃນຂະແໜງການຕ່າງໆຕ້ອງມີການເສັງຄັດເລືອກ ຖືວ່າເປັນຄັ້ງທຳອິດໃນຈີນ. ການສອບເສັງມີຫຼາຍລະດັບແຕ່ນ້ອຍຫາໃຫຍ່ (ຕາແສງ, ເມືອງທ້ອງຖິ່ນ). ສ່ວນລະດັບສູງແມ່ນຜູ້ທີ່ຈະເຮັດວຽກນຳຈັກກະພັດ, ຜູ້ສອບເສັງຕ້ອງສຶກສາຮ່ຳຮຽນກ່ຽວກັບການຂຽນວັນນະຄະດີເກົ່າແກ່ຕ່າງໆ ແລະມີຄວາມຮູ້ຢ່າງກວ້າງຂວາງໃນຫຼັກຄວາມຄິດຂອງຂົງຈື້ ເພາະຜູ້ທີ່ເຮັດວຽກກັບຈັກກະພັດຕ້ອງປະພຶດຕົນໃຫ້ດີ, ເປັນແບບຢ່າງແກ່ປະຊາຊົນ. ລະບົບການປົກຄອງດັ່ງກ່າວໄດ້ສືບທອດກັນມາຈົນເຖິງ ຄສ 1912 ເມື່ອຈີນປ່ຽນການປົກຄອງເປັນ ສາທາລະນະລັດ.

ໃນສະໄໝລາຊະວົງຮັ່ນຕອນປາຍໄດ້ຮັບເອົາພຸດທະສາສະໜານິກາຍມະຫາຍານ ແລະປະກາດໃຊ້ເປັນທາງການ ຈາກນັ້ນສາສະໜາພຸດກໍໄດ້ແຜ່ຂະຫຍາຍໄປທົ່ວຈີນ. ພຸດທະສາສະໜານິກາຍມະຫາຍານຂອງຈີນແມ່ນເຊື່ອກ່ຽວກັບຄວາມລີ້ລັບຂອງລັດທິເຕົ໋າ ແລະຍັງຍອມຮັບເທບພະເຈົ້າທ້ອງຖິ່ນຂອງຈີນອີກ. ທາງດ້ານວິທະຍາສາດວິທະຍາການໃນລາຊະວົງຮັ່ນ ພະອົງໄດ້ສົ່ງເສີມການສຶກສາ ແລະວິທະຍາສາດ, ມີການຄົ້ນຄິດເຈ້ຍຂຶ້ນໃຊ້. ລາຊະວົງຮັ່ນຍຸກຫຼັງໄດ້ມີຜົນງານທາງປະຫວັດສາດອີກເຫຼັ້ມໜຶ່ງ ເຊິ່ງຜູ້ຂຽນແມ່ນຄົນໃນຕະກຸນປານຄື ປານປິວ,ປານກູ ແລະປານເຈົາ. ນອກຈາກສົ່ງເສີມທາງດ້ານການສຶກສາແລ້ວ ລາຊະວົງຮັ່ນຍັງມີຄວາມຈະເລີນດ້ານດາລາສາດ, ຄະນິດສາດ. ນັກວິຊາການຈີນສາມາດຄຳນວນເຫດການທາງທຳມະຊາດໄດ້ຢ່າງຖືກຕ້ອງເຊັ່ນ: ປະຕິທິນແຜ່ນດິນໄຫວ, ປາກົດການສຸລິຍະຄາດ, ໄພພິບັດຕ່າງໆ ສາມາດຄຳນວນ ແລະກຳນົດຊ່ວງເວລາເກີດຂຶ້ນໄດ້ຢ່າງແມ່ນຢຳ.

**ເວົ້າລວມແລ້ວ** ສະໄໝລາຊະວົງຮັ່ນເປັນສະໄໝທີ່ປົກຄອງປະເທດໄດ້ຍາວນານເຖິງ 400 ປີ, ເປັນຍຸກທີ່ບ້ານເມືອງມີຄວາມສະຫງົບຮຽບຮ້ອຍເປັນເວລາເກືອບ 4 ສະຕະວັດ ຈຶ່ງເຮັດໃຫ້ລາຊະວົງນີ້ຢູ່ທ່າງສະສົມ ແລະສ້າງວັດທະນະທຳ ເຮັດໃຫ້ເປັນຕົ້ນແບບຂອງວັດທະນະທຳໃຫ້ແກ່ຊາດຕ່າງໆໃນອາຊີອາຄະເນ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ



ຕະກຽງທອງສຳລິດສະໄໝ ລາຊະວົງຮັ່ນ

7.3 ສະໄໝຈີນແບ່ງແຍກເປັນກົກເປັນເຫຼົ່າ ( ສະໄໝກາງ)

ເມື່ອລາຊະວົງຮັ່ນສິ້ນສຸດລົງແລ້ວ, ສັງຄົມຈີນກໍເກີດຄວາມສັບສົນວຸ້ນວາຍແກ້ງແຍ້ງຊີງອຳນາດທົ່ວທັງແຜນດິນຈີນ. ຄວາມອ່ອນແອທາງການເມືອງ ແລະການທະຫານຂອງຈີນໃນເວລານັ້ນ ເຮັດໃຫ້ຊາວຕ່າງຊາດເຂົ້າມາຮຸກຮານ, ມີການອົບພະຍົບປະຊາຊົນເປັນກຸ່ມໆຫຼາຍທີ່ສຸດ, ເຮັດໃຫ້ຈີນແບ່ງອອກເປັນ 3 ກົກໃຫຍ່ຄື ກົກຂອງໂຈໂສ ຕັ້ງລາຊະວົງໄຫວ ຢູ່ທາງພາກຕາເວັນອອກສ່ຽງເໜືອຂອງເຂດມົນທົນເຊນຊີ, ກົກຂອງຊຸນກວນ ຕັ້ງລາຊະວົງວູ ປົກຄອງລຸ່ມແມ່ນ້ຳແຢງຊີກຽງ ,ກົກທີ3ຄືກົກຂອງຜູ້ສືບເຊື້ອສາຍຈາກລາຊະວົງຮັ່ນຄື ເລົ້າປີ ຕັ້ງລາຊະວົງຊູຮັ່ນປົກຄອງຢູ່ທາງພາກຕາເວັນອອກສ່ຽງໃຕ້ຂອງມົນທົນເສສວນ. ສົງຄາມລະຫວ່າງສາມກົກສິ້ນສຸດລົງເມື່ອ ຊູມາເຢນ ບຸດຊາຍຂອງເສນາບໍດີຂອງລາຊະວົງໄຫວ ສາມາດຮວມຈີນໃຫ້ເປັນອັນໜຶ່ງອັນດຽວອີກ.

ຫຼັງສະໄໝສາມກົກຈີນປະສົບຄວາມວຸ້ນວາຍທາງການເມືອງ, ເກີດສົງຄາມກາງເມືອງ ແລະເຮັດໃຫ້ປະເທດຈີນແບ່ງອອກເປັນແຄວ້ນເລັກແຄວ້ນນ້ອຍ, ຜູ້ທີ່ໄດ້ຮັບໄຊຊະນະກໍສະຖາປະນາຕົນເອງເປັນຈັກກະພັດ ແຕ່ປົກຄອງບໍ່ໄດ້ດົນກໍໝົດອຳນາດໄປ, ນອກນັ້ນກໍມີສົງຄາມຈາກພາຍນອກ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

### 7.3.1. ລາຊະວົງຖັງ

ຫລັງຈາກຈີນພົບກັບຄວາມວຸ້ນວາຍມາເປັນເວລານານ ຈີນຈຶ່ງກັບມາເປັນປຶກແຜ່ນອີກຄັ້ງໜຶ່ງໃນສະໄໝລາຊະວົງຖັງ (ຄສ 623-906) ຖືວ່າເປັນຍຸກທອງຂອງຈີນໃນສະໄໝກາງ. ລາຊະວົງຖັງໄດ້ຂື້ນປົກຄອງປະເທດຈີນສ້າງຄວາມຈະເລີນ ແລະມໍລະດົກທາງວັດທະນະທຳໃຫ້ແກ່ຈີນອີກຄັ້ງໜຶ່ງ ໂດຍສະເພາະແມ່ນບົດກະວີ, ນັກກະວີທີ່ມີຊື່ສຽງຄືຫລີໄປບົດກະວີຂອງທ່ານໄດ້ບັນຍາຍກ່ຽວກັບຄວາມງາມຂອງທຳມະຊາດ.ອີກທ່ານໜຶ່ງກໍຄື "ຕູ້ຟູ" ເປັນຄົນທີ່ສັດທາໃນລັດທິຂົງຈື້ ແລະເອົາຈິງເອົາຈັງກັບຊີວິດ,ເພາະບົດກະວີຂອງທ່ານມັກສະແດງຄວາມເສົ້າໝອງ ສະທ້ອນໃຫ້ເຫັນຄວາມຫຍຸ້ງຍາກທາງສັງຄົມ,ຄວາມທຸກຍາກຂອງປະຊາຊົນສະໄໝລາຊະວົງຖັງແມ່ນມີຄວາມຈະເລີນທາງດ້ານບົດກະວີຈີນໄດ້ຊື່ວ່າເປັນຍຸກທອງຂອງວັນນະກຳຈີນແລະບົດກະວີໃນສະໄໝນີ້ໄດ້ແຜ່ເຂົ້າໄປໃນເກົາຫລີແລະຍີ່ປຸ່ນອີກດ້ວຍນອກຈາກນັ້ນຍັງມີດ້ານຈິດຕະກຳ ແລະພຸດທະສາສະໜາຈະເລີນຮຸ່ງເຮືອງຫຼາຍທີ່ສຸດ. ເພາະຖັງຊຳຈັ໋ງເປັນຜູ້ມີບົດບາດຢ່າງຍິ່ງໃນການແປຕຳລາທາງພຸດທະສາສະໜາອອກເປັນພາສາຈີນ. ສະຖາບັນວັດ ແລະພະສົງໄດ້ຂະຫຍາຍອິດທິພົນຫຼາຍຂື້ນໃນລາຊະວົງນີ້ຊຶ່ງມີວັດເກີດຂື້ນປະມານ 4000 ກວ່າແຫ່ງ. ສະຖາບັນວັດຂອງພຸດທະສາສະໜາມີບົດບາດໃນດ້ານສັງຄົມສົງເຄາະ ຈຶ່ງເຮັດໃຫ້ເປັນທີ່ນິຍົມຂອງປະຊາຊົນ. ວັດທະນະທຳພຸດທະສາສະໜາຈຶ່ງມີອິດຕິພົນຕໍ່ຈິດໃຈຂອງຄົນຈີນທຸກຊັ້ນຄົນ. ບັນດາຊາວນານັບເປັນລ້ານຄົນໄດ້ສ້າງຄວາມຫວັງໄວ້ທີ່ອຳນາດແຫ່ງຄຸນະທຳຄວາມດີຂອງພະໂພທິສັດກວນອິມ.

**ສະຫຼຸບແລ້ວ** ອາລະຍະທຳຈີນໄດ້ແຜ່ຂະຫຍາຍໄປຢ່າງກວ້າງຂວາງໃນອາຊີ ແລະເອີຣົບນັບຕັ້ງແຕ່ສະໄໝລາຊະວົງຮັ່ນເປັນຕົ້ນມາ ທີ່ສຳຄັນໄດ້ແກ່ການຄ້າຂາຍ, ການທູດ ແລະການເຜີຍແຜ່ສາສະໜາໃນອາຊີເຊັ່ນ ເກົາຫຼີ, ຍີ່ປຸ່ນ ແລະຫວຽດນາມ ຖືວ່າໄດ້ຮັບອິດຕິພົນຈາກຈີນຫຼາຍສົມຄວນ. ນອກຈາກນັ້ນ ກໍຍັງມີສິລະປະວັດທະນະທຳ ແລະການເມືອງການປົກຄອງເຊັ່ນ ການເສັງຄັດເລືອກເຂົ້າເປັນພະນັກງານ, ຄວາມນິຍົມໃນລັດທິຂົງຈື້, ການໃຊ້ຕົວອັກສອນຈີນ ຮວມທັງສະຖາປັດຕະຍະກຳ ເຫັນໄດ້ຈະແຈ້ງຄື ການສ້າງເມືອງນາຣາ ຂອງຍີ່ປຸ່ນ ເຊິ່ງໄດ້ຮັບອິດທິພົນຈາກເມືອງຊຽງອານໃນລາຊະວົງຖັງ. ເຄື່ອງປັ້ນດິນເຜົາໃນສະໄໝນີ້ແມ່ນໄດ້ພັດທະນາຂື້ນໄປເລື້ອຍໆຈົນເຮັດໃຫ້ເຄື່ອງປັ້ນເຫຼົ່ານີ້ມີຄຸນະພາບ ແລະງົດງາມ ແລະເປັນສິນຄ້າຂາອອກຂອງຈີນສົ່ງໄປຂາຍອາລັບ,ແບກແດດ, ອິນເດຍ ຈົນມີຊື່ສຽງເຮັດໃຫ້ເປີເຊຍລອກແບບຈີນ. ພໍ່ຄ້າຊາວອາລັບນຳເອົາວັດທະນະທຳຈີນໄປເຜີຍແຜ່ໃນເອີຣົບເຊັ່ນ ການປູກມອນລ້ຽງມ້ອນ, ເຄື່ອງປັ້ນດິນເຜົາ, ເຈ້ຍພິມ ແລະອື່ນໆ.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

**ຄຳຖາມ** 1 ຈົ່ງສຶກສາຜົນງານຂອງຈັກກະພັດຈິນຊີຮ່ອງເຕ້ໃນການຮວບຮວມແຜ່ນດິນຈີນໃຫ້ເປັນອັນໜຶ່ງອັນດຽວ?

2 ຜົນງານທາງດ້ານວັດທະນະທຳຂອງລາຊະວົງຮັ່ນແລະລາຊະວົງຖັງ ມີອັນໃດແດ່ທີ່ພົ້ນເດັ່ນ?

[illegible]

2. [illegible]

3. [illegible]

– [illegible]

4. [illegible]

5. [illegible]

# ວຽກບ້ານ ວິຊາ ວັດທະນະທຳອິນເດຍ-ວັດທະນະທຳຈີນ

**ສອນໂດຍ : ອ.ຈ ບຸນທານົກ ພະລະຄອນ**

**ຂຽນໂດຍ : ທ. ບຸນສົ່ງ ແກ້ວບົວສາຍ**

**໑**. ອະທິບາຍສະຖານທີ່ເກີດ, ລັກສະນະເດັ່ນ ແລະສາເຫດຄວາມເສື່ອມຂອງອາລະຍະທຳລຸ່ມແມ່ນ້ຳສິນທຸ ?

❖ **ສະຖານທີ່ເກີດ** : ອາລະຍະທຳລຸ່ມແມ່ນ້ຳສິນທຸ ເປັນອາລະຍະທຳໃນຍຸກທອງ (ປະມານ 2500-1900 ກ່ອນ ຄ.ສ) ຄືກຳເນີດຂຶ້ນບໍລິເວນລຸ່ມແມ່ນ້ຳສິນທຸໃນປະເທດອິນເດຍແລະປາກິດສະຖານໃນປັດຈຸບັນ ຖືເປັນອາລະຍະທຳຍຸກເລີ່ມແລກຂອງໂລກ ເຊິ່ງນັກບູຮານຄະດີເອີ້ນວ່າ : ຍຸກຮາຣັບປັນ ວັດທະນະທຳເກົ່າແກ່ສຸດເລີ່ມຈາກຫລາຍບ່ອນຄື

໑.ເມືອງອຳຣີ (Amri) ບໍລິເວນປາກແມ່ນ້ຳສິນທຸ ມີອາຍຸ 4,000 ກ່ອນ ຄ.ສ ພົບພໍ້ເຄື່ອງປັ້ນດິນເຜົາລະບາຍສີຄ້າຍຄືຂອງເມໂສໂປຕາເມຍ.

໒. ເມືອງຮາຣັບປາ ແລະໂມເຫນໂຈ - ດາໂຣ ອາຍຸ 2,600 – 1,900 ກ່ອນ ຄ.ສ

໓. ເມືອງຊຸຄາ ແລະຈັນທຸດາໂຣ ອາຍຸ 1,000 – 500 ກ່ອນ ຄ.ສ

ອາລະຍະທຳລຸ່ມແມ່ນ້ຳສິນທຸ ມີເມືອງສຳຄັນທີ່ໄດ້ຮັບການຂຸດຄົ້ນແລ້ວ 2 ແຫ່ງຄື ເມືອງຮາຣັບປາ ແລະໂມເຫນໂຈ - ດາໂຣ ທັງສອງເມືອງມີອາລະຍະທາທີ່ຄືກັນທຸກຢ່າງ ເຖິງຈະຫ່າງກັນ 600 ກິໂລແມັດ ຈຶ່ງຈັດເປັນສະໄໝແຮກເລີ່ມປະຫວັດສາດອິນເດຍ ເພາະພົບຈາລຶກຈຳນວນຫລາຍ ແຕ່ຍັງບໍ່ມີຜູ້ໃດອ່ານອອກ.

❖ **ລັກສະນະເດັ່ນ** :



**ຊາກເມືອງໂມເຫນໂຈ-ດາໂຣ**



**ປະຕິມາກຳລຸ່ມແມ່ນ້ຳສິນທຸ**

ມີລັກສະນະເດັ່ນຫລາຍຢ່າງ ຄື :

1. ການວາງຜັງເມືອງ ແຜນຜັງມີລະບຽບ ງົດງາມ ມີຖະໜົນຕັດກັນ ແບ່ງເມືອງເປັນຕາລາງ ແຍກພື້ນທີ່ໃຊ້ສອຍອອກຈາກກັນ ເຊັ່ນ ທີ່ຢູ່ອາໄສ ອາຄານສາທາລະນະ ທີ່ຢູ່ຊ່າງຝີມື ຍຸ້ງເຂົ້າ ປ່າຊ້າ ທ່າເຮືອ ພື້ນທີ່ທາງສາສະໜາ. ສະແດງເຖິງຄວາມຮູ້ດ້ານວິສະວະກຳການສຳຫລວດ ແລະເລຂາຄະນິດຢ່າງດີ.

2. ມີຖະໜົນ ແລະຮ່ອມຕັດກັນເປັນມຸມສາກ ບ້ານຢູ່ 2 ຂ້າງ ຖະໜົນມີເສົາຕະກຽງເປັນໄລຍະ ໄລຍະ.

3. ການສຸຂາອານາໄມ ມີປະສິດທິພາບຢ່າງຫລວງຫລາຍ ທຸກເຮືອນມີຫ້ອງນ້ຳ ມີທີ່ລະບາຍນ້ຳເສຍ-ນ້ຳດີ ພົບອ່າງນ້ຳໃຫຍ່ທີ່ຈະເລີນກວ່າອາລະຍະທຳອື່ນ ມາຈົນສະໄໝໂລມັນຈຶ່ງມີຫ້ອງນ້ຳດີໆທຽບເທົ່າໄດ້.

4. ມີການສ້າງກຳແພງເມືອງແລະປ້ອມປາການເພື່ອກັນຜູ້ຮຸກຮານ ມີອາວຸດ ລູກປືນດິນເຜົາ.

5. ການຄ້າແລະການຂົນສົ່ງ ຕິດຕໍ່ກັບອາຊີກາງ ອັບການິດສະຖານ ເປີເຊຍ ອິນເດຍຕອນໃຕ້ ເພື່ອນຳວັດຖຸດິບມາຜະລິດເຄື່ອງໃຊ້, ເຄື່ອງປະດັບ ພົບຮູບພາບເຮືອເທິງກາຈ້ຳ ລັກສະນະເຮືອຄ້າຍເອຢິບ ພົບພາຫະນະທຽມກວຽນດ້ວຍອູດ,ງົວ ມີ 2 ລໍ້ 4 ລໍ້ ພົບລູກຕຸ້ມນ້ຳໜັກ.

6. ການປູກຝັງ ແມ່ນກິນເຂົ້າໂພດເປັນອາຫານຫລັກ.

7. ລ້ຽງສັດ ມີ ໝາ, ງົວ, ຄວາຍ, ໝູ, ແກະ, ປາ, ໄກ່, ລາ, ຊ້າງ, ແມວ.

8. ທີ່ຢູ່ອາໄສ ລັກສະນະອາຄານແບບດຽວກັນໝົດ ຫລັງຄາແບບຮາບ ມີບ້ານໃຫຍ່, ບ້ານນ້ອຍ, ຊັ້ນດຽວແລະຫລາຍຊັ້ນ ມີຫ້ອງດຽວ-ຫລາຍຫ້ອງ ສ້າງແບບຮາບໆບໍ່ມີການປະດັບປະດາ ອາຄານເຮັດດ້ວຍອິດເຜົາໄຟ ອິດຂະໜາດດຽວກັນທັງໝົດ.

9. ການແຕ່ງກາຍໃຊ້ຜ້າຝ້າຍ ແລະໜັງສັດ ຊາຍ/ຍິງແຕ່ງກາຍດ້ວຍຜ້າ 2 ອັນ ທາງລຸ່ມເປັນຜ້ານຸ່ງແບບໂທດີ ມີເຊືອກຮັດແອວ ທາງເທິງເປີດໄຫລ່ຂວາ ມີເຄື່ອງປະດັບຜົມແລະເຄື່ອງປະດັບອື່ນໆ ເຊັ່ນ ສ້ອຍ ກຳໄລ ຫວີ ແຫວນ ເຂັມຂັດ ຕຸ້ມຫູ ຜູ້ຊາຍຈຶ່ງຜົມຍາວ ມີສາຍຄາດຫົວ ຜູ້ຍິງມີຊົງຜົມຫລາຍແບບ.

10. ສິນລະປະກຳ ບໍ່ຄ່ອຍພົບສິນລະປະກຳອັນໃຫຍ່ ເຊັ່ນ ຮູບແກະສະຫລັກຈາກຫີນຮູບຜູ້ຊາຍມີໜວດ ( ອາດຈະເປັນນັກບວດ) ສູງ 7 ນີ້ວ ທີ່ເມືອງໂມເຫນໂຈ-ດາໂຣ ຮູບຍິງສາວໃນທ່າຟ້ອນລຳ ເຮັດດ້ວຍທອງ ໜ້າຕາພື້ນເມືອງ ຮູບສະຫລັກຫີນ ຜູ້ຊາຍຄ້າຍຄືສິລະປະເກັກບູຮານ ຮູບປັ້ນດິນເຜົາຊາຍ/ຍິງ ຮູບປັ້ນສັດ ເຊັ່ນ ງົວໂຕຜູ້, ຄວາຍ, ໝາ, ແກະ, ຊ້າງ, ແຮດ, ໝູ, ລີງ, ເຕົ່າ, ນົກ ພົບກວຽນມີລໍ້ ກວຽນທຽມງົວ ແລະພົບພາຊະນະດິນເຜົາ, ພາຊະນະໂລຫະ.

11. ພົບພໍ້ນົກຫວີດ, ພໍ້ລູກເຕົ໋າ, ພົບຂອງສັ່ນເດັກຫລິ້ນ, ພົບບ່ວງດິນເຜົາ....

12. ໂດຍສະເພາະພົບພໍ້ກາຈ້ຳ ຫລວງຫລາຍກວ່າ 2000 ອັນ ສະລັກຈາກຫີນ ເທິງກາມີຕົວອັກສອນແລະມີພາບສັດຕ່າງໆ. ພາບສັດປະສົມໝີເຄິ່ງຄົນ ສັດໃນຈິນຕະນາການ 3-6 ຫົວ ພາບຄົນໃຕ້ຕົ້ນໄມ້ມີສັດອ້ອມຮອບ ອາດຈະເປັນຕົ້ນເຄົ້າພຣະສິວະຕໍ່ມາ ພາບຕົ້ນໂພ ພາບງົວໜ້າແທ່ນບູຊາ ຫລືຮາງຫຍ້າ ພາບຜູ້ຍິງກັບຕົ້ນໄມ້(ຍັກຂິນີ) ພາບເຮືອພາບຕ່າງໆແມ່ນປານິດຫລາຍ ຖືກຕ້ອງຕາມລັກສະນະທຳມະຊາດ ອາດຈະເປັນດວງກາບໍລິສັດການຄ້າ ຫລືຂອງພໍ່ຄ້າແຕ່ລະຄົນ ຫລືຂອງຄົນສຳຄັນປະຈຳໂຕ ຫລືເຄື່ອງລາງຂອງຂັງ.

13. ສາສະໜາ ບໍ່ພົບໂບດວິຫານໃຫຍ່ໂຕ ແຕ່ຊາວສິນທຸອາດຈະນັບຖືເທບພະເຈົ້າຫລາຍອົງ ເຊັ່ນ ເທພີເຈົ້າແມ່ເທບພະເຈົ້າຜູ້ຊາຍ ສິວະລຶງ ນັບຖືຕົ້ນໄຮ ຕົ້ນໂພ ມ້າມີເຂົາ ເທບພະເຈົ້າມີງົວຢູ່ເທິງຫົວ ນັບຖືພຣະອາທິດ ມີຮູບສະວັດຕິກະ ຮູບວົງລໍ້ລົດ.

14. ການເຮັດສົບ ມີການເຜົາສົບ ເກັບຂີ້ເຖົ່າໃສ່ໂຖ ຫລືຝັງສົບພ້ອມຂອງໃຊ້ ແລະນຳສົບໄປໃຫ້ແຮ້ງກາກິນ ແລ້ວຈຶ່ງເກັບກະດູກໃສ່ໂຖ.

❖ **ສາເຫດຄວາມເສື່ອມ** : ການຂຸດຄົ້ນທາງບູຮານຄະດີເຮັດໃຫ້ຮູ້ວ່າ ອາລະຍະທຳນີ້ສະຫລາຍຕົວເມື່ອປະມານ 1500 ປີກ່ອນ ຄ.ສ ເຊິ່ງເປັນຊ່ວງເວລາດຽວກັນກັບທີ່ຊົນເຜົ່າອາລະຍັນເຂົ້າມາມີບົດບາດຢູ່ໃນອະນຸທະວີບ ໃນຄວາມເປັນຈິງແລ້ວສາເຫດຂອງຄວາມເສື່ອມນັ້ນ ກໍອາດເນື່ອງມາຈາກຈຳນວນປະຊາກອນທີ່ເພີ່ມຂຶ້ນ ເຮັດໃຫ້ບ້ານເມືອງຂາດຄວາມເປັນລະບຽບ ການກໍ່ສ້າງບໍ່ມີລະບຽບຄືໃນຍຸກເລີ່ມຕົ້ນ ມີການສ້າງລ່ວງລ້ຳເຂົ້າໄປຫົນທາງ ປະເດັນນີ້ສະທ້ອນໃຫ້ເຫັນເຖິງອຳນາດຂອງຜູ້ປົກຄອງທີ່ດ້ອຍລົງໄປກວ່າເດີມດ້ວຍ ນອກເໜືອຈາກເຫດນີ້ແລ້ວເຊື່ອວ່າ ທຳມະຊາດ

ທີ່ເກີດຂຶ້ນເລື້ອຍໆ ໃນເຂດລຸ່ມແມ່ນ້ຳສິນທຸຄື ອຸທົກກະໄທເປັນສາເຫດສຳຄັນທີ່ເຮັດໃຫ້ເກີດບັນຫາຕ່າງໆຕາມມາ ຈຶ່ງເຮັດໃຫ້ເກີດຄວາມເສື່ອມຂຶ້ນ ຕົວຢ່າງເຊັ່ນ ການຂາດແຄນອາຫານ ໂລກລະບາດ ການບໍ່ມີທີ່ຢູ່ອາໄສ ນອກຈາກນີ້ ລັກສະນະບາງປະການຂອງອາລະຍະທຳນີ້ ອາດຈະມີສ່ວນທີ່ເຮັດໃຫ້ເກີດຄວາມເສື່ອມໃນໄລຍະຍາວຄື ລັກສະນະອານຸລັກນິຍົມ **ຈາກຄວາມສຳພັນທີ່ອາລະຍະທຳນີ້ກັບດິນແດນໃກ້ແມ່ນ້ຳໄທກິດສ-ຢູເຟຣັດ** ເຊິ່ງມີຄວາມຮູ້ຄວາມສາມາດທາງດ້ານເຕັກນິກວິທະຍາທີ່ເກັ່ງກວ່າ ເຊັ່ນ ການໃຊ້ເຫລັກ ແຕ່ປະຊາຊົນອາລະຍະທຳນີ້ກັບບໍ່ໄດ້ໃຊ້ປະໂຫຍດກັບຄວາມສຳພັນນີ້ ດິນແດນລຸ່ມແມ່ນ້ຳສິນທຸຍັງຄົງໃຊ້ທອງ ເຊິ່ງເປັນໂລຫະທີ່ອ່ອນເມື່ອທຽບກັບໂລຫະອື່ນໆ ທີ່ປະຊາຊົນຂອງກຸ່ມອື່ນໃຊ້ກັນ ໂດຍສະເພາະຢ່າງຍິ່ງພວກອາລະຍັນທີ່ຮູ້ຈັກໃຊ້ເຫລັກ ຈຶ່ງເຮັດໃຫ້ມີອາວຸດຫລືເຄື່ອງມືທີ່ມີປະສິດທິພາບດີກວ່າ ລັກສະນະອະນຸລັກນິຍົມເຊັ່ນນີ້ອາດຈະນຳໄປສູ່ຄວາມເສື່ອມໄດ້ ນອກຈາກນີ້ຈາກການຂຸດຄົ້ນຍັງພົບວ່າ ຊາວອາລະຍະທຳນີ້ສ້າງບ້ານເຮືອນຊ້ອນທັບເທິງຖານເກົ່າຂຶ້ນຕໍ່ໆກັນໄປເຖິງ ໑ ຊັ້ນ.

໔. ອະທິບາຍມໍລະດົກທາງ~~ວັດທະນະ~~ທຳ (ອາລະຍະທຳ) ທີ່ຊາວສິນທຸປະໄວ້ໃນອິນເດຍ ພ້ອມທັງຍົກຕົວຢ່າງມາປະກອບ ?

~~ມໍລະດົກທີ່ຊາວສິນທຸເຫລືອໄວ້ໃນອິນເດຍ ມີ ໒ ຢ່າງຄື :~~ ມີ ຄື:

~~1. **ດ້ານສາສະໜາ** : ຈາກການຄົ້ນຂຸດຄົ້ນພົບແມ່ນໄດ້ພົບ**ກາຈ້ຳ** ມີປະມານ 1200 ກວ່າກາຈ້ຳ ເປັນຮູບເທວະດາ ແລະສັດຕ່າງໆອ້ອມຮອບ ນອກນີ້ ຍັງພົບຮູບສິວະລິງ, ເທບພະເຈົ້າຊິວະ, ເຈົ້າແມ່ກາລີ ເຊິ່ງໄດ້ເປັນມໍລະດົກທາງສາສະໜາໃຫ້ຊາວຮິນດູໃນປະຈຸບັນ. ຊາວສິນທຸຍັງນັບຖືຕົ້ນໂພ, ຕົ້ນໄຊ, ງູ, ດວງອາທິດ ກາຍມາເປັນພື້ນຖານຄວາມເຊື່ອຂອງຊາວອິນເດຍໃນປະຈຸບັນ.~~

2. ~~**ທາງດ້ານສິລະປະກຳ**~~ : ຈາກຮູບແກະສະຫລັກສະຫລັກຫີນເປັນຮູບປັ້ນຜູ້ຊາຍໜວດຍາວ, ~~ມີຜ້າພັນຫົວ, ປະທັບກາເທິງໜ້າຜາກ, ຫົ່ມຜ້າບ່ຽງ, ມີລວດລາຍດອກໄມ້ຄ້າຍດອກຈຳປາ ເຊິ່ງເປັນເຄື່ອງໝາຍຂອງຄວາມສັກສິດ ສະແດງໃຫ້ເຫັນວ່າ ການຈິ່ງໜວດເປັນວັດທະນະທຳຢ່າງໜຶ່ງຂອງຄົນສະໄໝນັ້ນ ແລະໄດ້ຕົກທອດມາເຖິງຄົນອິນເດຍໃນປັດຈຸບັນ.~~

✱ **ມໍລະດົກທາງວັດທະນະທຳ** : ທີ່ເປັນມໍລະດົກໃຫ້ແກ່ຄົນອິນເດຍຈົນທຸກວັນນີ້ ແມ່ນການນຸ່ງຫົ່ມຝ້າຍທີ່ນິຍົມໃຊ້ກັນຢ່າງກວ້າງຂວາງ ~~ແລະ~~ປະເພນີການຝັງສົບ ການຈິ່ງໜວດ, ການມັດຖົງຈື...

<u>**ພາບປະກອບ**</u>



ກາຈ້ຳ



ສິລະປະກຳ ແລະການນຸ່ງຖື

**ເອກະສານອ້າງອີງ**


http://th.m.wikipedia.org/wiki

http://kaskanok.wordpress.com/

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

# ບົດທີ8

## ສາສາະໜາ ແລະພິທີກຳທາງສາສະໜາ

### 8. 1 ສາສະໜາ

#### 8.1.1 ສາສະໜາເຕົ່າ ແລະພິທີກຳ

1) ສາສະໜາເຕົ່າ

ສາສະໜາເຕົ່າເປັນສາສະໜາໜຶ່ງທີ່ເກົ່າແກ່ ມີແຫຼ່ງກຳເນີດໃນແຜ່ນດິນຈີນ, ຜູ້ກໍ່ຕັ້ງສາສ+ໜາຄື ເລົ່າຈື້. ເຕົ່າແມ່ນເນັ້ນໜັກໃຫ້ມະນຸດດຳເນີນຊີວິດໃຫ້ກົມກືນກັບທຳມະຊາດໃຫ້ຫຼາຍທີ່ສຸດ. ສາສະໜາເຕົ່າເບື້ອງຕົ້ນມີລັກສະນະເປັນປັດຊະຍາ, ເຊິ່ງເປັນຂໍ້ຄິດ ແລະຄຳສອນເທົ່ານັ້ນ, ບໍ່ມີພິທີກຳ, ບໍ່ມີຂໍ້ປະຕິບັດ ຫຼືນັກບວດໃດໆ. ຕໍ່ມາພາຍຫຼັງຈຶ່ງໄດ້ພັດທະນາຂຶ້ນມາເປັນສາສະໜາເຊິ່ງມີຄຳພີເຕົ໊າ-ເຕກ-ເກງ (Tao-The-Ching) ຄຳວ່າ "ເຕົ໊າ"ແປວ່າ ທາງ"ເຕກ"ແປວ່າ ບຸນ, ຄວາມດີ ຫຼືຄຸນະທຳ"ເກງ"ແປວ່າ ສູດຫຼືວັນນະຄະດີຊັ້ນຍອດ. ເມື່ອຮວບເຂົ້າກັນແລ້ວມີຄວາມໝາວ່າຄຳພີແຫ່ງເຕົ່າ ແລະຄຸນຄວາມດີ. ຫຼັກຄຳພີເຕົ໊າເຕັກເກງສະແດງເຖິງເຕົ່າມີ ລັກສະນະເປັນພະລັງງານຊະນິດໜຶ່ງທີ່ເຮັດໃຫ້ສິ່ງທັງຫຼາຍເກີດຂຶ້ນ, ເຄື່ອນໄຫວ ແລະຄວບຄຸມສິ່ງດີທັງຫຼາຍເຫຼົ່ານັ້ນໃຫ້ເປັນໄປຕາມທຳມະຊາດ. ນອກຈາກນັ້ນຍັງມີຫຼັກທຳທີ່ສອນໃຫ້ຄົນມີຄຸນະທຳ, ບໍ່ຄວນທະເຍີທະຍານ, ບໍ່ໂອ້ອວດ, ບໍ່ແຂ່ງດີ ແກ້ງແຍ່ງຄວາມເປັນໃຫຍ່ເຊິ່ງກັນແລະກັນ (ອ້າງໃນສາສະໜາປຽບທຽບ ໜ້າ 26)

ນິກາຍທີ່ສຳຄັນມີ 2 ນິກາຍຄື ນິກາຍເຊັງ- ອີ ແມ່ນຢູ່ທາງໃຕ້ຂອງແມ່ນ້ຳແຢງຊີ ບາງເທື່ອຮຽກວ່ານິກາຍໃຕ້ຫຼືນິກາຍທຽນຈື້.ນິກາຍນີ້ມີຄວາມເປັນຢູ່ແບບຊາວບ້ານ.ຄອບຄົວມີຄວາມເຊື່ອໃນເລື່ອງເວດມົນຄາຖາ.ການເຂົ້າຮ່າງສິງ,ການໄລ່ຜີ ຕະຫຼອດຮອດການຖາກັນຝົນຕົກກັນຝົນແລ້ງຫຼືໄພພາຍຸຕ່າງໆເປັນຕົ້ນ.

ນິກາຍຊວນເຊນເປັນກຸ່ມຢູ່ທາງເໜືອບາງເທື່ອເອີ້ນນິກາຍເໜືອ. ນິກາຍນີ້ສ່ວນຫຼາຍແມ່ນສະຫຼະຄວາມວຸ້ນວາຍທັງຫຼາຍໃນໂລກແລ້ວອອກໄປຢູ່ໃນວັດ. ຄອງຊີວິດໃຫ້ກົມກືນກັບທຳມະຊາດ, ຮັບປະທານອາຫານເຈມີຄວາມເປັນຢູ່ຢ່າງງ່າຍໆ. ບາງໂອກາດກໍ່ອົດອາຫານ. ຜູ້ເປັນນັກບວດແຕ່ງງານບໍ່ໄດ້ ດື່ມເຫຼົ້າບໍ່ໄດ້.

ຫຼັກຄຳສອນ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

- ສົມບັດອັນເປັນແກ້ວ 3 ປະການ, ຊີວິດຈະດີໄດ້ຕ້ອງກົມກືນກັບທຳມະຊາດ
- ລັກສະຂອງຄົນດີ, ປັດຊະຍາໃນການດຳເນີນຊີວິດ 4 ປະການ
  - ຮູ້ຈັກຕົວເອງໃຫ້ຖືກຕ້ອງ
  - ຊະນະຕົວເອງໃຫ້ໄດ້
  - ມີຄວາມຮູ້ຈັກພໍດ້ວຍຕົວເອງ
  - ມີເຕົ່າເປັນອຸດົມຄະຕິ

ສັນຍາລັກຂອງສາສະໜາເຕົ່າຄືຮູບເລົ່າຈື້ຂີ່ຄວາຍ ອັນໝາຍເຖິງການເດີນທາງໄປບ່ອນຕ່າງໆ ຂອງເລົ່າຈື້ມັກຈະໃຊ້ຄວາຍເປັນພາຫະນະ ຈົນຄັ້ງສຸດທ້າຍເດີນທາງໄປຊາຍແດນຂອງຈີນທີ່ຕິດກັບ ຕີເບດທາງທິດຕາເວັນຕົກສ່ຽງໃຕ້ກໍ່ໃຊ້ຄວາຍເປັນພາຫະນະແລະກໍ່ຫາຍໄປທັງເລົ່າຈື້ແລະຄວາຍຄູ່ ຊີບ.ສັນຍາລັກອີກອັນໜຶ່ງກໍ່ຄືຮູບຫຍາງແລະຫຍິນ ມີລັກສະນະເປັນວົງກົມແບ່ງເປັນສ່ວນເທົ່າກັນ ແລະແບ່ງທຳມະຊາດອອກເປັນຄູ່ກັນເຊັ່ນ ມືດກັບແຈ້ງ, ກາງເວັນກັບກາງຄືນ, ຍິງກັບຊາຍ ເປັນຕົ້ນ

2) **ພິທີກຳຂອງສາສະໜາເຕົ່າ**: *ປະກອບດ້ວຍພິທີກຳບູຊາດວງວິນຍານຂອງບັນພະບູລຸດ, ພິທີປາບຜີປີສາດ, ພິທີກິນອາຫານເຈ ແລະພິທີກຳອື່ນໆ.*

ກ) ພິທີກຳບູຊາດວງວິນຍານຂອງບັນພະບູລຸດ

ຊາວຈີນໃນສະໄໝບູຮານນິຍົມກາບໄຫວ້ບູຊາດວງວິນຍານຂອງບັນພະບູລຸດ ເພາະຊາວ ຈີນເຊື່ອວ່າ ສິ່ງທັງຫຼາຍທັງປວງມີດວງວິນຍານສະຖິດຢູ່ທັງໝົດ ແລະເຊື່ອວ່າຖ້າລູກຫຼານມີຄວາມ ກະຕັນຍູກາບໄຫວ້ບັນພະບູລຸດແລ້ວ ວິນຍານເຫຼົ່ານັ້ນຈະຕ້ອງດູແລຄຸ້ມຄອງລູກໆຫຼານໆ ຜູ້ທີ່ຍັງມີ ຊີວິດຢູ່ໃຫ້ມີຄວາມຢູ່ເຢັນເປັນສຸກ. ສະນັ້ນຊາວຈີນລັດທິເຕົ່າເອີ້ນວັນນີ້ວ່າ ຈົງຢວນເຈ ( 中元 ), ຊາວຈີນທີ່ນັບຖືພຸດເອີ້ນວັນນີ້ວ່າ ວີ່ຫຼັນເຜີນເຈ. ສ່ວນຊາວບ້ານຈີນເອີ້ນວ່າ ກຸ່ຍເຈ ( ວັນຜີ ). ເຂົາເຈົ້າກຳນົດເອົາວັນທີ 15 ເດືອນ 7 ຂອງທຸກໆປີ ເພື່ອທຳພິທີບູຊາດວງວິນຍານຂອງບັນພະບູ ລຸດ. ສ່ວນຜູ້ຍິງທີ່ແຕ່ງດອງແລ້ວຕ້ອງໄຫວ້ບັນພະບູລຸດຢູ່ບ້ານ, ຖ້າວ່າມີພໍ່ແມ່ຂອງຕົນເສຍຊີວິດ ຈຶ່ງສາມາດກັບມາບ້ານຂອງຕົນເອງ ເພື່ອກາບໄຫວ້ດວງວິນຍານຂອງພໍ່ແມ່ ຫຼືບັນພະບູລຸດ. ໃນ ຮອບປີໜຶ່ງຊາວຈີນຈະມີການໄຫວ້ເຖິງແປດຄັ້ງ. ການໄຫວ້ຄັ້ງທີ່ໃຫຍ່ແມ່ນຄັ້ງທີ 5 ກົງກັບວັນທີ 15 ເດືອນ 7 ເຊິ່ງຖືວ່າເປັນເດືອນຜີ, ເປັນເດືອນທີ່ປະຕູນາລົກເປີດປິດໃຫ້ຜີທັງຫຼາຍມາຮັບກຸສົນ ຜົນບຸນໄດ້.

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

**ເຄື່ອງບູຊາປະກອບດ້ວຍສາມສ່ວນຄື**

+ ເຄື່ອງສຳລັບການບູຊາເຈົ້າທີ່ເຈົ້າຖານ: ຕ້ອງໄດ້ເຮັດພິທີກຳຕອນເຊົ້າ, ເຄື່ອງປະກອບພິທີກຳຈະມີຂອງຫວານເຊັ່ນ: ເຂົ້າໜົມ, ທຽນ,ໝາກໄມ້, ນ້ຳຊາ ຫຼືເຫຼົ້າ ແລະເຈ້ຍເງິນເຈ້ຍຄຳ. ກ່ອນຈະໄຫວ້ຕ້ອງເຜົາເຈ້ຍເຈ້ຍຄຳໃຫ້ໝົດກ່ອນ.

+ ເຄື່ອງສຳລັບບູຊາບັນພະບູລຸດ: ຕ້ອງເຮັດພິທີໃນຕອນສວາຍ, ເຄື່ອງປະກອບມີ: ນ້ຳແກງ, ເຂົ້າໜົມ, ນ້ຳຊາ. ທຸກຢ່າງຕ້ອງກຽມເປັນຊຸດຕາມຈຳນວນບັນພະບູລຸດ. ຖ້າເປັນຄົນມີຖານະກໍນິຍົມໄຫວ້ດ້ວຍເປັດ, ໄກ່, ໝູ, ຕັບແລະປາ ພ້ອມດ້ວຍອາຫານອື່ນໆອີກຕາມທີ່ບັນພະບູລຸດມັກ.

+ ເຄື່ອງສຳລັບບູຊາຜີພະເນຈອນ ( ຜີບໍ່ມີຍາດພີ່ນ້ອງ, ບໍ່ມີລູກຫຼານກາບໄຫວ້) ຈະໄຫວ້ພ້ອມກັບຜີບັນພະບູລຸດກໍໄດ້ ແຕ່ຕອ້ງແຍກໂຕະອອກຈາກກັນ, ສ່ວນເຈ້ຍເງິນເຈ້ຍຄຳຈະຮ່ວມກັນກໍໄດ້. ສຳລັບເຂົ້າໜົມປະກອບໃນການບູຊາຜີພະເນຈອນມີ 5 ຢ່າງເອີ້ນວ່າ: ໂຫງເປັ້ຍ ຫຼືເອີ້ນວ່າເປັນຊຸດໃນພາສາຈີນວ່າ ປັງ ເປັ້ຍ ໝີ່ ມົ່ວ ກີ່.

- ປັງຄືເຂົ້າໜົມປັງທີ່ເຮັດຈາກນ້ຳຕານ
- ເປັ້ຍຄືເຂົ້າໜົມເປັ້ຍທີ່ຄືກັບເຂົ້າໜົມໄຂ່
- ໝີ່ ຄືເຂົ້າໜົມເທົ່າ ເຮັດຈາກແປ້ງເຂົ້າຈ້າວ
- ມົ່ວ ຄືເຂົ້າໜົມທີກກີ່ ເປັນເຂົ້າໜົມພອງສີແດງ ກາງເຄິ່ງມີໄສ້ແຜ່ນບາງ
- ກີ່ ຄືກັບເຂົ້າໜົມທີກກີ່ ເຮັດເປັນທ່ອນກົມຍາວຄ້າຍຄືເຂົ້າຈີ່ ( ຄັດຈາກອິນເຕີເນັດ )

**ຂ) ພິທີປາບຜີປີສາດ**

ສາສະນິກກະຊົນເຕົ່າເຊື່ອວ່າພວກຜີຮ້າຍຕ່າງໆນັ້ນສາມາດຂັບໄລ່ໄດ້ ແລະປ້ອງກັນໄດ້ຖ້າຮູ້ຈັກວິທີເຊັ່ນ: ຖ້າເຂົ້າປ່າກໍຕ້ອງຮ້ອງເພງ ຫຼືຜິວປາກໃຫ້ເປັນສຽງເພງ ເຊື່ອວ່າ ຜີປ່າດົງພົງໄພບໍ່ມັກສຽງເພງ ເມື່ອໄດ້ຍິນສຽງເພງກໍຈະໜີໃຫ້ຫ່າງໄກຄືກັບຍຸງຢ້ານຄວັນ. ຖ້າຢ້ານຜີຍ່າງຕາມຫຼັງເຂົ້າເຮືອນ ພໍຍ່າງມາເຖິງປະຕູເຮືອນໃຫ້ຢຸດຢືນໝູນຕົວຈັກ 2-3 ຮອບກ່ອນແລ້ວຄ່ອຍເຂົ້າເຮືອນເພາະຖ້າມີຜີນຳມາຈະເຮັດໃຫ້ມັນໜ້າມືດຕາລາຍຈົນເຖິງແລ່ນຕຳຮົ້ວ ຫຼືກຳແພງເຮືອນ, ຫຼື ຈະແຕ້ມຮູບປ່າໄມ້ນ້ອຍໃຫຍ່ໄວ້ທີ່ປະຕູເຮືອນ ເມື່ອພວກຜີຮ້າຍຕ່າງໆມາເຫັນກໍຈະເຂົ້າໃຈວ່າ ເປັນປ່າໄມ້ ເຊິ່ງເປັນທີ່ຂອງພວກມັນ ມັນກໍຈະບໍ່ທຳຮ້າຍຜູ້ໃດ ( ອ້າງໃນສາສະໜາປຽບທຽບ 160)

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

**ຄ) ພິທີກິນເຈ**

ປະເພນີກິນເຈແທ້ຈິງແລ້ວເປັນໄລຍະເວລາແຫ່ງການໄຫວ້ທຸກ 10 ມື້ໃຫ້ແກ່ 9 ຄົນ ເຊິ່ງເປັນຊາວຮັ່ນທີ່ໄດ້ເຮັດການປະຕິວັດຕໍ່ຕ້ານກັບພວກແມນຈູ ແຕ່ບໍ່ໄດ້ຜົນສຳເລັດຈຶ່ງຖືກປະຫານຊີວິດ ໂດຍການຕັດຄໍໂຍນຖິ້ມລົງແມ່ນ້ຳ, ຫຼັງຈາກນັ້ນກໍມີພະເຈົ້າມາຮັບວິນຍານໄປ. ຊາວຈີນຈຶ່ງຍົກຍ້ອງຊາຍທັງ 9 ເປັນເຈົ້າແຫ່ງເທດສະການກິນເຈ. ເມື່ອເຖິງເທດສະການກິນເຈຄື ວັນຂຶ້ນ 1 ຄ່ຳ9 ຄ່ຳເດືອນ 9 ຕາມປະຕິທິນຈີນທຸກໆປີຈະມີການກິນເຈ ເພື່ອໄຫວ້ທຸກໃຫ້ບຸກຄົນທັງ 9 ເປັນເວລາ 9 ວັນ 9 ຄືນ ເຊິ່ງຊາວຈີນເຄີຍປະຕິບັດມານານແລ້ວ.

ສະໄໝຕໍ່ມາສາສະນິກະຊົນເຕົ່າໄດ້ປະຕິບັດມີລັກສະນະແຕກຕ່າງໄປຈາກຫຼັກການໃນຄຳພີເຕົ໊າ ເຕັກເກງຄື ມີທັງເຊື່ອຖືໃນເລື່ອງໄສຍະສາດ, ມີທັງປັບປຸງໃຫ້ມີການປະພຶດປະຕິບັດທາງພຸດທະສາສະໜາໂດຍຖືເອົາສິນຫ້າມາເປັນແນວທາງໃນການປະຕິບັດ ແລະມີການບໍລິໂພກອາຫານທີ່ປາສະຈາກຊີ້ນສັດຈະເປັນການໄດ້ບຸນກຸສົນໄປພ້ອມກັນ. ຜູ້ທີ່ຖືເຄັ່ງຄັດອາດປະຕິຍານຕົນປະຈຳຕະຫຼອດຊີວິດ. ຜູ້ທີ່ບໍ່ເຄັ່ງຄັດປານໃດຈະຍົກເວັ້ນແຕ່ມື້ 1 ຄ່ຳຫາມື້ 15 ຄ່ຳ ຕາມປະຕິທິນຈີນ. ການຈະກິນເຈນີ້ ຜູ້ຈະກິນຈະຕ້ອງລ້າງທ້ອງກ່ອນ 3 ວັນ.

ຕາມຕຳນານຊາວຈີນກິນເຈເປັນການບຳເພັນກຸສົນ ເພື່ອລະນຶກເຖິງວິລະຊົນທັງ 9 ເອີ້ນວ່າ "ຫງີທົ່ວທ້ອງ"ເຊິ່ງໄດ້ຕໍ່ສູ້ກັບແມນຈູຢ່າງກ້າຫານ ເຖິງແມ່ນຈະບໍ່ໄດ້ຮັບໄຊຊະນະກໍຕາມແຕ່ຊາວບ້ານໄດ້ພາກັນຖືສິນກິນເຈ ນຸ່ງຂາວຫົ່ມຂາວ ເພາະເຊື່ອວ່າ ການປະຕິບັດແບບນີ້ຈະຊ່ວຍຊຳລະຈິດວິນຍານໃຫ້ເກີດຄວາມເຂັ້ມແຂງທາງຮ່າງກາຍ ແລະຈິດໃຈ.

ບາງຕຳນານເລົ່າວ່າ ເປັນການປະກອບພິທີກຳ ເພື່ອສັກກະລະບູຊາພະພຸດທະເຈົ້າໃນອະດີດ 7 ພະອົງ ແລະພະມະຫາໂພທິສັດອີກ 2 ອົງລວມເປັນ 9 ພະອົງ.

## 8.2 ສາສະໜາຂົງຈື້ ແລະພິທີກຳ

### 1) ສາສະໜາຂົງຈື້ (Comfucianism)

ສາສະໜາຂົງຈື້ເປັນສາສະໜາໜຶ່ງທີ່ມີແຫຼ່ງກຳເນີດໃນຜືນແຜ່ນດິນທີ່ກວ້າງໃຫຍ່ຂອງຈີນ, ມີຊື່ເອີ້ນຕາມສາສະດາ ເພາະສາສະດາຊື່ວ່າ "ຂົງຈື້"(Kung Tze) ສະໄໝທີ່ຂົງຈື້ຍັງມີຊີວິດຢູ່ ບໍ່ໄດ້ນັບຄຳສອນຂອງຂົງຈື້ເປັນສາສະໜາ, ເມື່ອຂົງຈື້ເສຍຊີວິດແລ້ວ ລູກສິດ ແລະຜູ້ສັດທາໃນຄຳສອນຂົງຈື້ໄດ້ພາກັນຍົກຍ້ອງສັນລະເສີນ ປະກອບກັບທາງລາຊະການກໍໄດ້ປະກາດໃຫ້ມີການບູຊາຂົງຈື້. ສະນັ້ນຫຼັກຄຳສອນຂອງຂົງຈື້ຈຶ່ງໄດ້ກາຍເປັນສາສະໜາ ມີຄົນຍອມຮັບ ແລະເຫຼື້ອມໃສຢ່າງຫຼວງຫຼາຍທີ່ສຸດໃນປະເທດຈີນ, ນອກນັ້ນຍັງເຜີຍແຜ່ໄປຍີ່ປຸ່ນ, ເອີຣົບ ແລະອາເມລິກາ ແຕ່ກໍມີຄົນ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

ຈຳນວນໜຶ່ງທີ່ນັບຖືທັງສາສະໜາຂົງຈື້. ສາສະໜາເຕົາ, ສາສະໜາພຸດ ແລະສາສະໜາຊິນໂຕ ປະສົມປະສານກັນໄປ. ສາສະໜາຂົງຈື້ມີຄຳສອນເນັ້ນໜັກໃນເລື່ອງຄວາມໝັ້ນຄົງຂອງສັງຄົມ ແລະການປົກຄອງ ຮວມທັງປະເພນີທີ່ດີງາມ, ຈະເຫັນໄດ້ຈາກຫຼັກຄຳສອນຕ່າງໆທີ່ເປັນຫຼັກກົດໝາຍ ເພື່ອໃຫ້ຜູ້ປົກຄອງ ແລະຜູ້ຢູ່ໃຕ້ປົກຄອງໄດ້ສຳນຶກໃນໜ້າທີ່ຂອງຕົນແລ້ວປະຕິບັດຕາມໜ້າທີ່ນັ້ນໃຫ້ເໝາະສົມ ເພາະສັງຄົມຈະສະຫງົບ ແລະດີໄດ້ ຕ້ອງມີຜູ້ນຳ ແລະຜູ້ຕາມທີ່ດີ.ສ່ວນປະເພນີທີ່ດີງາມຕ່າງໆນັ້ນເປັນສື່ໃນການສ້າງຄວາມສາມັກຄີໃນສັງຄົມໃຫ້ເປັນອັນໜຶ່ງອັນດຽວກັນພ້ອມທັງເປັນການສະແດງເອກະລັກ ແລະຄວາມເປັນອະລິຍະທຳຂອງຊາດຈີນກາຍເປັນມໍລະ ດົກທາງວັດທະນະທຳອີກ.

**2) ພິທີກຳຂອງສາສະໜາຂົງຈື້**

ກ) ພິທີກຳບູຊາ "ທຽນ" ແລະວິນຍານຂອງບັນພະບູລຸດ

ພິທີນີ້ມີຄວາມສຳຄັນທີ່ສຸດຕໍ່ຊາວຈີນ. ເພາະຊາວຈີນເຊື່ອວ່າ "ທຽນ" ນັ້ນເປັນເທບພະເຈົ້າທີ່ປະທັບຢູ່ເທິງສະຫວັນຊັ້ນຟ້າ. "ທຽນ" ແມ່ນຜູ້ເປັນເຈົ້າແຫ່ງເທບທັງຫຼາຍທັງປວງ, ເປັນຜູ້ຄຸ້ມຄອງໂລກເຊັ່ນ: ດວງອາທິດ, ດວງຈັນ, ຟ້າຮ້ອງ, ຟ້າຜ່າ, ພູເຂົາ ແລະແມ່ນ້ຳ. ການໄຫວ້ເທບພະເຈົ້າແມ່ນການຂອບໃຈທີ່ເທບພະເຈົ້າຊ່ວຍຄຸ້ມຄອງດູແລເບິ່ງແຍງໂລກ. ເຄື່ອງປະກອບຈະມີທຽນໜຶ່ງຄູ່, ທູບຫ້າດອກ, ຊາຫ້າຖ້ວຍ, ເຂົ້າໜົມ, ໝາກໄມ້, ເຈ້ຍເງິນເຈ້ຍຄຳ. ຂະນະດຽວກັນພວກເຂົາກໍໃຫ້ຄວາມເຄົາລົບບູຊາດວງວິນຍານຂອງບັນພະບູລຸດ ລວມທັງດວງວິນຍານຂອງຜູ້ບໍລິສຸດ ແລະວິລະຊົນພ້ອມ. ເຂົາເຈົ້າໄປທຳພິທີຢູ່ປ່າຊ້າ ເຊິ່ງເປັນການສະແດງຄວາມກະຕັນຍູຕໍ່ບັນພະບູລຸດ ເຊິ່ງມີອິດທິພົນຈາກລັດທິຂົງຈື້ທີ່ເນັ້ນເລື່ອງຄວາມກະຕັນຍູເປັນສຳຄັນ. ພິທີນີ້ເຂົານິຍົມປະຕິບັດກັນມາຫຼາຍພັນປີແລ້ວ. ເຄື່ອງບູຊາບັນພະບຸລຸດປະກອບມີຊາສາມຖ້ວຍ, ເຫຼົ້າສາມຖ້ວຍ, ທຽນໜຶ່ງຄູ່, ທູບແມ່ນອີງຕາມຈຳນວນບັນພະບຸລຸດທ່ານລະໜຶ່ງດອກ, ເຂົ້າໜົມ, ໝາກໄມ້, ເຈ້ຍເງິນເຈ້ຍຄຳ ແລະອື່ນໆ. ການຈັດວາງເຄື່ອງບູຊາແມ່ນຫ້າມວາງເຄື່ອງບູຊາຊື່ກັບປ້າຍຫີນທີ່ຂຽນຊື່ໄວ້ ເພາະເປັນບ່ອນວິນຍານຂອງບັນພະບຸລຸດອອກ. ພ້ອມນັ້ນເຂົາຈະພາກັນຮ້ອງເພງ, ເປົ່າຂຸ່ຍ ໃນການປະກອບພິທີບູຊາ, ຫຼັງຈາກນັ້ນ ຈິ່ງເຜົາເຈ້ຍເງິນເຈ້ຍຄຳ ເພື່ອເປັນການຂັບໄລ່ສິ່ງບໍ່ດີແລ້ວຈະເຮັດໃຫ້ລູກຫຼານຢູ່ດີກິນດີ ແລະຮັ່ງມີຂຶ້ນເລື້ອຍໆ.

ນິກາຍບໍ່ທັນຊັດເຈນແລະບໍ່ສາມາດກວ່າເປັນນິກາຍໄດ້

ສັນຍາລັກຂອງສາສະໜາຂົງຈື້ໄດ້ແກ່ຮູບຂອງຂົງຈື້ແລະການແຕ່ງໂຕຂອງຈີນບູຮານ ປະສາດມີ ສະແດງຄາລະວະຕໍ່ກັນສັນຍາລັກອີກຢ່າງໜຶ່ງກໍຄືຫຍິນກັບຫຍາງ ອັນສະແດງເຖິງທຳມະຊາດ

ຂອງໂລກຄືມືດກັບສະຫວ່າງ ຄວາມຊົ່ວກັບຄວາມດີ,ຄວາມອ່ອນກັບຄວາມແຂງແຮງ ຫຍິນເປັນສິ່ງທີ່ແທນຄວາມມືດແລະຄວາມຊົ່ວ. ຢາງເປັນສິ່ງທີ່ແທນຄວາມສະຫວ່າງ.

ຫຼັກຄຳສອນຂອງຂົງຈື້

ເອົາສິນທຳເປັນສູນກາງ, ສາຍສຳພັນທັງ5, ຄຳດຽວສັ້ນໆແຕ່ມີຄວາມໝາຍ "ຊູ"

**ຂ) ພິທີບູຊາຟ້າດິນ, ພະຈັນ ແລະດວງອາທິດ**

ໃນປີໜຶ່ງຈະມີພິທີບູຊາ 4 ຄັ້ງ ເປັນການບູຊາຟ້າຄັ້ງໜຶ່ງ, ບູຊາດິນຄັ້ງໜຶ່ງ, ບູຊາພະອາທິດຄັ້ງໜຶ່ງ ແລະບູຊາພະຈັນຄັ້ງໜຶ່ງ ເຊິ່ງຈະເຮັດໃນສີ່ລະດູຕາມສີ່ທິດຂອງນະຄອນປັກກິ່ງ. ການບູຊາທຳມະຊາດທັງສີ່ນີ້ຈະເຮັດໃນເວລາຕ່າງກັນ ແລະສະຖານທີ່ຕ່າງກັນ, ຄັ້ງທີ່ສຳຄັນທີ່ສຸດຄືການບູຊາຟ້າ ເຊິ່ງໄດ້ກຳນົດໄວ້ໃນວັນທີ 22 ທັນວາ, ພະເຈົ້າຈັກກະພັດຈີນຈະເປັນປະທານໃນພິທີ. ໃນພິທີບູຊາຟ້າຈະມີດົນຕີ, ແຫ່ໂຄມໄຟ. ເຄື່ອງບູຊາຈະມີ ອາຫານ, ຜ້າໄໝ,ເຫຼົ້າ. ສະຖານທີ່ບູຊາຟ້າຕັ້ງຢູ່ທິດໃຕ້ຂອງນະຄອນປັກກິ່ງ. ການບູຊາທຳມະຊາດທັງສີ່ຢ່າງນີ້ແມ່ນມີມາແຕ່ດົນນານແລ້ວ. ພົມາຮອດສະໄໝຂົງຈື້, ຂົງຈື້ຈຶ່ງໄດ້ເປັນຜູ້ຮຽບຮຽງເອກະສານໄວ້. ເມື່ອເປັນແນວນັ້ນກໍເລີຍກາຍເປັນສ່ວນໜຶ່ງຂອງສາສະໜາຂົງຈື້. ການປະກອບພິທີນີ້ຖືວ່າ ເປັນການປະຕິບັດຕາມໜ້າທາງລາຊະການໂດຍກົງ. ປັດຈຸບັນນີ້ຍັງມີຢູ່ ແຕ່ບໍ່ໄດ້ເຮັດເປັນທາງການແບບຍິ່ງໃຫຍ່ຄືໃນອະດີດ (ອ້າງໃນສາສະໜາປຽບທຽບ, ໜ້າ 161 )

8.3. ບຸນປະເພນີຂອງຈີນ

1) ບຸນກຸດຈີນ (ປີໃໝ່)

ວັນກຸດຈີນເປັນວັນຂຶ້ນປີໃໝ່ຂອງຈີນ,ອີງຕາມປະຕິທິນຂອງຈີນຄື ວັນທີ 1 [illegible] 1 ເປັນວັນເລີ່ມຕົ້ນຂອງປີ ແລະເປັນມື້ທຳອິດໃນລະດູໃບໄມ້ປົ່ງ. ໃນວັນກຸດຈີນນີ້ປະ[illegible]ຊຸມຈີນຈະຊື້ເຂົ້າຂອງ ແລະອາຫານກະກຽມໄວ້, ເຂົາເຈົ້າຈະພາກັນອະນາໄມເຮືອນ, ປະດັບປະດາປະຕູ, ປ່ອງຢ້ຽມດ້ວຍແສງສີຕ່າງໆ ໂດຍໃຊ້ສີແດງ ເຊິ່ງເປັນສີທີ່ຊາວຈີນເຊື່ອວ່າເປັນສີລີມຸງຄຸນ ແລະມີຄຳອວຍພອນໃຫ້ມີຄວາມຢູ່ດີມີສຸກ ແລະອາຍຸຍືນຍາວ. ປະເພນີນີ້ຍັງມີການແຈກອັ່ງເປົາ. ການສະຫຼອງບຸນກຸດຈີນຈະມີຄວາມແຕກຕ່າງກັນອອກໄປ, ແຕ່ສິ່ງທີ່ຄ້າຍຄືກັນຄື ການອວຍພອນເຊິ່ງກັນແລະກັນໃຫ້ມີຄວາມສຸກຄວາມຈະເລີນ

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

**2) ປະເພນີຊ່ວງເຮືອ ( ຕວນຫວູເຈ່ )**

ປະເພນີບຸນຊ່ວງເຮືອນີ້ ຊາວຈີນໄດ້ພາກັນສະຫຼອງຢ່າງຍິ່ງໃຫຍ່ ເພື່ອເປັນການລະນຶກເຖິງ ຊູຢວນ ນັກກະວີຜູ້ຮັກຊາດທີ່ໄດ້ໂດດນໍ້າຕາຍ.ທາງລັດຖະບານຈີນຍັງໄດ້ກຳນົດເອົາວັນທີ 5 ເດືອນ 5 ເປັນວັນກະວີຈີນອີກດ້ວຍ. ເມື່ອຮອດວັນທີ 5 ເດືອນ 5 ໃນບໍລິເວນແມ່ນໍ້າຢາງຊີກຽງ ໄດ້ພາກັນຈັດສະຫຼອງແຂ່ງເຮືອມັງກອນ. ນອກຈາກຊາວຈີນແລ້ວ ຍັງມີຊາວຮ່ອງກົງ, ໄຕ້ຫວັນ, ມາກ້າວກໍມີການແຂ່ງເຮືອກັນຢ່າງຍິ່ງໃຫຍ່ເຊັ່ນກັນ.

**3) ບຸນໄຫວ້ພະຈັນ**

ມື້ຂຶ້ນ 15 ຄໍ່າ ເດືອນ 8 ຕາມປະຕິທິນຂອງຈີນທຸກໆປີ ຊາວຈີນຈະພາກັນຈັດສະຫຼອງ ເພື່ອເປັນການລະນຶກເຖິງ ການປົດປ່ອຍຊາດອອກຈາກການປົກຄອງຂອງພວກມົງໂກນ. ເຄື່ອງໄຫວ້ພະຈັນຈະມີເຂົ້າໜົມໄຫວ້ພະຈັນ, ມີຕົ້ນອ້ອຍ, ໂຄມໄຟ ເພື່ອໄຫວ້ເຈົ້າແມ່ກວນອີມ.

**4) ປະເພນີປີນຂຶ້ນພູເຂົາ ( ຖົງຢາງ )**

ປະເພນີນີ້ກົງກັບວັນທີ 9 ເດືອນ 9 ຕາມປະຕິທິນຂອງຈີນ, ທຸກໆປີເມື່ອຮອດວັນດັ່ງກ່າວ ຊາວຈີນທີ່ດຳລົງຊີວິດບອນທີ່ມີພູສູງຈະໄດ້ແຂ່ງກັນຂຶ້ນພູເຂົາ, ສ່ວນຜູ້ທີ່ຢູ່ບ່ອນຮາບພຽງ ບໍ່ມີພູກໍຈະພາກັນກິນເຂົ້າໜົມແທນການຂຶ້ນພູເຂົາ. ຊາວຈີນເຊື່ອວ່າປະເພນີນີ້ເປັນປະເພນີທີ່ເຮັດໃຫ້ອາຍຸໝັ້ນຂວັນຍືນ ( ອ້າງໃນສາສະໜາປຽບທຽບ)

ຄຳຖາມ 1 ປັດຊະຍາຂົງຈື້ມີເນື້ອໃນຕໍ່ການດຳລົງຊີວິດຂອງຊາວຈີນຄື ແນວໃດ?

2 ຈົ່ງອະທິບາຍບູຊາຟ້າດິນຂອງຂົງຈື້ມີຈຸດປະສົງຫຍັງ?

ຮຽບຮຽງໂດຍ: ອຈ ບຸນໜັກ ພະລະຄອນ

## ເອກະສານອ້າງອີງ


1. *ສາສະໜາປຽບທຽບ*, ຮສ ຄູນ ໂທຂັນ, ຄະນະມະນຸດສາດ ແລະສັງຄົມສາດ ມະຫາວິທະຍາໄລຂອນແກນ, ພສ 2537
2. *ສັງຄົມ ແລະວັດທະນະທຳ*, ພາກວິຊາສັງຄົມວິທະຍາ ແລະມະນຸດວິທະຍາ ຄະນະ ລັດຖະສາດ ຈຸລາລົງກອນມະຫາວິທະຍາໄລ, ພສ 2534
3. ວັດທະນະທຳອາຊີ, ຜສ ວັນນາ ວຸດທະກຸນ ພ້ອມຄະນະ, ພສ 2546
4. *ອາລະຍະທຳໂລກ HI 103*, ພາກວິຊາປະຫວັດສາດ ຄະນະມະນຸດສາດ ມະຫາວິທະຍາໄລລາມຄຳແຫງ 2546
5. *ມໍລະດົກອາລະຍະທຳໂລກ*, ຄະນະກຳມະການວິຊາມໍລະດົກອາລະຍະທຳໂລກ ສູນວິຊາ ບູລະນາການ ໝວດວິຊາສຶກສາທົ່ວໄປ ມະຫາວິທະຍາໄລກະເສດສາດ, ພສ 2553
6. *ປັດຊະຍາຕາເວັນອອກ*, ຜສ. ດຣ ທອງຫຼໍ່ ວົງທັນມາ, ພສ 2536
7. *ອາລະຍະທຳອິນເດຍ*, ດຣ ຈະຣັດ ພະຍັກຄະລາຊະສັກ, ພາກວິຊາປະຫວັດສາດ ຄະນະ ສັງຄົມສາດ ມະຫາວິທະຍາໄລສີຄະຣິນວິໂຣດ ມະຫາສາລະຄາມ
8. *ອິດທິພົນຂອງວັດທະນະທຳອິນເດຍໃນອາຊີອາຄະເນ*, ຮສ ສິລິວັດ ຄຳວັນສາ, ພສ 2527
9. *ປະຫວັດວັດທະນະທຳຈີນ*, ນາຍລ້ຽງ ສະຖຽນສຸດ, ພສ 2512
10. *ປະຫວັດອາລະຍະທຳຈີນ*, ເພດຊະຣີ ສຸມິດ, ພສ 2518
11. *ອາລະຍະທຳສະໄໝບູຮານ-ສະໄໝກາງ*, ຄະນະອັກສອນສາດ ຈຸລາລົງກອນມະຫາ ວິທະຍາໄລ, ພສ 2540


